ບັນດາມູນຣາກ ທີ່ມີຊີວິດຊີວາ ຂອງ ລັດທິມາກ

# "ລະບອບ ການສະຫະກອນ ທີ່ສີວິໄລນັ້ນ - ແມ່ນ ລະບອບ ສັງຄົມນິຍົມ"



# "ລະບອບ ການສະຫະກອນ ທີ່ສີວິໄລນັ້ນ - ແມ່ນ ລະບອບ ສັງຄົມນິຍົມ"

---

ກ່ຽວກັບລັກສະນະຫນັກແຫນ້ນ ທາງດ້ານ

ປະຫວັດສາດຂອງສະຫະກອນ

ແປໂດຍ: ນ.ອຸລິນາ

ກວດກາໂດຍ: ສ.ຈະນະພານ

СТРОЙ ЦИВИЛИЗОВАННЫХ КООПЕРАТОРОВ —
ЕСТЬ СТРОЙ СОЦИАЛИЗМА

Серия: Живые формулы марксизма

*на лаосском языке*

Цена 25 к.

0302000000
©ສຳນັກງານຂ່າວສານ ໂນໂວສະຕິ,1989
ກວດແລ້ວ 7.07.88

" ... ລະບອບສັງຄົມນິຍົມນັ້ນກໍຄືລະບອບຂອງບັນດາສະມາຊິກສະຫະກອນທີ່ສີວິໄລ, ໃນເມື່ອກຳມະສິດຕໍ່ພາຫະນະການຜະລິດເປັນຂອງຮວມຫມູ່, ໃນເມື່ອຊົນຊັ້ນກຳມາຊີບໄດ້ຮັບໄຊຊະນະທາງດ້ານຊົນຊັ້ນຕໍ່ຊົນຊັ້ນນາຍທຶນ".

(ວ.ອ.ເລນິນ)

ຄຳເວົ້າຂອງ ວ.ອ.ເລນິນທີ່ໄດ້ຄັດເອົາມາເພື່ອພາດຫົວເລື່ອງໃຫ້ແກ່ປຶ້ມນ້ອຍຫົວນີ້ນັ້ນ ເວົ້າໄດ້ວ່າ ແມ່ນສູດຊຶ່ງເປັນຜົນມາຈາກການຄົ້ນຄິດຂອງເພິ່ນເປັນເວລາຫລາຍປີ ກ່ຽວກັບການປະຕິບັດຕົວຈິງ ທາງດ້ານປະຫວັດສາດຂອງຂະບວນການສະຫະກອນ ຢູ່ໃນປະເທດລັດເຊຍ (ແລະຄວາມຈິງແລ້ວກໍບໍ່ແມ່ນພຽງແຕ່ຢູ່ໃນປະເທດລັດເຊຍ), ກ່ຽວກັບຄວາມອາດສາມາດບົ່ມຊ້ອນຂອງຂະບວນການດັ່ງກ່າວ ເຊິ່ງໃນເວລານັ້ນມັນຍັງເປັນສິ່ງທີ່ບໍ່ຈະແຈ້ງສຳລັບບັນດານັກທິດສະດີມາກຫລາຍໆຄົນ, ແລະກ່ຽວກັບທິດທາງແຫ່ງການຂະຫຍາຍຮູບແບບການຜະລິດແບບສະຫະກອນໃນອະນາຄົດ. ຄຳເວົ້າຂອງເລນິນທີ່ວ່ານັ້ນ ແມ່ນໄດ້ຂຽນໄວ້ຕັ້ງແຕ່ວັນທີ ໔ ມັງກອນປີ ໑໙໒໓ ພຸ້ນ. ນັ້ນແມ່ນໄລຍະ(ແຕ່ເດືອນມັງກອນເຖິງເດືອນມີນາ), ເຊິ່ງເປັນເວລາທີ່ເລນິນພວມຂຽນບົດຕ່າງໆທີ່ເປັນບົດສຸດທ້າຍຂອງຕົນຄື: ບົດ"ຈາກໜ້າເຈ້ຍຂອງບັນທຶກປະຈຳວັນ", "ກ່ຽວກັບການປະຕິວັດຂອງພວກເຮົາ", "ພວກເຮົາຈະຈັດຕັ້ງຣາບກຣິນ* ຄືນໃໝ່ແນວ

* ອົງການກວດກາຂອງກຳມະກອນ-ຊາວນາ(ຣາບກຣິນ)ນັ້ນ ຄືອົງການກວດກາແຫ່ງລັດແຕ່ປີ ໑໙໒໐ ເຖິງປີ ໑໙໓໔; ຕັ້ງແຕ່ປີ ໑໙໒໓ ອົງການດັ່ງກ່າວໄດ້ເຄື່ອນໄຫວຮ່ວມກັນກັບອົງການຂອງພັກຄືຄະນະກຳມະການກວດກາສູນກາງ.
ໜ້າທີ່ຕົ້ນຕໍຂອງອົງການກວດກາຂອງກຳມະກອນ-ຊາວນາ ແລະຄະນະກຳມະ

ໃດ", "ດີກວ່າເກົ່າຫນ້ອຍກວ່າເກົ່າ, ແມ່ນແລ້ວດີກວ່າເກົ່າ". ສູດທີ່ພວກເຮົາໄດ້ເວົ້າເຖິງນັ້ນ ແມ່ນເອົາອອກມາຈາກບົດ "ກ່ຽວກັບສະຫະກອນ" ເຊິ່ງເປັນບົດທີ່ນອນຢູ່ໃນຊຸດບົດຕ່າງໆເຫົ່ງນັ້ນ; ສູດດັ່ງກ່າວໄດ້ສະແດງໃຫ້ເຫັນເຖິງວິວັດທະນາການແຫ່ງການຕີລາຄາຂອງເລນິນເອງ ໂດຍອອກຈາກທັດສະນະທີ່ຖືວ່າ ວິສາຫະກິດແບບສະຫະກອນເປັນພາກສ່ວນຫນຶ່ງທີ່ຕັດຂາດອອກບໍ່ໄດ້ ຂອງລະບອບທຶນນິຍົມ (ຕັ້ງແຕ່ເດືອນມີນາປີ ໑໙໒໑ ພຸ້ນ ເລນິນໄດ້ເວົ້າວ່າ: "ສະຫະກອນຂອງຜູ້ຜະລິດສິນຄ້ານ້ອຍ... ບໍ່ອາດຈະຫລີກລ່ຽງຈາກການໃຫ້ກຳເນີດການພົວພັນແບບນາຍທຶນນ້ອຍແລະແບບທຶນນິຍົມ, ບໍ່ອາດຈະຫລີກລ່ຽງຈາກການຊ່ວຍຊູໃຫ້ການພົວພັນຕ່າງໆດັ່ງກ່າວຂະຫຍາຍຕົວ, ຈາກການຍົກສູງພວກ ນາຍທຶນ, ໃຫ້ພວກເຂົາໄດ້ຮັບຜົນກຳໄລຫລາຍກວ່າຫມູ່..."[໑] ມາເປັນທັດສະນະທີ່ຖືວ່າ ວິສາຫະກິດແບບສະຫະກອນນັ້ນກໍແມ່ນວິສາຫະກິດສັງຄົມນິຍົມຄືກັນ.

ແຕ່ວ່າກ່ອນທີ່ຈະເຂົ້າໄປສູ່ການຄົ້ນຄວ້າເຖິງທີ່ຕັ້ງແລະບົດບາດຂອງວິສາຫະກິດແບບສະຫະກອນຢູ່ໃນການຂະຫຍາຍຕົວຂອງເສດຖະກິດແຫ່ງຊາດ, ແລະຍິ່ງໄປກວ່ານັ້ນແມ່ນທີ່ຕັ້ງແລະບົດບາດຂອງວິສາຫະກິດດັ່ງກ່າວຢູ່ໃນ ການຂະຫຍາຍຕົວຂອງສັງຄົມສັງຄົມນິຍົມເວົ້າລວມນັ້ນ, ພວກເຮົາຂໍລົ້ມຄືນເຖິງ ລັກ

ການກວດກາສູນກາງນັ້ນກໍຄື: ກວດກາທຸກຂົງເຂດເສດຖະກິດແລະການຄຸ້ມຄອງລັດ, ສອດສ່ອງການນຳເອົາກົດຫມາຍໂຊວຽດອອກຫມູນໃຊ້ໃນຕົວຈິງແລະຄົ້ນຄວ້າຄຳຮ້ອງທຸກແລະຄຳຮ້ອງຂໍຂອງຊາວຜູ້ອອກແຮງງານ ຢ່າງທັນການ; ຕໍ່ສູ້ຕ້ານກັບລັດທິອາດຍາສິດ.

໑) ວ.ອ.ເລນິນ, ປະມວນນິພົນຄົບຊຸດ, ເຫລັ້ມ ໔໓, ຫນ້າ ໒໒໕.

ສະນະລວມກ່ຽວກັບສະຫະກອນຄືດັ່ງນີ້:

ສະຫະກອນນັ້ນແມ່ນສັງລວມແຫ່ງສຳພັນການຊ່ວຍເຫລືອຊຶ່ງກັນແລະກັນ ທີ່ມີການຈັດຕັ້ງຢ່າງເປັນທາງການ ແລະຢ່າງສະໝັກໃຈຂອງຊາວກຳມະກອນ,ຊ້າລັດຖະກອນ,ຜູ້ຜະລິດນ້ອຍ,ໃນນັ້ນລວມທັງຊາວນາ, ເພື່ອບັນລຸເປົ້າໝາຍລວມຢູ່ໃນຂົງເຂດຕ່າງໆ ຂອງການເຄື່ອນໄຫວດ້ານເສດຖະກິດ.* ກໍ່ສ້າງສະຫະກອນບົນຫລັກການເຂົ້າຮວມແບບມີຫຸ້ນສ່ວນ, ເຊິ່ງຕາມທັດສະນະຂອງການຈັດຕັ້ງແຮງງານນັ້ນແລ້ວ ຮູບແບບຂອງມັນກໍມີລັກສະນະທົ່ວາຢູ່ໃນນັ້ນມີຄົນຈຳນວນຫລາຍສົມຄວນທີ່ເຂົ້າຮ່ວມກັນໃນຂະບວນວິວັດແຫ່ງການອອກແຮງງານໜຶ່ງຫລືວ່າຕ່າງກັນ ແຕ່ພົວພັນກັນຢ່າງສະໜິດແໜ້ນ.

ແລະບາດນີ້ ພວກເຮົາເຂົ້າໄປສູ່ຫົວເລື່ອງຂອງພວກເຮົາ.

## ວິວັດທະນາການຂອງການຕີລາຄາແບບ

## ລັດທິມາກ

ດັ່ງນັ້ນ(ຈັ່ງຊັ້ນ)ອີກເທື່ອໜຶ່ງພວກເຮົາຂໍເນັ້ນວ່າ: ຢູ່ໃນລັດທິມາກນັ້ນແນວຄິດກ່ຽວກັບສະຫະກອນແມ່ນບໍ່ໄດ້ຖືກຮັບຮູ້ໃນທັນໃດໂລດ. ສູດຂອງເລນິນທີ່ເອົາຄວາມສຳນຶກກ່ຽວກັບສັງຄົມນິຍົມມາເຂົ້າກັນກັບຄວາມສຳນຶກກ່ຽວກັບສະຫະກອນນັ້ນ ແມ່ນຜົນຂອງການຂະຫຍາຍຕົວເປັນເວລາຍາວນານ ຂອງຄວາມສຳນຶກທາງດ້ານທິດສະດີລວມກ່ຽວກັບລະບອບກອມມູນິດ.

---

* ມີຫລາຍຮູບແບບສະຫະກອນ. ໃນນີ້ພວກເຮົາຂໍຍົກມາເວົ້າແຕ່ພຽງສາມຮູບແບບສະຫະກອນດັ່ງນີ້: ກ) ສະຫະກອນການຜະລິດ. ຢູ່ໃນກະສິກຳນັ້ນ ແມ່ນການໄຖຄາດນາຮ່ວມກັນ,ການນຳໃຊ້ເຄື່ອງຈັກ,ການຜະລິດຜະລິດຕະພັນດ້ານ

ກາກມາກ ແລະ ຟຣີດຣິກ ອັງແກນ ໄດ້ເຄີຍຕຳນິແນວຄວາມ ຄິດ ກ່ຽວກັບສະຫະກອນໃນໄລຍະທຳອິດຂອງການເຄື່ອນໄຫວດ້ານທິດສະດີຂອງຕົນ (ທ້າຍຊຸມປີ ໔໐ ເລີ່ມຊຸມປີ ໕໐ ຂອງສັດຕະວັດກ່ອນເຊິ່ງແມ່ນໄລຍະ ເວລາ ຂອງການຂຽນແລະເຜີຍແຜ່ "ປະກາດຖະແຫລງການພັກກອມມູນິດ"). ທັງນີ້ ກໍຍ້ອນວ່າຈິດໃຈຂອງຂະບວນການສະຫະກອນທີ່ມີລັກສະນະປະຕິຮູບຢ່າງ ຈະ ແຈ້ງ ໃນສະໄຫມນັ້ນໄດ້ເຮັດໃຫ້ກາກມາກແລະອັງແກນບໍ່ຊຸ່ມຊື່ນໃຈໄດ້, ເຊິ່ງ ຂະບວນການສະຫະກອນໃນເວລານັ້ນຫວັງວ່າຈະ "ກັບກາຍເອົາ"ລະບອບທຶນ ນິຍົມໃຫ້ເປັນລະບອບສັງຄົມນິຍົມເທື່ອລະກ້າວຢ່າງສັນຕິໂດຍອາໄສ"ການເອົາ ເປັນສະຫະກອນທົ່ວທັງຫມົດ" ຊາວຜູ້ອອກແຮງງານ. ຄວາມພະຍາຍາມຂອງ ບັນດາສະມາຊິກສະຫະກອນໃນສະໄຫມນັ້ນທີ່ຢາກຂ້າມຜ່ານລະບອບທຶນນິຍົມ ດ້ວຍການຈັດຕັ້ງສະມາຄົມຜູ້ໃຊ້ສອຍ, ຕະຫລາດຂອງກຳມະກອນແລະອື່ນໆ ນັ້ນ ເບິ່ງແລ້ວແມ່ນມີລັກສະນະຮູ້ເທົ່າບໍ່ເຖິງການ. ອີກສິ່ງຫນຶ່ງທີ່ມີຜົນສະທ້ອນນັ້ນກໍ ຄືຄວາມເຊື່ອຫມັ້ນໃນເວລານັ້ນ ຂອງບັນດາຜູ້ທີ່ໃຫ້ກຳເນີດລັດທິມາກ ກ່ຽວກັບ ຄວາມອາດສາມາດຜ່ານຂ້າມແບບປະຕິວັດໂດຍກົງຈາກລະບອບທຶນນິຍົມ ໄປສູ່

ການກະເສດ. ບົນພື້ນຖານຂອງພາຫະນະການຜະລິດທີ່ເປັນຂອງສ່ວນ ລວມໃນບາງພາກສ່ວນຫລືເປັນຂອງສ່ວນລວມທັງຫມົດ ແລະບົນພື້ນຖານ ຂອງ ການອອກແຮງງານແບບລວມຫມູ່. ຢູ່ ສສສຊ ນັ້ນ, ຮູບແບບສະຫະກອນ ການ ຜະລິດຢູ່ໃນກະສິກຳນັ້ນແມ່ນໄດ້ຮັບການຢັ້ງຢືນເປັນພິເສດ ຢູ່ໃນຮູບແບບທີສອງຄື ຮູບແບບ ໂກນໂຄ; ສ່ວນສະຫະກອນການຜະລິດຢູ່ໃນອຸດສາຫະກຳນັ້ນແມ່ນສະຫະ ກອນຂອງກຳມະກອນ (ສະຫະກອນອຸດສາຫະກຳ) ແລະສະຫະກອນຊ່າງຫັດ ຖະ ກຳ (ສະຫະກອນຫັດຖະກຳ), ສະຫະກອນຫັດຖະກຳນີ້ລວມເອົາຜູ້ຜະລິດ ສິນຄ້າ ນ້ອຍເພື່ອຮ່ວມກັນຜະລິດຜະລິດຕະພັນແລະຮັບໃຊ້. ໒) ສະຫະກອນກະເສດ

ລະບອບກອນມູນິດໂດຍບໍ່ຕ້ອງມີໄລຍະລະຫວ່າງກາງໃດໆເລີຍ; ໃນເວລານັ້ນ ພວກເພິ່ນຄິດວ່າ ບໍ່ມີຄວາມຈຳເປັນຕ້ອງໄປຫຍຸ້ງນຳວຽກງານຂອງສະຫະກອນ (ເຊັ່ນການຮັບປະກັນດ້ານການເງິນດ້ວຍຕົນເອງ, ການຖົມຂຸມ ດ້ວຍຕົນເອງ ແລະອື່ນໆ) ຢູ່ໃນສັງຄົມທີ່ທຸກສິ່ງທຸກຢ່າງຈະໄດ້ຕາມຄວາມຕ້ອງການນັ້ນ.

ແຕ່ວ່າ ເລີ່ມຕັ້ງແຕ່ຊຸມປີຫົກສິບ, ມາກແລະອັງແກລໄດ້ຄ່ອຍໆປ່ຽນແປງທ່າທີຂອງຕົນໃນເມື່ອກ່ອນທີ່ມີຕໍ່ສະຫະກອນ. ພວກເພິ່ນໄດ້ເລີ່ມ ສັງເກດດ້ວຍຄວາມສົນໃຈຫລາຍຂຶ້ນ ກ່ຽວກັບບົດຮຽນໃນເມື່ອກ່ອນຂອງສຳພັນ ສະຫະກອນຂອງກຳມະກອນ ໂດຍສະເພາະໂຮງງານທີ່ໄດ້ສ້າງຂຶ້ນໃນໄລຍະປີທຳອິດຫລັງຈາກການປະຕິວັດປະຊາທິປະໄຕທຶນນິຍົມ ຢູ່ເອີຣົບ (ປີ ໑໘໔໘-໑໘໔໙) ແລະພວກເພິ່ນໄດ້ສັງເກດເຫັນວ່າ ບັນດາກຳມະກອນຢູ່ໃນໂຮງງານ ຕ່າງ ໆ ເຫລົ່ານັ້ນໄດ້ບັນລຸໝາກຜົນທາງດ້ານເສດຖະກິດສູງຢູ່ໃນເຫລັ້ມທີສອງ "<u>ທຶນ</u>-"<u>ກາປີຕານ</u>"ນັ້ນ, ມາກໄດ້ມີບາງບ່ອນທີ່ໄດ້ເນັ້ນເຖິງຄວາມຈິງທີ່ວ່າ ປົກກະຕິແລ້ວ ວິສາຫະກິດແບບສະຫະກອນຂອງກຳມະກອນນັ້ນ " <u>ໄດ້ນຳຜົນກຳໄລມາໃຫ້ສູງກວ່າຈຳນວນຜົນກຳໄລປານກາງ</u> " ໑) ປີ ໑໘໖໔, ຢູ່ໃນເອກະສານທີ່

---

ຮວມເອົາຜູ້ຜະລິດຜະລິດຕະພັນກະເສດ ເພື່ອຮ່ວມກັນຜະລິດຜະລິດຕະພັນຫລືວ່າເພື່ອການເຄື່ອນໄຫວແບບອື່ນໆ (ເຊັ່ນການປຸງແຕ່ງ, ການຮັບ ຈຳໜ່າຍຜະລິດຕະພັນ, ການສະໜອງພາຫະນະການຜະລິດ, ການຮັບໃຊ້ ທາງດ້ານວັດຖຸເຕັກນິກແລະອື່ນໆ). ຄ) <u>ສະຫະກອນໃຊ້ສອຍ</u>. ແມ່ນຮວມເອົາຜູ້ໃຊ້ສອຍທັງຫລາຍເພື່ອຮ່ວມກັນທຳການຊື້, ທຳການຜະລິດແລະຂາຍສິນຄ້າ ຊະນິດຕ່າງໆ. ດຳເນີນການຄ້າຢູ່ຊົນນະບົດ, ຜະລິດວັດຖຸດິບດ້ານການກະເສດ ແລະຜະລິດຕະພັນ, ທຳການຜະລິດສິນຄ້າໃຊ້ສອຍນອນຊົນຈຳນວນໜຶ່ງ. - ບ.ກ.

໑) ກ.ມາກ, ອັງແກລ ຟ. ນິພົນ, ເຫລັ້ມ ໒໖, ພາກ ໓, ໜ້າ ໓໖໘.

ຮັບຮອງເອົາໃນເວລາທີ່ສ້າງຕັ້ງແອັງແຕກນາໂຊນນານ * ຄື "ປະກາດຖະແຫລງກ່ຽວກັບການສ້າງຕັ້ງສະມາຄົມກຳມະກອນສາກົນ" ເຊິ່ງໄດ້ຮັບການຮ່າງຂຶ້ນໂດຍມີການປະກອບສ່ວນຂອງມາກແລະອັງແກນນັ້ນ, ໄດ້ມີການຕີລາຄາການຂະຫຍາຍຕົວຂອງກຳມະກອນໃນສະຫະກອນ- ໂຮງງານຕ່າງໆນັ້ນເປັນຄືຫນຶ່ງໃນບັນດາຜົນສຳເລັດຕົ້ນຕໍທາງດ້ານສັງຄົມຂອງຊົນຊັ້ນກຳມາຊີບໃນໄລຍະ ສິບຫ້າປີກ່ອນຜ່ານມາ. "ຄວາມຫມາຍຂອງບົດຮຽນທາງດ້ານສັງຄົມທີ່ຍິ່ງໃຫຍ່ດັ່ງກ່າວ, ເຊິ່ງໄດ້ເວົ້າເຖິງຢູ່ໃນເອກະສານນັ້ນແມ່ນບໍ່ອາດຕີລາຄາຄືນໃຫມ່ໄດ້. ໂຮງງານແບບສະຫະກອນທີ່ເກີດຂຶ້ນຢູ່ໃນເງື່ອນໄຂຂອງສັງຄົມນາຍທຶນນັ້ນ ໄດ້ຢັ້ງຢືນໃຫ້ເຫັນວ່າ ມັນບໍ່ມີຄວາມຕ້ອງການພວກນາຍທຶນ. ພາຍຫລັງການປະຕິວັດທີ່ຈະມາເຖິງ, <u>ພາຍຫລັງທີ່ຊົນຊັ້ນກຳມາຊີບຍຶດເອົາອຳນາດທາງດ້ານ ການເມືອງມາໄດ້ແລ້ວ</u>(ຂີດຫມາຍຂອງພວກເຮົາ), ໂຮງງານແບບສະຫະກອນ ນັ້ນອາດໄດ້ຮັບການນຳໃຊ້ເພື່ອຈັດຕັ້ງການຜະລິດແບບສະຫະກອນຂອງທົ່ວປວງຊົນ". ເບິ່ງຢູ່ໃນ"ຫລັກທິດສະດີມາກເລນິນກ່ຽວກັບລະບອບສັງຄົມນິຍົມ ແລະຍຸກສະໄຫມ". ມົດສະກູ, ໑໙໗໔, ຫນ້າ ໓໘-໓໓. ໃນເວລາທີ່ມາກແລະ ອັງແກນພະຍາຍາມສະເຫນີໃຫ້ເຫັນເຖິງເງື່ອນໄຂທາງດ້ານເສດຖະກິດ ຕົວຈິງແຫ່ງການຫັນໄປສູ່ການຜະລິດແບບລວມຫມູ່ຍິ່ງເລິກເຊິ່ງແລະຍິ່ງລະອຽດ ເທົ່າ

---

* <u>ແອັງແຕກນາໂຊນນານ ໑</u> (ສະມາຄົມສາກົນຂອງກຳມະກອນ) ແມ່ນ ອົງການຈັດຕັ້ງສາກົນທຳອິດຂອງຊາວກຳມາຊີບ(໑໘໖໔-໑໘໗໖). ລາຍລະອຽດກ່ຽວກັບການເຄື່ອນໄຫວຂອງສະມາຄົມດັ່ງກ່າວແມ່ນໃຫ້ເບິ່ງ ຢູ່ໃນປຶ້ມນ້ອຍ "<u>ຊາວກຳມາຊີບທຸກປະເທດຈົ່ງສຳພັນກັນເຂົ້າ !</u> ", ກໍຄືຢູ່ໃນປຶ້ມຊຸດ "<u>ສູດທີ່ມີຊີວິດຊີວາຂອງລັດທິມາກ</u>" - ບ.ກ.

ໃດ, ພວກເພິ່ນກໍ່ຍິ່ງເວົ້າເຖິງສະຫະກອນເລື້ອຍຂຶ້ນເທົ່ານັ້ນ. ຢູ່ໃນບົດຄວາມ "ບັນຫາຊາວນາຢູ່ຝະລັ່ງແລະເຢຍລະມັນ" (ປີ ໑໘໙໔) ນັ້ນ, ອັງແກນໄດ້ວາງທັດສະນະຫລັກຫມັ້ນອອກຢ່າງລະອຽດສົມຄວນ ກ່ຽວກັບເສັ້ນທາງຕ່າງໆ ຂອງການນຳເອົາການຜະລິດກະສິກຳມາເປັນແບບສ່ວນລວມ, ເຊິ່ງໄປຄຽງຄູ່ ກັບການນຳເອົາການຜະລິດນ້ອຍມາເປັນການຜະລິດແບບສະຫະກອນນັ້ນ, ໄດ້ຄຳນຶງເຖິງການຍຶດເອົາທີ່ດິນຂອງພວກເຈົ້າທີ່ດິນໃຫຍ່ມາເປັນຂອງລັດ, ແລະ ສິ່ງດັ່ງກ່າວໄດ້ເຮັດໃຫ້ອັງແກນໄດ້ມີຄວາມຄິດທີ່ວ່າຢູ່ໃນສັງຄົມໃຫມ່ (ຢ່າງຫນ້ອຍກໍແມ່ນໃນໄລຍະທຳອິດ), ຢູ່ໃນຂະແຫນງການກະສິກຳຂອງມັນນັ້ນຈະມີສອງ ຮູບການຂອງກຳມະສິດແບບລວມຫມູ່ພ້ອມກັນ, ນັ້ນກໍຄືສະມາຄົມແບບລັດແລະ ແບບສະຫະກອນ.

ມີສິ່ງຢັ້ງຢືນໂດຍກົງທີ່ວ່າບັນດາຜູ້ໃຫ້ກຳເນີດລັດທິສັງຄົມນິຍົມ ວິທະຍາສາດອະນຸຍາດໃຫ້ມີຮູບການຂອງການອອກແຮງງານແບບສ່ວນລວມ ຊະນິດຕ່າງໆຢູ່ໃນຂອບເຂດແຫ່ງໄລຍະທຳອິດຂອງລະບອບກອມມູນິດເຊິ່ງໃນນັ້ນ ແນ່ນອນວ່າ ຜົນປະໂຫຍດຂອງສັງຄົມຕ້ອງຢູ່ເຫນືອກວ່າ. ຕົວຢ່າງພວກເຮົາຂໍຍົກເອົາຈົດຫມາຍຂອງອັງແກນທີ່ສົ່ງເຖິງທ່ານອາບກູດສະຕາເບແບນເຊິ່ງເປັນ ຜູ້ສ້າງຕັ້ງແລະຜູ້ນຳຂອງພັກສັງຄົມປະຊາທິປະໄຕເຢຍລະມັນນັ້ນ, ຈົດຫມາຍ ດັ່ງກ່າວຂຽນໃນເດືອນມັງກອນປີ ໑໘໘໖, ໃນນັ້ນໄດ້ເນັ້ນວ່າ: "...ໃນເມື່ອຫັນໄປສູ່ເສດຖະກິດແບບກອມມູນິດຢ່າງສົມບູນນັ້ນ, ພວກເຮົາຈຳເປັນຕ້ອງນຳໃຊ້ການຜະລິດແບບສະຫະກອນຢ່າງກວ້າງຂວາງໃນຖານະທີ່ເປັນຂອດລະຫວ່າງກາງ... ແຕ່ວ່າ ຕ້ອງເຮັດແນວໃດຮັບປະກັນໃຫ້ສັງຄົມ, ເຊິ່ງໃນໄລຍະ ທຳ

ອິດກໍຄືລັດນັ້ນຮັກສາໄດ້ກຳມະສິດຂອງຕົນຕໍ່ພາຫະນະການຜະລິດ,ແລະ ດ້ວຍເຫດນັ້ນຜົນປະໂຫຍດພິເສດຂອງສະມາຄົມແບບສະຫະກອນຄົງຈະບໍ່ສາມາດອິ່ມຢູ່ຕໍ່ຜົນປະໂຫຍດຂອງສັງຄົມທັງໝົດ". ໑)

ເປັນເວລາດົນທີ່ວະລາດີເມຍ ອີລິດ ເລນິນ ບໍ່ໄດ້ຮູ້ເຖິງຄວາມຄິດຕ່າງໆດັ່ງກ່າວນັ້ນຂອງອັງແກນທີ່ກ່ຽວກັບຄວາມອາດສາມາດໝູນໃຊ້ ສະຫະກອນຢູ່ໃນໄລຍະທຳອິດຂອງລະບອບກອມມູນິດ. ຍ້ອນແນວນັ້ນ ເລນິນເອງຈຳເປັນຕ້ອງໄດ້ເດີນຕາມເສັ້ນທາງເອັ້ນດຽວກັນກັບອັງແກນໃນການເຂົ້າໃຈແລະຕີລາຄາສະຫະກອນ.

## "ການຜູກພັນສິ່ງທີ່ບໍ່ຜູກພັນກັນ" ຫລື<br>ຂົງເຂດການລວມເຂົ້າກັນຂອງບັນດາຫລັກການດ້ານເສດຖະກິດ<br>ທີ່ກົງກັນຂ້າມກັນ?

**ຊີວິດຕົວຈິງ ຕ້ານກັບສິ່ງທີ່ ໄດ້ວາດໄວ້ແລ້ວ**

ຢູ່ໃນບົດຄວາມສຸດທ້າຍຂອງຕົນນັ້ນ,ເລນິນ ໄດ້ເວົ້າເຖິງບັນຫາສະຫະກອນຈາກສອງດ້ານ: ດ້ານທີໜຶ່ງຖືວ່າສະຫະກອນເປັນເສັ້ນທາງ ທີ່ບໍ່ສັບສົນ, ງ່າຍດາຍແລະທີ່ໃຜກໍເຂົ້າຮ່ວມໄດ້,ໄປສູ່"ລະບຽບການ" ໒) ໃໝ່ແບບສັງຄົມນິຍົມສຳລັບຊາວນາ(ແລະມັນກໍບໍ່ແມ່ນ ໂດຍບັງເອີນທີ່ຕ້ອງເວົ້າວ່າແມ່ນສຳລັບຊາວນານັ້ນ,ທັງນີ້ກໍເພາະວ່າໃນສະໄໝນັ້ນປະ

---

໑) ມາກ ກ.,ອັງແກນ ຟ. ນິພົນ,ເຫລັ້ມ ໕໖, ໜ້າ ໕໖໑.

໒) ເລນິນ ວ.ອ.ປະມວນນິພົນຄົບຊຸດ,ເຫລັ້ມ ໔໔,ໜ້າ ໕໗໐.

ເທດລັດເຊຍເປັນປະເທດທີ່ຊາວນາກວມອັດຕາສ່ວນເຖິງສອງສ່ວນສາມ ຂອງພົນລະເມືອງ). ສ່ວນດ້ານທີສອງນັ້ນ, ເລນິນຖືວ່າສະຫະກອນເປັນປະຖົມ ປັດໄຈແລະໃນເວລາດຽວກັນກໍເປັນເປົ້າຫມາຍຂອງລະບອບສັງຄົມນິຍົມ. ພວກເຮົາຂໍລົມຄືນອີກເທື່ອຫນຶ່ງເຖິງນິຍາມຂອງເລນິນທີ່ວ່າ: "ແລະລະບອບ ຂອງບັນດາສະມາຊິກສະຫະກອນໃນເມື່ອກຳມະສິດຕໍ່ພາຫະນະການຜະລິດເປັນຂອງສ່ວນລວມ, ໃນເມື່ອຊົນຊັ້ນກຳມາຊີບໄດ້ຮັບໄຊຊະນະທາງດ້ານຊົນຊັ້ນຕໍ່ຊົນ ຊັ້ນນາຍທຶນນັ້ນ ກໍຄືລະບອບສັງຄົມນິຍົມ".[1] ເລນິນໄດ້ເວົ້າວ່າ, ລະບອບສັງຄົມທີ່ຊົນຊັ້ນກຳມະກອນໄດ້ສ້າງຂຶ້ນ, ລະບອບສັງຄົມທີ່ຊາວກອມມູນິດ "ຕ້ອງຊ່ວຍຊູຍູ້ຫມູນເຫນືອສິ່ງທຳມະດານັ້ນ ກໍຄືລະບອບສະຫະກອນ",[2] ຫມາຍຄວາມວ່າ <u>ລະບອບລວມຫມູ່</u>. ຄຳຖາມທີ່ວ່າເວົ້າລວມແມ່ນເລນິນຢາກຫມາຍເຖິງຫຍັງແທ້ເມື່ອເພິ່ນເວົ້າກ່ຽວກັບສະຫະກອນຂອງພົນລະເມືອງລັດເຊຍທັງຫມົດ, ນັ້ນເປັນຄຳຖາມທີ່ຕ້ອງໄດ້ສືບຕໍ່ຄົ້ນຄິດຢ່າງຮອບດ້ານ ແຕ່ເປັນອັນຈະແຈ້ງວ່າ ກ່ອນອື່ນຫມົດແມ່ນເວົ້າເຖິງສະຫະກອນ ໃນຄວາມຫມາຍທາງກວ້າງແລະທາງແຄບຂອງມັນ.

ຄວາມຈິງແລ້ວສະຫະກອນນັ້ນແມ່ນຫຍັງ? ໃນຄວາມຫມາຍທາງກວ້າງແລ້ວມັນຫມາຍເຖິງການຜູກພັນຄວາມພະຍາຍາມຂອງຫລາຍໆຄົນດ້ວຍ ຄວາມຕື່ນຕົວເມື່ອຮ່ວມກັນແກ້ໄຂບັນຫາຕ່າງໆທີ່ວາງອອກຕໍ່ຫນ້າພວກເຂົາເຈົ້າ. ໃນກໍລະນີນີ້ສະຫະກອນມີຄວາມຫມາຍດຽວກັນກັບສະຫະພັນ "ເຊິ່ງບັນດານັກສັງ

---

໑) ວ.ອ.ເລນິນ, ປະມວນບົດນິພົນຄົບຊຸດ, ເຫລັ້ມທີ 45, ຫນ້າ 373.

໒) ວ.ອ.ເລນິນ, ປະມວນບົດນິພົນຄົບຊຸດ, ເຫລັ້ມທີ 45, ຫນ້າ 371.

ຄົມນິຍົມ-ເພີ້ຝັນທີ່ຍິ່ງໃຫຍ່ ຊາກຟູເຣແລະໂຣແບກແອວອັນເປັນຜູ້ເປີດທາງ ທີ່ໃກ້ທີ່ສຸດຂອງລັດທິສັງຄົມນິຍົມວິທະຍາສາດນັ້ນໄດ້ຜູກພັນຄໍາວ່າສະຫະພັນກັບການທ້ອນໂຮມຄວາມພະຍາຍາມແລະພາຫະນະສ່ວນຕົວຂອງຫລາຍໆຄົນຢ່າງຕື່ນຕົວເພື່ອຕອບສະຫນອງເງື່ອນໄຂພື້ນຖານຂອງການດໍາລົງຊີວິດ, ເພື່ອການ ຜະລິດຢ່າງເຫມາະສົມຂອງສັງຄົມ, ເພື່ອຊີວິດການເປັນຢູ່ແລະເພື່ອຊີວິດສັງຄົມທັງຫມົດແລະກໍບໍ່ເປັນການບັງເອີນທີ່ຕັ້ງແຕ່ເລີ່ມຕົ້ນບົດຂຽນ "ກ່ຽວກັບສະຫະກອນ" ນັ້ນ, ເລນິນໄດ້ເວົ້າເຖິງພວກເຂົາຄືກັນກັບເວົ້າເຖິງ "ນັກສະຫະກອນແບບເກົ່າ" ແລະເພິ່ນໄດ້ຂຽນວ່າ: ປະຈຸບັນນີ້ ພາຍໃຕ້ອໍານາດການປົກຄອງໂຊວຽດນັ້ນ, "ຫລາຍສິ່ງຫລາຍຢ່າງທີ່ເຄີຍເປັນສິ່ງທີ່ບໍ່ອາດເປັນໄປໄດ້, ສິ່ງທີ່ລະເມີເພີ້ຝັນ, ສິ່ງທີ່ເປັນຄວາມປາດຖະຫນາອັນທໍາມະດາສາມັນ ຂອງບັນດານັກສະຫະກອນແບບເກົ່ານັ້ນໄດ້ກາຍມາເປັນຄວາມຈິງຢ່າງຈະແຈ້ງແລ້ວ".[໑] ໃນກໍລະນີ ນີ້ແມ່ນເວົ້າເຖິງສະຫະກອນໃນຄວາມຫມາຍທາງກວ້າງຂອງມັນ. ກ່ຽວກັບບັນຫານີ້ຍັງໄດ້ຮັບການຢັ້ງຢືນໃນແນວຄວາມຄິດຂອງເລນິນທີ່ວ່າ "ສໍາລັບພວກເຮົາ, ຄວາມຈິງແລ້ວ, ເມື່ອວ່າອໍານາດລັດໄດ້ຢູ່ໃນກໍາມືຂອງຊົນຊັ້ນກໍາມະກອນ, ເມື່ອວ່າພາຫະນະການຜະລິດທຸກຢ່າງເປັນຂອງອໍານາດລັດດັ່ງກ່າວ, ສໍາລັບພວກເຮົາ, ຄວາມຈິງແລ້ວກໍມີພຽງຫນ້າທີ່ນໍາເອົາພົນລະເມືອງເຂົ້າເປັນສະຫະກອນເທົ່ານັ້ນ".[໒] ແຕ່ໃນເວລາດຽວກັນນັ້ນ ຢູ່ໃນທີ່ນີ້, ຢູ່ໃນບົດຂຽນທີ່ວ່ານີ້, ເພິ່ນກໍໄດ້ນໍາໃຊ້ຄໍາວ່າສະຫະກອນໃນຄວາມຫມາຍທາງແຄບຂອງມັນຄືກັນ: ເພິ່ນໄດ້

---

໑) ເລນິນ ວ.ຂ. ປະມວນນິພົນຄົບຊຸດ, ເຫລັ້ມ ໔໕, ຫນ້າ ໓໖໙.
໒) ເລນິນ ວ.ຂ. ປະມວນນິພົນຄົບຊຸດ, ເຫລັ້ມ ໔໕, ຫນ້າ ໓໖໙.

ວາງໜ້າທີ່ການເຮັດໃຫ້ການອອກແຮງງານຂອງຊາວນາເປັນແບບສະຫະກອນ, ໄດ້ວາງບັນຫາກ່ຽວກັບການກໍ່ສ້າງວິສາຫະກິດແບບສະຫະກອນຢູ່ໃນຊົນນະບົດ.

ເປັນທີ່ຈະແຈ້ງເຊັ່ນກັນກ່ຽວກັບສາຍເຫດຕ່າງໆທີ່ພາໃຫ້ເລນິນເວົ້າ ເຖິງຄວາມໝາຍອັນຍິ່ງໃຫຍ່ຂອງສະຫະກອນດັ່ງທີ່ໄດ້ກ່າວມາແລ້ວນັ້ນ ຢູ່ໃນ ບັນດາຜົນງານສິ້ນສຸດທ້າຍຂອງຕົນ. ການເຂົ້າສູ່ບັນຫາທີ່ສຳຄັນ ຢ່າງ "ນິບໍລິ ມາດ"ຄືດັ່ງກ່າວ(ຖ້າສາມາດເວົ້າແນວນັ້ນໄດ້)ນັ້ນ ແມ່ນເປັນສິ່ງທີ່ມີຢູ່ ປະຈຳ ໃນຕົວຂອງເລນິນ. ທັງນີ້ ກໍຍ້ອນຄວາມມຸ່ງໝັ້ນຂອງເພິ່ນໃນການໝູນໃຊ້ໃນ ລະດັບຄວາມອາດສາມາດສູງສຸດຂອງວັດຖຸນິຍົມສັດຈະວິພາກ,ໃນການໝູນໃຊ້ ກົດເກນທິດສະດີທີ່ວ່າດ້ວຍຄວາມເປັນເອກະພາບຂອງສິ່ງທີ່ກົງກັນຂ້າມກັນຢູ່ໃນ ຂະບວນວິວັດແຫ່ງການວາງຍຸດທະສາດການກໍ່ສ້າງສັງຄົມນິຍົມ. ແລະຢູ່ໃນທີ່ນີ້ ໃນການເຂົ້າສູ່ບັນຫາສະຫະກອນນີ້, ໄດ້ຄຳນຶງເຖິງຄວາມຄິດຂອງເລນິນ ກ່ຽວ ກັບຄວາມອາດສາມາດຜູກພັນບັນດາຫລັກການທີ່ກົງກັນຂ້າມກັນຢູ່ໃນຂະບວນການ ກໍ່ສ້າງເສດຖະກິດນັ້ນຢ່າງແມ່ນຢຳທີ່ສຸດ.ທັງນີ້ກໍເພາະວ່າສະຫະກອນເປັນ ຕົວ ຢ່າງທີ່ມີລັກສະນະກລາດຊິກຂອງການຜູກພັນເປັນອັນດຽວກັນທີ່ເກີດຂຶ້ນຢ່າງປົກ ກະຕິວິໄສລະຫວ່າງບັນດາຫລັກການເສດຖະກິດທີ່ກົງກັນຂ້າມກັນນັ້ນກໍຄືຫລັກການ ຂອງຜົນກຳໄລສ່ວນບຸກຄົນແລະຫລັກການແຫ່ງຜົນກຳໄລຂອງລັດສ່ວນລວມ , ໝາຍຄວາມວ່າລະຫວ່າງຜົນປະໂຫຍດຂອງສ່ວນບຸກຄົນແລະຜົນປະໂຫຍດຂອງ ສ່ວນລວມ. ສະນັ້ນ, ເມື່ອພ້ອມກັນກັບການຫັນໄປສູ່ນະໂຍບາຍເສດຖະກິດໃໝ່* ໄດ້ເກີດ ມີ ບັນຫາ ການນຳໃຊ້ ແບບ ວິທີການ

---

*ນະໂຍບາຍເສດຖະກິດໃໝ່ ແມ່ນນະໂຍບາຍເສດຖະກິດຂອງລັດ ໂຊວຽດ ເຊີງໄດ້ຮັບການຕົກລົງຮັບຮອງເອົາຢູ່ໃນກອງປະຊຸມໃຫຍ່ຄັ້ງທີ 10 ຂອງ ພັກ

ກ່ຽວກັບການອອກແຮງງານທີ່ເຄີຍມີປະເພນີມາແລ້ວນັ້ນຢ່າງກວ້າງຂວາງກວ່າເກົ່າ ເພື່ອເປົ້າຫມາຍແຫ່ງການກໍ່ສ້າງສັງຄົມນິຍົມນັ້ນ, ເລນິນເລີ່ມໃຫ້ຄວາມຫມາຍສຳຄັນອັນດັບຫນຶ່ງແກ່ບັນຫາດັ່ງກ່າວ. ເລນິນໄດ້ຂຽນໄວ້ວ່າລັກສະນະພິເສດສະເພາະຂອງສະຫະກອນນັ້ນ ແມ່ນຢູ່ບ່ອນທີ່ວ່າ ສະຫະກອນ ຮັບປະກັນ "ລະດັບການຜູກພັນຜົນປະໂຫຍດຂອງເອກະຊົນ, ຜົນປະໂຫຍດ ຂອງການຄ້າເອກະຊົນ,ຮັບປະກັນການຕິດຕາມກວດກາຂອງລັດຕໍ່ຜົນປະໂຫຍດດັ່ງກ່າວ,ຮັບປະກັນລະດັບການເຮັດໃຫ້ຜົນປະໂຫຍດເຫລົ່ານັ້ນຂຶ້ນກັບຜົນປະໂຫຍດສ່ວນລວມ,ເຊິ່ງບັນຫານີ້ເຄີຍເປັນຂໍ້ຂັດແຍ່ງກັນ ຂອງບັນດານັກສັງຄົມນິຍົມ ຫລາຍຕໍ່ຫລາຍຄົນ

---

ໃນປີ ໑໙໒໑. ນະໂຍບາຍດັ່ງກ່າວນີ້ໄດ້ຖືກນຳມາປ່ຽນແທນນະໂຍບາຍຂອງ"<u>ລະບອບກອມມູນິດປ່າງສົງຄາມ</u>",ເຊິ່ງໃນລະບອບກອມມູນິດປ່າງ ສົງຄາມນີ້ ແມ່ນມີການຄວບຄຸມການເຄື່ອນໄຫວທາງດ້ານເສດຖະກິດທຸກຢ່າງຂອງປະເທດຢ່າງເຂັ້ມງວດທີ່ສຸດ ອັນມີການຫ້າມການຄ້າຂາຍເສລີ,ໃນເມື່ອການບັງຄັບບັນຊາສູງສຸດແມ່ນຢູ່ໃນກຳມືຂອງລັດ. ນະໂຍບາຍເສດຖະກິດໃຫມ່ນີ້ແມ່ນແນໃສ່ກໍ່ສ້າງພື້ນຖານເສດຖະກິດສັງຄົມນິຍົມດ້ວຍການນຳໃຊ້ຕະຫລາດ , ນຳໃຊ້ການຄ້າແລະການຫມູນເວີນຕາ. ຄວາມອາດສາມາດໄດ້ຂາຍຜະລິດຕະພັນທາງດ້ານກະສິກຳທີ່ເຫລືອໃຊ້ຢູ່ຕະຫລາດນັ້ນ ໄດ້ສ້າງຄວາມສົນໃຈ ທາງດ້ານເສດຖະກິດໃຫ້ແກ່ຊາວນາ,ຊ່ວຍຍົກປະສິດທິພາບການອອກແຮງງານຂອງຊາວນາໃຫ້ສູງຂຶ້ນ,ແລະຈາກນັ້ນກໍ່ຊ່ວຍຟື້ນຟູກະສິກຳ. ສິ່ງດັ່ງກ່າວນີ້ໄດ້ຮັບປະກັນການສະຫນອງສະບຽງອາຫານໃຫ້ແກ່ຊາວຕົວເມືອງແລະວັດຖຸດິບໃຫ້ແກ່ອຸດສາຫະກຳ: ຖ້າປາສະຈາກການລິເລີ່ມທາງດ້ານເສດຖະກິດແລະການຄ້າແບບເສລີ,ໃນນັ້ນ ລວມທັງຄວາມພະຍາຍາມຂອງບັນດາສະຫະກອນແລ້ວ ກໍ່ບໍ່ອາດທີ່ຈະຟື້ນຟູກະສິກຳ,ບໍ່ອາດຟື້ນຟູການຄ້າສ່ວນລວມຂອງລັດ,ບໍ່ອາດສ້າງ ອຸດສາຫະກຳອັນເປັນພື້ນຖານຂອງລະບອບສັງຄົມນິຍົມນັ້ນໄດ້. <u>ບ.ກ</u>.

ໃນເມື່ອກ່ອນ". [໑] ຄວາມສົນໃຈຂອງເລນິນກ່ຽວກັບຄວາມອາດສາມາດຂອງສະຫະກອນນັ້ນ, ແນ່ນອນແລ້ວ ແມ່ນບໍ່ໄດ້ເກີດຂຶ້ນຢ່າງ "ທັນທີທັນໃດ". ໃນເມື່ອກ່ອນເລນິນກໍເຄີຍໄດ້ຄົ້ນຄິດຢ່າງເອົາຈິງເອົາຈັງກ່ຽວກັບຈຸດພິເສດຕ່າງໆຂອງຮູບການຈັດຕັ້ງການອອກແຮງງານແບບສະຫະກອນນີ້. ຕັ້ງແຕ່ໄລຍະເວລາແຫ່ງ "ລະບອບກອມມູນິດປາງສົງຄາມ" ອັນເປັນສະໄຫມຂອງການຈຳກັດແລະຄວບຄຸມການເຄື່ອນໄຫວຂອງສັງຄົມໃນທຸກໆດ້ານ ຢ່າງເຂັ້ມງວດທີ່ສຸດ, ເຊິ່ງເນື່ອງມາຈາກສະພາບອັນຮ້າຍກາດຂອງການຕໍ່ສູ້ຕ້ານສັດຕູພາຍໃນ ແລະພາຍນອກນັ້ນ, ໃນເວລາທີ່ທຳການຮ່າງໂຄງການຂອງພັກໃນລະດູບານໃຫມ່ ປີ ໑໙໑໙, ເລນິນກໍໄດ້ໃຫ້ຄວາມສົນໃຈຕໍ່ບັນຫາສະຫະກອນ. (ແມ່ນຢູ່ວ່າ, ເວລານັ້ນກ່ອນອື່ນແມ່ນເລນິນຢາກເວົ້າເຖິງສະຫະກອນໃຊ້ສອຍ, ໂດຍບໍ່ຈຳແນກວ່າເປັນ "ກິດຈະການທີ່ມີລັກສະນະມວນຊົນກິດຈະກຳຂອງການແຈກຢາຍຢ່າງມີແຜນການ" [໒]. ແຕ່ວ່າ ໃນສະໄຫມນັ້ນບໍ່ໄດ້ເກີດມີບັນຫາກ່ຽວກັບທີ່ຕັ້ງຂອງ ສະຫະກອນຢູ່ໃນລະບົບເສດຖະກິດ-ສັງຄົມໃຫມ່,ທັງນີ້ ກໍເພາະຖືວ່າມີຄວາມອາດສາມາດຢ່າງບໍ່ຕ້ອງສົງໄສໃນການຫັນປ່ຽນໂດຍກົງຈາກລະບອບທຶນນິຍົມໄປ ສູ່ຫລັກການຕ່າງໆ ຂອງລະບອບກອມມູນິດເອງ ກ່ຽວກັບການຈັດຕັ້ງ ການອອກແຮງງານແລະການແຈກຢາຍ. "...ສຳລັບການເຄື່ອນໄຫວທີ່ຖືກຕ້ອງ ຂອງໄລຍະທຳອິດແຫ່ງສັງຄົມກອມມູນິດ", ໃນໄລຍະນັ້ນຖືກັນວ່າກ່ອນອື່ນຫມົດຕ້ອງເຮັດໃຫ້ພົນລະເມືອງທັງຫມົດກາຍເປັນອ້າລັດຖະກອນແລະກຳມະກອນ ຂອງ "ຊິງດີກາ" ແບບທົ່ວປວງຊົນ,"ໃຫ້ພວກເຂົາເຈົ້າເຮັດວຽກ ເທົ່າທຽມກັນ,

---

໑) ເລນິນ ວ.ອ. ປະມວນນິພົນຄົບຊຸດ, ເຫລັ້ມ ໔໕, ຫນ້າ ໓໗໐.
໒) ເລນິນ ວ.ອ. ປະມວນນິພົນຄົບຊຸດ, ເຫລັ້ມ ໔໘, ຫນ້າ ໑໔໑.

ໂດຍຮັກສາລະດັບຂອງວຽກງານຢ່າງຖືກຕ້ອງ, ແລະໄດ້ຮັບຄ່າແຮງງານເທົ່າທຽມກັນ" ໑). ສ່ວນສະຫະກອນນັ້ນຊ້ຳບໍ່ອາດຈະຢູ່ໃນຈຳນວນປັດໄຈຕ່າງໆທີ່ຈະສາມາດຊ່ວຍແກ້ໄຂບັນຫາດັ່ງກ່າວໄດ້. ເພາະເຫດໃດ ?

ທັງນີ້ ກໍເພາະວ່າສະຫະກອນນັ້ນ ທາດແທ້ຂອງມັນ ແມ່ນບໍ່ເໝາະສົມກັບການຈັດຕັ້ງການຜະລິດແບບທີ່ວ່າ ແຕ່ລະຫົວໜ່ວຍເສດຖະກິດຈະຕ້ອງຢູ່ພາຍໃຕ້ຄຳສັ່ງ,ຄຳຊີ້ນຳຂອງສູນກາງການນຳຢ່າງຂາດຕົວນັ້ນ. ສະຫະກອນອັນເປັນຄືສຳພັນຢ່າງສະໝັກໃຈຂອງບັນດາເຈົ້າຂອງພາຫະນະການຜະລິດຈຳນວນໜຶ່ງນັ້ນ ແມ່ນມີຄວາມເປັນເຈົ້າຕົນເອງທາງດ້ານເສດຖະກິດຢ່າງພຽງພໍ ແລະມີຄວາມສາມາດຖົມຊຸມດ້ວຍຕົນເອງຢ່າງສົມບູນ.ມິພຽງແຕ່ ສະຫະກອນ ແລະມີແຕ່ມັນເທົ່ານັ້ນທີ່ມີບົດບາດຕັດສິນໃນການກຳນົດໜ້າທີ່ຕ່າງໆຂອງ ການເຄື່ອນໄຫວດ້ານເສດຖະກິດຂອງຕົນ. ຫລືເວົ້າອີກຢ່າງໜຶ່ງກໍແມ່ນວ່າການຮັກສາບັນດາສະຫະກອນ(ໃນທຸກຮູບແບບທີ່ອາດມີໄດ້)ນັ້ນ ມັນຈຳເປັນຕ້ອງມີການບໍ່ລວມສູນທາງດ້ານເສດຖະກິດສະເພາະຂອງມັນ,ຕ້ອງມີການຮັກສາແລະ ຂະຫຍາຍບັນດາຫົວໜ່ວຍເສດຖະກິດທີ່ເປັນເອກະລາດ,ເຊິ່ງຫົວໜ່ວຍ ເສດຖະກິດດັ່ງກ່າວຈະທຳການພົວພັນທາງດ້ານເສດຖະກິດຊຶ່ງກັນແລະກັນແລະກັບຜູ້ໃຊ້ສອຍທັງຫລາຍ. ສ່ວນຢູ່ໃນຂອບເຂດຂອງທັດສະນະກ່ຽວກັບລະບອບສັງຄົມ ນິຍົມທີ່ຄອບງຳຢູ່ໃນພັກໃນໄລຍະແຫ່ງ "ລະບອບກອມມູນິດປາງສົງຄາມນັ້ນຊ້ຳຖືວ່າລັກສະນະຕົ້ນຕໍຂອງເສດຖະກິດກອມມູນິດແມ່ນອີກສິ່ງໜຶ່ງທີ່ກົງກັນຂ້າມຢ່າງສິ້ນເຊີງ,ເຊິ່ງນັ້ນກໍຄື:ການຄຸ້ມຄອງໂດຍກົງຂອງລັດຕໍ່ທຸກໆຂະບວນວິວັດ ຂອງ

---

໑) ເລນິນ ວ.ອ.,ປະມວນນິພົນຄົບຊຸດ,ເຫລັ້ມ ໔໓,ໜ້າ ໑໐໑.

ການຜະລິດແລະການແຈກຢາຍ, ໝາຍຄວາມວ່າການລວມສູນຢ່າງເຕັມສ່ວນ ແລະຢ່າງເຂັ້ມງວດໃນຂອບເຂດທົ່ວທັງຊາດ [1].

ສ່ວນສະຫະກອນຊໍ້າພັດເປັນຄືວິສາຫະກິດທີ່ເປັນເອກະລາດ, ສະນັ້ນ ມັນບໍ່ສາມາດຢູ່ໃນສະພາບທີ່ບໍ່ມີການພົວພັນດ້ານເສດຖະກິດຢ່າງເປັນເຈົ້າ ຕົນເອງໄດ້, ສະຫະກອນນັ້ນ ຕັ້ງແຕ່ເລີ່ມຕົ້ນພູ້ນແມ່ນມັນແນໃສ່ການໄດ້ຮັບລາຍໄດ້ ແລະກຳໄລ, ແລະຍ້ອນແນວນັ້ນມັນຈຶ່ງແນໃສ່ຕະຫລາດ. ໃນຄວາມໝາຍ ນີ້ ແມ່ນສະຫະກອນມີການເລີ່ມຕົ້ນໃນຕົວຂອງມັນແບບທຶນນິຍົມ, ແບບຄ້າຂາຍລ້ອນ ຈ້ອນ. ຄຸນລັກສະນະແຕກຕ່າງດັ່ງກ່າວນີ້ລະຫວ່າງທາດແທ້ ທາງດ້ານເສດຖະ ກິດຂອງສະຫະກອນອັນເປັນຄືຮູບການຈັດຕັ້ງການອອກແຮງງານ ທີ່ມີລັກສະນະ ຄ້າຂາຍ ກັບບັນດາຫລັກການເສດຖະກິດທີ່ປາສະຈາກຕະຫລາດເຊິ່ງມັນພົວພັນ ກັບໄລຍະຂອງລະບອບກອມມູນິດປາງສັງຄົມນັ້ນ ໄດ້ເຮັດໃຫ້ເລນິນ ໄປເຖິງ ບ່ອນສະຫລຸບວ່າ ສະຫະກອນນັ້ນອາດຈະຖື ເປັນພິເສດວ່າ ແມ່ນຮູບການເສດ ຖະກິດສະເພາະເທົ່ານັ້ນ, ເຊິ່ງຄຸນປະໂຫຍດຂອງມັນອາດຈະຖືກຮັບຮູ້ພຽງ ແຕ່ "ໃນຂອບເຂດອັນແນ່ນອນ" [2] ເທົ່ານັ້ນ, ແມ່ນແລ້ວແລະກໍພຽງແຕ່ໃນຂອບເຂດ ຂອງໄລຍະຂ້າມຜ່ານຈາກລະບອບທຶນນິຍົມໄປສູ່ລະບອບສັງຄົມນິຍົມເທົ່ານັ້ນ.

ພາຍຫລັງມາ ເລນິນໄດ້ເອີ້ນທ່າທີຕໍ່ສະຫະກອນດັ່ງກ່າວນັ້ນວ່າ" ມີ ລັກສະນະດູໝິ່ນ" ແລະຮັບຮູ້ວ່າການດູຖູກສະຫະກອນວ່າເປັນອົງການຂອງ"ພໍ່ ຄ້າ"ນັ້ນ ແມ່ນຜິດພາດ. ເລນິນໄດ້ໄປເຖິງຂໍ້ສະຫລຸບດັ່ງກ່າວນັ້ນເທື່ອລະກ້າວ

---

໑) ເລນິນ ວ.ອ., ປະມວນນິພົນຄົບຊຸດ, ເຫລັ້ມ ໓໘, ໜ້າ ໙໘.

໒) ເລນິນ ວ.ອ., ປະມວນນິພົນຄົບຊຸດ, ເຫລັ້ມ ໔໓, ໜ້າ ໒໒໕.

ຕາມລະດັບແຫ່ງການປະຕິບັດຕົວຈິງຂອງແນວຄິດກ່ຽວກັບນະໂຍບາຍ ເສດຖະກິດໃຫມ່ນັ້ນ. ໃນໄລຍະທຳອິດ, ເມື່ອເບິ່ງຄືວ່າ ນະໂຍບາຍເສດຖະກິດໃຫມ່ຈະເປັນພຽງແຕ່ການນຳໄປສູ່ການປ່ຽນແທນການແບ່ງປັນເອົາທັນຍາຫານມາເປັນພາສີທັນຍາຫານ*, ໄປສູ່ການແລກປ່ຽນສິນຄ້າໂດຍ ກົງປາສະຈາກ ການຫມູນເງິນຕາ ແລະປາສະຈາກການຄ້າ. ເລນິນໄດ້ຮັກສາທ່າທີ ໃນເມື່ອກ່ອນທີ່ມີລັກສະນະຕຳນິຕໍ່ກັບສະຫະກອນວ່າ ເປັນອົງການທີ່ມີລັກສະນະຄ້າຂາຍອ້ອຍຕ້ອຍ. ແຕ່ວ່າ ຕັ້ງແຕ່ເລີ່ມຕົ້ນປີ ໑໙໒໒ ພຸ້ນ, ໃນເມື່ອຊີວິດຕົວຈິງເອງໄດ້ຈຳໃຫ້ຕ້ອງຫັນໄປສູ່ຫລັກການທີ່ມີລັກສະນະການຄ້າ ( ການໄລ່ລຽງເສດຖະກິດ) ແລະວິສາຫະກິດແຫ່ງລັດ, ໃນເມື່ອສິ່ງທີ່ໄດ້ກາຍເປັນຄວາມຈິງນັ້ນ ແມ່ນການຫມູນວຽນເງິນຕາ ແຕ່ບໍ່ແມ່ນການແລກປ່ຽນສິນຄ້າ, ເມື່ອນັ້ນທັດສະນະ ທີ່ມີຕໍ່ສະຫະກອນໄດ້ປ່ຽນແປງໄປຢ່າງຈະແຈ້ງ.

---

* ການແບ່ງປັນເອົາທັນຍາຫານນັ້ນແມ່ນວິທີການທີ່ຈຳເປັນພິເສດທີ່ລັດຖະບານໂຊວຽດໄດ້ວາງອອກໃນໄລຍະສົງຄາມກາງເມືອງ(໑໙໑໘-໑໙໒໐). ມັນແມ່ນການທີ່ຊາວນາຕ້ອງສົ່ງເຂົ້າຈີ່ແລະຜະລິດຕະພົນອື່ນໆ ເຊິ່ງເຫລືອກິນນັ້ນໃຫ້ແກ່ລັດຕາມລາຄາທີ່ບົ່ງໄວ້. ພາສີທັນຍາຫານນັ້ນກໍຄືພາສີຕົວຈິງທີ່ເກັບຈາກເສດຖະກິດຂອງຊາວນາ, ພາສີດັ່ງກ່າວຖືກວາງອອກໂດຍດຳລັດຂອງສະພາແຫ່ງຄະນະກຳມະການປະຊາຊົນໃນເດືອນມີນາປີ ໑໙໒໑, ຕາມການຕົກລົງ ຂອງກອງປະຊຸມໃຫຍ່ຂອງພັກກອມມູນິດລັດເຊຍ( ໂບນເຊວິກ) ເພື່ອປ່ຽນແທນການແບ່ງ ປັນເອົາທັນຍາຫານ. ການຫັນປ່ຽນໄປສູ່ພາສີທັນຍາຫານນັ້ນແມ່ນເຫດການ ທຳອິດຂອງນະໂຍບາຍເສດຖະກິດໃຫມ່, ເຊິ່ງແນໃສ່ການຮັບປະກັນການດຳເນີນການຜະລິດຂອງຊາວນາຢ່າງຖືກຕ້ອງ, ໃນນັ້ນຊາວນາຈະມີຄວາມອາດສາມາດ ນຳໃຊ້ແຫລ່ງວັດຖຸຂອງການຜະລິດຂອງຕົນຢ່າງເສລີກວ່າເກົ່າ.ຈຳນວນເສຍພາສີທັນຍາຫານນັ້ນຫນ້ອຍກວ່າຈຳນວນຂອງການແບ່ງປັນເອົາທັນຍາຫານ. ຫລັງຈາກເສຍພາສີທັນຍາຫານແລ້ວ ຊາວນາສາມາດນຳໃຊ້ສ່ວນທີ່ເຫລືອນັ້ນຢ່າງເສລີ.

**ການຜູກພັນຜົນປະໂຫຍດຂອງສ່ວນບຸກຄົນກັບຜົນປະໂຫຍດຂອງຮວມຫມູ່**

ປີ ໑໙໒໓ ເລນິນ ໄດ້ເວົ້າເຖິງ ການອອກແຮງງານທີ່ມີລັກສະນະພິເສດກ່ຽວກັບສະຫະກອນ, ເພິ່ນໄດ້ສຶກສາກ່ຽວກັບບັນຫາດັ່ງກ່າວຢ່າງລະອຽດຖີ່ຖ້ວນແລະກໍແມ່ນກ່ຽວກັບບັນຫານີ້ເອງທີ່ເພິ່ນໄດ້ໃຫ້ບັນທຶກກ່ຽວກັບຜົນງານທາງດ້ານເສດຖະກິດສິ້ນສຸດທ້າຍຂອງຕົນ. ຢູ່ໃນຜົນງານດັ່ງກ່າວ ທັດສະນະຂອງເລນິນແມ່ນໄດ້ມີລັກສະນະຂອງທັດສະນະຄະຕິທາງດ້ານທິດສະດີ. (ບາດນີ້ເລນິນໄດ້ເນັ້ນເຖິງດ້ານດີຂອງຮູບການທາງດ້ານເສດຖະກິດຂອງການຈັດຕັ້ງ ການອອກແຮງງານແບບສະຫະກອນນີ້). ສະຫະກອນໄດ້ຮັກສາເງື່ອນໄຂເພື່ອຕອບສະຫນອງຄວາມຮຽກຮ້ອງຕ້ອງການ "ແຫ່ງຜົນປະໂຫຍດຂອງສ່ວນບຸກຄົນ", "ແຫ່ງຜົນປະໂຫຍດຂອງລາຍໄດ້", ຫມາຍຄວາມວ່າ ເພື່ອການກະຕຸ້ນໃຫ້ ອອກ ແຮງງານດ້ວຍວິທີທາງເສດຖະກິດທີ່ເຄີຍມີມູນເຊື້ອ ແລະໃນເວລາດຽວກັນກໍຮັບປະກັນລັກສະນະລວມຫມູ່ຂອງການອອກແຮງງານ, ຊ່ວຍຜູກພັນການ ອອກ ແຮງງານນັ້ນ. ແລະ ສິ່ງດັ່ງກ່າວນີ້ຈະຊ່ວຍຂະຫຍາຍເສດຖະກິດຂອງທົ່ວທັງສັງຄົມ ໂດຍທີ່ຍັງຄົງຮັກສາຄວາມອາດສາມາດຂອງການມີຄວາມຄິດລິເລີ່ມ ທາງດ້ານເສດຖະກິດສຳລັບພະນັກງານແຕ່ລະຄົນ, ໂດຍທີ່ບໍ່ໄດ້ມີການມ້າງເພ ກົງ ຈັກຕ່າງໆ ເຊິ່ງໄດ້ປະກອບຂຶ້ນມາໄດ້ຫລາຍສະຕະວັດ ແລະບໍ່ໄດ້ມ້າງເພການຕິດຕໍ່ແລະການພົວພັນທີ່ເປັນມາຢ່າງຫມັ້ນຄົງນັ້ນ. ບັດນີ້ ສຳລັບເລນິນແມ່ນເປັນທີ່ຈະແຈ້ງວ່າ: ຫນຶ່ງໃນບັນດາຮູບແບບທີ່ສຳຄັນທີ່ສຸດຂອງການກໍ່ສ້າງ ແລະການເຄື່ອນໄຫວຂອງລະບອບສັງຄົມນິຍົມນັ້ນກໍຄືສະຫະກອນທີ່ຂະຫຍາຍຕົວສູງແລະທີ່

ແຕກງ່າສາຂາຢ່າງກວ້າງຂວາງຂະບວນການສະຫະກອນພວກເຮົາອໍເນັ້ນຫນັກເປັນພິເສດກ່ຽວກັບສິ່ງຫນຶ່ງທີ່ສຳຄັນທີ່ສຸດເຊິ່ງເລນິນຖືວ່າຕ້ອງໄດ້ມີການຢັ້ງຢືນຢ່າງຄັກແນ່ນັ້ນກໍຄື: ສະຫະກອນທີ່ເປັນຮູບການຈັດຕັ້ງການອອກແຮງງານແລະການດຳລົງຊີວິດນັ້ນໄດ້ໃຫ້ຄວາມອາດສາມາດແກ້ໄຂບັນຫາຕ່າງໆທາງດ້ານເສດຖະກິດຂອງການກໍ່ສ້າງສັງຄົມນິຍົມໄປພ້ອມໆກັບການແກ້ໄຂບັນຫາທາງດ້ານ<u>ວັດທະນະທຳ</u>. ເລນິນໄດ້ຊີ້ແຈງວ່າ ມັນແມ່ນຍ້ອນວ່າການພົວພັນແບບສະຫະກອນນີ້ ໄດ້ຖືກສ້າງຂຶ້ນມາຢ່າງເປັນເຈົ້າຕົນເອງ ແລະໃນນັ້ນມັນບໍ່ພຽງແຕ່ ມີການທຳຜະລິດຄືນອີກເທົ່ານັ້ນ, ແຕ່ໂດຍປົກກະຕິແລ້ວຈະມີການຂະຫຍາຍ ອອກຕື່ມອີກ, ດັ່ງນັ້ນ ມວນມະຫາຊົນຈະຕ້ອງໄດ້ເຂົ້າມີສ່ວນໃນຄວາມສີວິໄລ ແລະວັດທະນະທຳຢ່າງບໍ່ຫລີກລ່ຽງໄດ້.ສະຫະກອນໄດ້ເຮັດໃຫ້ຄົນມີຄວາມອາດສາມາດເຂົ້າປະກອບສ່ວນໃນການແກ້ໄຂບັນຫາເສດຖະກິດດ້ວຍຕົນເອງໂດຍ ປາ ສະຈາກຄຳແນະນຳຈາກຂັ້ນເທິງ, ແລະຜົນໄດ້ຮັບນັ້ນຈະຂຶ້ນຢູ່ກັບການແກ້ໄຂ ບັນຫາດັ່ງກ່າວໄດ້ແນວໃດ, ຖືກຕ້ອງຫລືຜິດພາດ. ດັ່ງນັ້ນ,ທຳມະຊາດທາງດ້ານເສດຖະກິດຂອງສະຫະກອນເອງໄດ້ຊຸກຍູ້ໃຫ້ຊາວນາກໍຄືສະມາຊິກສະຫະກອນຜູ້ໃດກໍຕາມຕ້ອງໄປເຖິງບ່ອນບໍ່ພຽງແຕ່ຂະຫຍາຍຄວາມຮູ້ວິຊາສະເພາະເທົ່ານັ້ນ ແຕ່ຍັງຂະຫຍາຍຄວາມຮູ້ຮອບຕົວເວົ້າລວມ, ເຮັດໃຫ້ເຂົາເຈົ້າກາຍເປັນຜູ້ທີ່ມີວັດທະນະທຳຫລາຍຂຶ້ນ. ຢູ່ໃນບົດ "<u>ກ່ຽວກັບສະຫະກອນ</u>" ນັ້ນ, ເລນິນໄດ້ຖືສະຫະກອນວ່າເປັນຫນຶ່ງໃນບັນດາຮູບການທີ່ອາດເປັນໄປໄດ້ຂອງການ ກະຕຸ້ນຄວາມຫ້າວຫັນທາງດ້ານສັງຄົມ, ດ້ານຈິດໃຈຂອງພົນລະເມືອງ, ເປັນຫນຶ່ງໃນພາຫານະທີ່ເຊື່ອຖືໄດ້ໃນການຜ່ານພົ້ນຈາກຄວາມຫລ້າຫລັງ ຫລາຍສັດຕະ ວັດ

ຂອງປະເທດສັງຄົມນິຍົມ.

ໂດຍເນັ້ນຫນັກເຖິງດ້ານສື່ວິໄລຂອງ "ມັນ" (ຫມາຍເຖິງອົງການຂອງສະຫະກອນ) ນັ້ນ, ເລນິນໄດ້ຂຽນວ່າ: "ພວກເຮົາຕ້ອງໄດ້ເຮັດຕື່ມ ບໍ່ຫລາຍປານໃດອອກໃນທັດສະນະທີ່ກ່ຽວກັບຄົນເອີຣົບ "ທີ່ສີວິໄລ" ( ກ່ອນອື່ນຫມົດແມ່ນຄົນທີ່ມີຄວາມຮູ້ນັ້ນ) ເພື່ອເຮັດແນວໃດຈຳໃຫ້ຫມົດທຸກຄົນ ຕ້ອງເຂົ້າຮ່ວມບໍ່ແມ່ນແບບລອຍຕາມ, ແຕ່ແມ່ນແບບຫ້າວຫັນໃນອົງການ ຂອງ ສະຫະກອນນັ້ນ. ເວົ້າແຈ້ງແລ້ວກໍ່ແມ່ນວ່າ ພວກເຮົາຍັງອີກ "ພຽງແຕ່"ສິ່ງດຽວນັ້ນກໍຄື: ເຮັດໃຫ້ພົນລະເມືອງຂອງພວກເຮົາເປັນ "ຄົນສີວິໄລ"ເຖິງຂັ້ນວ່າເຂົາເຈົ້າຮູ້ເຖິງຜົນໄດ້ທຸກຢ່າງຈາກການເຂົ້າຮ່ວມຂອງທຸກຄົນຢູ່ໃນສະຫະກອນແລະຈັດຕັ້ງການເຂົ້າຮ່ວມດັ່ງກ່າວຢ່າງເຫມາະສົມ. "ພຽງແຕ່" ສິ່ງນັ້ນ. ບໍ່ມີສິ່ງທີ່ສະຫລາດສ່ອງໄສອື່ນໃດອີກທີ່ຕ້ອງການສຳລັບພວກເຮົາດຽວນີ້ເພື່ອກ້າວໄປສູ່ລະບອບສັງຄົມນິຍົມ. ແຕ່ວ່າ ເພື່ອທີ່ຈະປະຕິບັດສິ່ງທີ່ວ່າ "ພຽງແຕ່" ໃຫ້ສຳເລັດນັ້ນ ມັນຈຳເປັນຕ້ອງມີການຫັນປ່ຽນໃຫມ່ຢ່າງເປັນລະບົບ,ຈຳເປັນຕ້ອງມີຂອບເຂດອັນສົມບູນແຫ່ງການຂະຫຍາຍຕົວທາງດ້ານວັດທະນະທຳຂອງທົ່ວມວນຊົນ"[1]

ຍ້ອນເຫດນັ້ນບົດ "ກ່ຽວກັບສະຫະກອນ" ຈຶ່ງຕ້ອງຖືກຖືວ່າ ບໍ່ ເປັນພຽງລະບົບແນະນຳກ່ຽວກັບການຫັນເອົາການຜະລິດກະສິກຳມາເປັນແບບ ສະຫະກອນເທົ່ານັ້ນ. ແນວຄວາມຄິດຂອງບົດດັ່ງກ່າວທາງດ້ານສັງຄົມ ແລະເສດຖະກິດແມ່ນກວ້າງກວ່ານັ້ນຫລາຍ.ດັ່ງທີ່ພວກເຮົາເຫັນແລ້ວນັ້ນ, ຢູ່ໃນບົດດັ່ງ

໑) ເລນິນ ວ.ອ, ປະມວນນິພົນຄົບຊຸດ, ເຫລັ້ມ ໔໕, ຫນ້າ ๓๗໒.

ກ່າວ ເລນິນໄດ້ກັບຄືນມາເວົ້າເຖິງບັນຫາຜູກພັນສິ່ງທີ່ກົງກັນຂ້າມກັນທາງດ້ານສັດຈະວິພາກ ເຊິ່ງນັ້ນກໍຄືບັນຫາຜົນປະໂຫຍດຂອງສ່ວນບຸກຄົນ ແລະ ຜົນ ປະໂຫຍດຂອງຣວມໝູ່ໃນລະບົບສັງຄົມນິຍົມ. ສຳລັບເລນິນນັ້ນກ່ອນອື່ນ ບັນ ຫາແມ່ນຢູ່ບ່ອນວ່າເຮັດແນວໃດເພື່ອຮຽນຮູ້ປະສານສິ່ງທີ່ມີລັກສະນະສະເພາະຂອງລະບອບສັງຄົມນິຍົມຄືການລວມສູນການຜະລິດ ແລະ ການດຳເນີນຊີວິດ ການເມືອງນັ້ນກັບ "ການເຂົ້າຮ່ວມ" ຈາກທາງລຸ່ມ, ກັບການຫ້າວຫັນ ທາງດ້ານເສດຖະກິດ ແລະ ສັງຄົມຂອງພົນລະເມືອງເອງ.

ສະຫະກອນແບບເສດຖະກິດນີ້ມີຄວາມແໜ້ນແກ່ນຫລາຍກວ່າຮູບການເຄື່ອນໄຫວຮວມໝູ່ໃດໆໃນດ້ານການພົວພັນລະຫວ່າງຜູ້ຜະລິດກັບຜົນ ໄດ້ ຮັບຂອງການອອກແຮງງານຂອງເຂົາເຈົ້າ, ໃນການຮັກສາໃຫ້ເຂົາ ເຈົ້າ ໄດ້ ມີຄວາມສຳພັດກ່ຽວກັບການເຂົ້າຮ່ວມທາງດ້ານສ່ວນຕົວໃນວຽກງານຂອງ ວິສາຫະກິດຂອງຕົນ. ການໄດ້ຮັບຄວາມສຳພັດດັ່ງກ່າວນັ້ນແມ່ນຍ້ອນມີການ ຮັບປະກັນຄວາມເປັນເອກະລາດທາງດ້ານເສດຖະກິດຂອງວິສາຫະກິດແບບ ສະ ຫະກອນ, ຍ້ອນການປະຕິບັດການເລືອກຕັ້ງເອົາການນຳຂອງມັນ, ຍ້ອນຫລັກການແຫ່ງການຖົມຊຸມເອົາເອງທາງດ້ານເສດຖະກິດຢ່າງສົມບູນນັ້ນ.

ເລນິນ ໄດ້ເນັ້ນວ່າ, ມັນເປັນສິ່ງສຳຄັນທີ່ສຸດທີ່ຮູ້ຈັກກໍ່ສ້າງ... ສັງຄົມນິຍົມໃນຕົວຈິງແນວໃດເພື່ອໃຫ້ຊາວນານ້ອຍຕ່າງໆສາມາດເຂົ້າຮ່ວມໃນການກໍ່ສ້າງດັ່ງກ່າວ"[໑] ແລະ ໃນຄວາມໝາຍທີ່ "ມີລັກສະນະສະເພາະທີ່ສຸດ " ເຊິ່ງເລນິນໄດ້ໃຫ້ແກ່ສະຫະກອນນັ້ນ, ກ່ອນອື່ນ, ເພິ່ນໄດ້ເຫັນກ່ຽວກັບຄວາມ

---

໑) ເລນິນ ວ.ອ, ປະມວນນິພົນຄົບຊຸດ, ເຫລັ້ມ ໔໕, ໜ້າ ໓໗໐.

ຈິງຂອງ "ການຫັນໄປສູ່ລະບອບໃຫມ່ດ້ວຍເສັ້ນທາງທີ່ອາດເປັນໄປໄດ້ອັນເປັນເສັ້ນທາງທີ່ງ່າຍດາຍ, ບໍ່ສັບສົນ ແລະ ທີ່ໃຜກໍເຂົ້າຮ່ວມໄດ້ສຳລັບຊາວນາ"[໘].

ດັ່ງທີ່ພວກເຮົາໄດ້ເວົ້າມາແລ້ວ, ໄລຍະກ່ອນທີ່ຈະມີນະໂຍບາຍເສດຖະກິດໃຫມ່ນັ້ນຖືວ່າຂະບວນວິວັດແຫ່ງການຜະລິດທັງຫມົດຢູ່ໃນສັງຄົມ ຈົນເຖິງລາຍລະອຽດເລັກໆນ້ອຍໆ ແມ່ນຂຶ້ນກັບລັດໂດຍກົງ, ຫມາຍຄວາມວ່າ ລັດຈະເປັນຜູ້ກຳນົດແຕ່ລະກໍລະນີດ້ວຍຕົນເອງວ່າ ຈະຜະລິດຫຍັງ, ຜະລິດແນວ ໃດ ແລະ ຈະແຈກຢາຍຜົນຜະລິດແນວໃດ. ລັກສະນະລະບົບແຜນການ ຂອງການຜະລິດແບບສັງຄົມນິຍົມນັ້ນມັນພົວພັນກັບ<u>ວິທີການຄຸ້ມຄອງແບບບໍລິຫານຕໍ່ເສດຖະກິດແຫ່ງຊາດ</u>ຢ່າງເຂັ້ມງວດ ແລະມີລັກສະນະດ້ານດຽວ. ການທີ່ອະນຸຍາດໃຫ້ມີວິສາຫະກິດແບບສະຫະກອນ (ຢູ່ໃນກະສິກຳ ແລະໃນອຸດສາຫະກຳ),ຫມາຍຄວາມວ່າ ວິສາຫະກິດທີ່ມີລັກສະນະການຄ້າດ້ານຫນຶ່ງ ແລະ ອີກ ດ້ານ ຫນຶ່ງແມ່ນການໄລ່ລຽງເສດຖະກິດ (ຢູ່ໃນອຸດສາຫະກຳ) ພາຍໃນຂອບເຂດ ຂອງເສດຖະກິດສັງຄົມນິຍົມນັ້ນ ໄດ້ເຮັດໃຫ້ບໍ່ສາມາດນຳໃຊ້ສະເພາະແຕ່ ວິທີການຄຸ້ມຄອງແບບບໍລິຫານ. ຍ້ອນແນວນັ້ນແລ້ວ ເລນິນ ຈຶ່ງບໍ່ພຽງແຕ່ໄດ້ເວົ້າເຖິງການຄຸ້ມຄອງແຫ່ງລັດຕໍ່ເສດຖະກິດ, ແຕ່ຍັງໄດ້ເວົ້າເຖິງການລະງັບຂະບວນວິວັດທາງດ້ານເສດຖະກິດທີ່ເກີດຂຶ້ນຢູ່ໃນສັງຄົມໂດຍອາໄສລັດ, ເວົ້າເຖິງການຄວບຄຸມຂອງລັດຕໍ່ການພົວພັນທີ່ "ມີລັກສະນະການຄ້າ" ທັງຫລາຍ,ເວົ້າເຖິງຄວາມຈຳເປັນຂອງການກວດກາຢ່າງເປັນປະຈຳກ່ຽວກັບບັນຫາທີ່ວ່າໃນແຕ່ລະກໍລະນີຕ່າງຫາກນັ້ນແມ່ນມີການຮັບປະກັນຜົນປະໂຫຍດຂອງກຸ່ມຄົນ ແລະຜົນປະ

---

໘) ເລນິນ ວ.ຂ, ປະມວນນິພົນຄົບຊຸດ, ເຫລັ້ມ ໔໕, ໜ້າ ໓໗໑.

ໂຫຍດທາງສັງຄົມຫລາຍປານໃດ.

ຖ້າເວົ້າກວ້າງກວ່ານັ້ນກໍແມ່ນເວົ້າເຖິງວິທີການ ແລະ ແບບປະສານສົມທົບລະຫວ່າງລະບອບລວມສູນ ແລະປະຊາທິປະໄຕ, ເຊິ່ງກໍ ຫມາຍ ເຖິງການນຳໃຊ້ການຄວບຄຸມແບບປະຊາທິປະໄຕແຕ່ລຸ່ມຂຶ້ນມາຢ່າງກວ້າງຂວາງ ຢູ່ໃນການຄຸ້ມຄອງສັງຄົມ ສັງຄົມນິຍົມ. ໃນໄລຍະທ້າຍຂອງການເຄື່ອນໄຫວອັນຍິ່ງໃຫຍ່ທາງດ້ານກ່ານຈັດຕັ້ງ ແລະ ດ້ານທິດສະດີຂອງຕົນໂດຍເລີ່ມຈາກກອງປະຊຸມໃຫຍ່ຄັ້ງທີ 10 ຂອງພັກ (ເດືອນມີນາ ປີ ໑໙໒໑) ນັ້ນ, ເລນິນໄດ້ຊີ້ແຈງຢ່າງບໍ່ຮູ້ອິດເມື່ອຍ ແລະ ຢ່າງບໍ່ລົດລະເຖິງຄວາມສຳຄັນຂອງການ ຂະຫຍາຍຄວາມຄິດລິເລີ່ມກັບທີ່ຢູ່ໃນສັງຄົມ ສັງຄົມນິຍົມ. ເລນິນຍາມໃດ ກໍ ໄດ້ເນັ້ນວ່າ, ສັງຄົມນິຍົມນັ້ນຈະມີຄວາມຫມາຍກໍຕໍ່ເມື່ອມັນແມ່ນການປະດິດ ສ້າງຂອງມວນຊົນເອງ, ແມ່ນການເລືອກເອົາຢ່າງຕື່ນຕົວຂອງເຂົາເຈົ້າເທົ່ານັ້ນ. ສິ່ງທີ່ເປັນຕົ້ນຕໍສຳລັບເລນິນນັ້ນກໍຄື ເຮັດແນວໃດເພື່ອນຳເອົາມວນຊົນ ຜູ້ອອກແຮງງານອັນກວ້າງຂວາງ ແລະ ກ່ອນອື່ນຫມົດກໍຄືຊາວນານັ້ນໃຫ້ເຂົ້າຢູ່ໃນລະບົບຂອງການພົວພັນແບບລວມຫມູ່ໂດຍຜ່ານຄວາມຄິດລິເລີ່ມ ແລະ ຫົວຄິດ ປະດິດສ້າງຂອງເຂົາເຈົ້າເອງນັ້ນ. ຕາມທີ່ຜ່ານມານັ້ນສຳລັບເລນິນແມ່ນຍາມໃດກໍພະຍາຍາມດັດແປງການຈັດຕັ້ງການຄຸ້ມຄອງເສດຖະກິດແຫ່ງຊາດ ເພື່ອເຮັດແນວໃດໃຫ້ມີແຕ່ຜູ້ທີ່ເຂົ້າໃຈບັນຫາ, ມີແຕ່ນັກຊ່ຽວຊານເທົ່ານັ້ນທີ່ຮັບຜິດ ຊອບການຄຸ້ມຄອງດັ່ງກ່າວ. ຄວາມເອົາໃຈໃສ່ເນັ້ນຫນັກໃນບັນຫາສະຫະກອນຂອງເລນິນນັ້ນກໍມີສິດຖືໄດ້ວ່າ ເປັນຄວາມພະຍາຍາມເຊັ່ນດຽວກັນນັ້ນ.ສະຫະກອນພາຍໃຕ້ເງື່ອນໄຂຕ່າງໆນັ້ນໄດ້ມີປັດໃຈແຫ່ງຄວາມຄິດລິເລີ່ມຈາກລຸ່ມຂຶ້ນມາທີ່ມີ

ລັກສະນະເຂົ້າໃຈບັນຫາ.

ພູກວິສາຫະກິດແບບສະຫະກອນເຊິ່ງເປັນວິສາຫະກິດທີ່ມີລັກ ສະ ນະ ການຄ້າເອກະຊົນນັ້ນເປັນທີ່ຮູ້ກັນວ່າ ມັນໄດ້ຮັບການປົກປ້ອງອອກ ຈາກ ການ ເຂົ້າຫຍຸ້ງກ່ຽວຈາກພາຍນອກທີ່ບໍ່ເຂົ້າໃຈບັນຫາ, ໃນເວລາດຽວກັນຜູ້ທີ່ນຳພາ ສະຫະກອນນັ້ນແມ່ນຜູ້ທີ່ຮູ້ຈັກຫນ້າວຽກຂອງຕົນ, ເຊິ່ງເປັນຜູ້ທີ່ມີຫຸ້ນ ສ່ວນ ໃນ ການກໍ່ຕັ້ງສະຫະກອນນັ້ນທັງທາງດ້ານສະຕິປັນຍາກໍ່ດີທາງດ້ານຊັບສິນ, ສະນັ້ນ ເຂົາເຈົ້າເອງຈຶ່ງມີຄວາມສົນໃຈໃນການດຳເນີນວຽກງານຢ່າງເຫມາະ ສົມ, ໂດຍເຂົາເຈົ້າເອງມີຄວາມຮັບຜິດຊອບທາງດ້ານວັດຖຸຕໍ່ຜົນໄດ້ຮັບ ຂອງ ວຽກ ງານ.

ໃນຄວາມຫມາຍດັ່ງກ່າວແລ້ວ,ການຖືເອົາວິສາຫະກິດ ແບບ ສະຫະ ກອນເຂົ້າຢູ່ໃນພື້ນຖານຂອງວິທີການຜະລິດແບບສັງຄົມນິຍົມ ນັ້ນອາດຈະຖື ໄດ້ ວ່າເປັນຄືວິທີ ຕາມລັດທິອາດຍາສິດ ວິທີຫນຶ່ງ, ເປັນຄືພາຫານະ ເພື່ອຂະຈັດ "ຄວາມບໍ່ກະທັດຮັດ", ການມີຫລາຍຂັ້ນຕອນ, ແລະ ຈາກນັ້ນກໍ່ດີ ຄວາມ ບໍ່ ຄ່ອງແຄ່ວພໍຂອງວິທີການຄຸ້ມຄອງແບບບໍລິຫານ.

ຕາມທັດສະນະຂອງເລນິນແລ້ວ, ດ້ານດີຂອງວິສາຫະກິດແບບສະຫະ ກອນທີ່ເກີດຂຶ້ນຢູ່ໃນຊົນນະບົດ ແລະ ຢູ່ໃນຕົວເມືອງ ໂດຍທຳມະຊາດ , ອັນ ເນື່ອງມາຈາກຄວາມຮຽກຮ້ອງຕ້ອງການຂອງມະນຸດທີ່ຢາກມີຊີວິດຢູ່ດີຂຶ້ນ ແລະ ຢາກເຮັດວຽກງານຢູ່ໃນສະພາບເງື່ອນໄຂທີ່ດີຂຶ້ນນັ້ນນອກຈາກສິ່ງອື່ນໆ ແລ້ວກໍ່ ແມ່ນຢູ່ບ່ອນວ່າ, ຍ້ອນມີຄວາມຫນັກແຫນ້ນທາງດ້ານເສດຖະກິດ, ສະນັ້ນສະຫະ ກອນກະເສດແມ່ນຢູ່ໃນສະພາບທີ່ສາມາດຮັບປະກັນການພົວພັນທາງດ້ານ ເສດ

ຖະກິດຢ່າງໝັ້ນທ່ຽງລະຫວ່າງຕົວເມືອງແລະຊົນນະບົດ. ໂດຍພາວະວິໄສນັ້ນ, ເນື່ອງມາຈາກທາດແທ້ທາງດ້ານເສດຖະກິດ (ຫລັກການດ້ານການຄ້າ) ຂອງຕົນນັ້ນ, ວິສາຫະກິດແບບສະຫະກອນທັງຢູ່ໃນອຸດສາຫະກຳກໍດີຢູ່ໃນກະສິກຳນັ້ນ ຕ້ອງນຳໄປສູ່ການຟື້ນຟູໂຄງປະກອບຂອງການພົວພັນດ້ານເສດຖະກິດທັງໝົດ, ຢ່າງໜ້ອຍກໍໃນຂອບເຂດຂອງທ້ອງຖິ່ນນັ້ນ, ນຳໄປສູ່ການຟື້ນຟູຕະຫລາດຂອງທ້ອງຖິ່ນ, ເຊິ່ງເປັນບ່ອນຮັບປະກັນການຕອບສະໜອງຄວາມຮຽກຮ້ອງ ຕ້ອງການພື້ນຖານຂອງເຂດນັ້ນ. ສ່ວນຄວາມເປັນເອກະລາດທາງດ້ານເສດຖະກິດໃນສ່ວນໃດສ່ວນໜຶ່ງຂອງເຂດນັ້ນ, ຕາມທັດສະນະຂອງເລນິນແລ້ວແມ່ນເປັນໜຶ່ງໃນບັນດາເງື່ອນໄຂອັນຈຳເປັນຂອງຄວາມໝັ້ນທ່ຽງທາງດ້ານເສດຖະກິດຂອງສັງຄົມທັງມວນ, ຄວາມເປັນເອກະລາດດັ່ງກ່າວບາງເທື່ອ ກໍ ມີ ຄວາມໝາຍສຳຄັນຍິ່ງກວ່າຫລາຍຂະແໜງວຽກງານຂອງລັດຂັ້ນສູນກາງ[1].

ຢູ່ໃນທັດສະນະຄະຕິຂອງເລນິນກ່ຽວກັບລະບອບສັງຄົມນິຍົມ ອັນເປັນລະບອບຂອງບັນດາສະມາຊິກສະຫະກອນທີ່ສີວິໄລນັ້ນໄດ້ເວົ້າລະອຽດເຖິງຫລັກທິດສະດີມາກກ່ຽວກັບການຂະຫຍາຍຕົວທີ່ມີລັກສະນະທຳມະຊາດ ປະຫວັດສາດຂອງລະບອບສັງຄົມນິຍົມ, ກ່ຽວກັບການດັດສ້າງການເຄື່ອນໄຫວດ້ານເສດຖະກິດຂອງສັງຄົມເທື່ອລະກ້າວດັ່ງອັງແກນໄດ້ເວົ້າໄວ້ນັ້ນ[2]. ຫລັກທິດສະດີຂອງເລນິນກ່ຽວກັບສະຫະກອນນັ້ນ ອາດຈະຖືໄດ້ວ່າ ເປັນການເຮັດໃຫ້ແນວຄວາມຄິດຂອງເພິ່ນລະອຽດ ແລະເລິກເຊິ່ງ, ເຊິ່ງແນວຄວາມຄິດນັ້ນກໍຄືວ່າ ຖ້າຮູບ

---

໑) ເລນິນ ວ.ອ, ປະມວນນິພົນຄົບຊຸດ, ເຫລັ້ມ ໔໓, ໜ້າ ໒໓໓.
໒) ມາກ ກ, ອັງແກນ ຟ,ນິພົນພິມຄັ້ງທີ ໒, ເຫລັ້ມ ໓໖, ໜ້າ ໒໒໔.

ແບບເສດຖະກິດໃຫມ່ຫາກໄດ້ຮັບການສ້າງຕັ້ງຂຶ້ນຢ່າງຄ່ອຍເປັນຄ່ອຍໄປກ່ວາ, ຢ່າງເປັນລະບົບກວ່າແລ້ວມັນກໍຈະຫມັ້ນທ່ຽງກວ່າ ແລະການກໍ່ສ້າງສັງຄົມນິຍົມກໍຈະມີພື້ນຖານກວ່າ. ສິ່ງທີ່ມີລັກສະນະ "ເຄິ່ງສັງຄົມນິຍົມ" ດັ່ງກ່າວ, ເຊິ່ງຕົວຢ່າງວ່າມັນເກີດມີຂຶ້ນຢູ່ໃນຊົນນະບົດອັນເປັນຜົນມາຈາກການສ້າງ ຕັ້ງ ຮູບແບບສະຫະກອນຊະນິດຕ່າງໆນັ້ນ, ສຳລັບເລນິນແລ້ວແມ່ນມີລາຄາກວ່າ "ລະບອບກອມມູນິດທີ່ສົມບູນ" ເຊິ່ງເກີດມາຈາກກຳລັດຂອງຂັ້ນເທິງ (ແລະສິ່ງດັ່ງກ່າວນີ້ແມ່ນໄດ້ເຄີຍມີແລ້ວໃນສະໄຫມຂອງ " ລະບອບ ກອມມູນິດ ປາງ ສົງຄາມ"), ເພາະວ່າຕ່າງຈາກກອມມູນແຫ່ງ "ການຜະລິດແລະໃຊ້ສອຍ"ນັ້ນ, ສິ່ງທີ່ມີລັກສະນະ "ເຄິ່ງສັງຄົມນິຍົມ" ແມ່ນເປັນຫມາກຜົນແຫ່ງການ ປະ ດິດສ້າງຂອງມວນຊົນຊາວໄຮ່ນາເອງ.

ທາດແທ້ແຫ່ງຄວາມເຂົ້າໃຈຂອງເລນິນກ່ຽວກັບ "ລະບອບ ຂອງບັນດາສະມາຊິກສະຫະກອນທີ່ສີວິໄລ" ນັ້ນ ອັນທຳອິດ ແມ່ນຢູ່ບ່ອນວ່າວິວັດທະນາການແຫ່ງການຂະຫຍາຍຕົວຂອງການລວມຫມູ່ທີ່ແທ້ຈິງນັ້ນ ຕ້ອງໄປຈາກລຸ່ມຂຶ້ນເທິງ ຫມາຍຄວາມວ່າ ຜ່ານການຂະຫຍາຍກວ້າງອອກເຂດການປະກອບ ສ່ວນຂອງບັນດາຜູ້ຜະລິດໂດຍກົງເຂົ້າໃນສະຫະກອນຂອງຕົນ (ສະຫະກອນການຜະລິດ, ສະຫະກອນບໍລິການ, ສະຫະກອນໃຊ້ສອຍ ແລະ ອື່ນໆ); ອັນທີ ສອງ ແມ່ນຢູ່ບ່ອນວ່າກຳລັງແຮງ ແລະ ຄວາມຫມັ້ນທ່ຽງຂອງລະບອບສັງຄົມນິຍົມອັນເປັນສັງຄົມທີ່ມີລັກສະນະລວມຫມູ່ນັ້ນມັນໄປພ້ອມໆກັບລະດັບ ແລະ ຂອບ ເຂດຂອງການເຂົ້າຮ່ວມຢ່າງຕື່ນຕົວ (ແຕ່ບ່ອນນີ້ແລ້ວຈຶ່ງໄດ້ເວົ້າເຖິງບັນຫາຄວາມມີວັດທະນະທຳ ແລະຄວາມສີວິໄລ) ຂອງບັນດາຜູ້ຜະລິດດັ່ງກ່າວໃນການປະຕິ

ບັດການນຳໃຊ້ຫຼກລະບົບພາຫານະທີ່ແນໃສ່ຜູກພັນຄວາມພະຍາຍາມ ແລະການເຄື່ອນໄຫວຕົວຈິງຂອງເຂົາເຈົ້າ; ກຳລັງແຮງ ແລະຄວາມຫມັ້ນທ່ຽງຂອງລະບອບສັງຄົມນິຍົມນັ້ນຍັງໄປພ້ອມໆກັບຄວາມຫ້າວຫັນທາງດ້ານສັງຄົມຂອງບັນດາຜູ້ຜະລິດດັ່ງກ່າວ; ອັນທີສາມ ແມ່ນຢູ່ບ່ອນວ່າ ແຕ່ລະຄົນເມື່ອຢູ່ໃນລະບອບສັງຄົມນິຍົມແລ້ວຕ້ອງຜູກພັນໂດຍກົງ ຫມາຍຄວາມວ່າຜູກພັນແບບລວມຫມູ່ ກັບລະບອບສັງຄົມນິຍົມ, ຕ້ອງເປັນສະມາຊິກຂອງສຳພັນໃດຫນຶ່ງ, ເປັນ ສະມາຊິກຂອງຫນ່ວຍຮວມຫມູ່ (ສະໂມສອນຕາມຄວາມສົນໃຈ, ສະມາຄົມເພື່ອນບ້ານ, ຄະນະກຳມະການສະຖານທີ່ພັກ, ສະຫະກອນການຜະລິດ-ໃຊ້ສອຍແລະອື່ນໆ).

ທຸກຢ່າງທີ່ກ່າວມານັ້ນໄດ້ເປັນພື້ນຖານໃຫ້ແກ່ຂໍ້ສະຫຼຸບທີ່ວ່າ ເລນິນບໍ່ໄດ້ຈຳກັດເດັດຂາດກ່ຽວກັບສະຖານທີ່ ແລະ ຄວາມຫມາຍຂອງສະຫະກອນ ຢູ່ໃນລະບອບສັງຄົມນິຍົມນັ້ນໄວ້ພຽງແຕ່ໃນຫນ້າທີ່ການທາງດ້ານເສດຖະກິດເທົ່ານັ້ນ. ຕາມທັດສະນະຂອງເລນິນນັ້ນ, ສະຫະກອນຕ້ອງເຮັດແນວໃດ ເພື່ອນຳເອົາວັດທະນະທຳມາສູ່ມວນຊົນ, ຕ້ອງຊ່ວຍຂະຫຍາຍກວ້າງ ກ່ຽວກັບ ຄວາມຫ້າວຫັນທາງດ້ານສັງຄົມຂອງມວນຊົນດັ່ງກ່າວ ແລະ ດ້ວຍເຫດນັ້ນຈະຊ່ວຍໃຫ້ມີການເພີ່ມທະວີຄວາມເພິ່ງພໍໃຈຂອງເຂົາເຈົ້າທາງດ້ານສັງຄົມ. ໃນ ຄວາມຫມາຍທາງກວ້າງຂອງຄຳວ່າ ສະຫະກອນນັ້ນ ກໍຄືລະບົບການຜູກພັນໂດຍ ກົງແບບຮວມຫມູ່ນັ້ນ ເລນິນຖືວ່າເປັນເງື່ອນໄຂພື້ນຖານທີ່ມີຊີວິດຊີວາຂອງລະບອບສັງຄົມນິຍົມ.

# "ການຄົ້ນພົບຄັ້ງທີສອງ" ຂອງສະຫະກອນ

**ຄວາມເສຍຫາຍຂອງການຟ້າວຟັ່ງທີ່ບໍ່ສົມເຫດສົມຜົນ**

ຫລັກທິດສະດີເລນິນກ່ຽວກັບສະຫະກອນນັ້ນບໍ່ໄດ້ຖືກນຳໃຊ້ເຂົ້າໃນຕົວຈິງໃນທັນໃດໂລດ.ຕັ້ງແຕ່ທ້າຍຊຸມປີ ໑໙໒໐, ຂະບວນການສະຫະ ກອນເຊິ່ງໄດ້ເກີດມາຈາກຄວາມຄິດລິເລີ່ມຂອງຊາວຜູ້ອອກແຮງງານນັ້ນໄດ້ຄ່ອຍໆຫົດຕົວເຂົ້າ. ສິ່ງດັ່ງກ່າວນັ້ນມັນກໍມາຈາກຫລາຍສາເຫດທີ່ມີລັກສະນະພາວະວິໄສ ແລະ ອັດຕະວິໄສ. ກ່ຽວກັບບັນດາສາເຫດທີ່ມີລັກສະນະອັດຕະວິໄສນັ້ນພວກເຮົາບໍ່ໄດ້ຖືໂດຍເດັດຂາດວ່າ ມັນມາ ຈາກແຮງຖ່ວງດຶງຂອງທ່າທີທີ່ມີລັກສະນະຕຳນິຕິກັບສະຫະກອນວ່າມັນເປັນ ປາ ກົດການທີ່ບໍ່ມີລັກສະນະ "ສັງຄົມນິຍົມ" ຢູ່ໃນສະໄຫມນັ້ນ. ຄວາມເລິກເຊິ່ງ ທັງຫມົດແຫ່ງຄວາມເຂົ້າໃຈຂອງເລນິນກ່ຽວກັບລະບອບສັງຄົມນິຍົມອັນເປັນ "ລະບອບຂອງບັນດາສະມາຊິກສະຫະກອນທີ່ສີວິໄລ" ນັ້ນບໍ່ໄດ້ໄປເຖິງຄວາມສຳນຶກຂອງບັນດາຜູ້ນຳການເມືອງ, ບັນດາຜູ້ນຳຂອງພັກຫລາຍໆຄົນທີ່ສຸດ, ບໍ່ເວົ້າບັນດາສະມາຊິກທຳມະດາຂອງພັກ, ແລະ ຍິ່ງກວ່ານັ້ນແມ່ນບໍ່ເວົ້າມະຫາຊົນ ທີ່ບໍ່ສັງກັດພັກ. ແນ່ນອນແລ້ວ, ຜູ້ທີ່ຢູ່ "ແຖວຫນ້າ" ຂອງຄວາມບໍ່ເຂົ້າໃຈ ແລະ ຄວາມບໍ່ພໍໃຈດັ່ງກ່າວກໍຄື "ບັນດານັກປະຕິວັດຂັ້ນສູງ", ເຊິ່ງມີຈຳນວນ ຫນຶ່ງນັ້ນແມ່ນຍ້ອນຄວາມເຂົ້າໃຈຜິດໂດຍຈິງໃຈທີ່ມາຈາກລະດັບຄວາມຮູ້ຫນ້ອຍ, ອີກຈຳນວນຫນຶ່ງແມ່ນມາຈາກຜົນສະທ້ອນຂອງຄວາມນຶກຄິດສ່ວນຕົວ ຫລື ເປັນກຸ່ມເຊິ່ງບາງເທື່ອຄວາມນຶກຄິດເຫລົ່ານັ້ນກໍເປັນຄວາມນຶກຄິດທີ່ຫວັງຜົນ ອັນມັກຈະມາຈາກຄວາມພະຍາຍາມຢາກ "ເດັ່ນຂຶ້ນມາ", ເປັນຜູ້ທີ່ມີແນວຄິດ " ຊ້າຍ

ກວ່າຊາຍອີກ". ສ່ວນການທຳມາຫາກິນແບບຮວມໝູ່ຢູ່ໃນຊົນນະບົດ ທີ່ໄດ້ຮັບການສ້າງຕັ້ງຂຶ້ນໂດຍສອດຄ່ອງໃນສ່ວນໃດສ່ວນໜຶ່ງກັບແຜນການສ້າງ ສະຫະກອນຂອງເລນິນນັ້ນຊ້ຳສູນເສຍລັກສະນະ ແລະ ທາດແທ້ຂອງສຳພັນ ການຜະລິດແບບສະຫະກອນຢ່າງໄວວາທີ່ສຸດ ຫລື ບາງທີ ກໍແມ່ນຕັ້ງແຕ່ເລີ່ມຕົ້ນໂລດ, ເຊິ່ງກ່ອນອື່ນກໍແມ່ນສູນເສຍຫລັກການແຫ່ງຄວາມເປັນເຈົ້າຕົນເອງທາງ ດ້ານເສດຖະກິດ, ສູນເສຍການຊຸ້ມຄອງດ້ວຍຕົນເອງ, ການກຸ້ມຕົນເອງທາງດ້ານການເງິນ. ຜົນກໍຄືທາດແທ້ອັນເລິກເຊິ່ງຂອງແນວຄວາມຄິດກ່ຽວກັບ ສະ ຫະກອນ, ເນື້ອໃນທາງດ້ານເສດຖະກິດສັງຄົມຂອງມັນ ແລະ ຮູບການທີ່ ແຕກຕ່າງກັນຢ່າງຫລວງຫລາຍນັ້ນໄດ້ກາຍມາ ຍັງເຫລືອແຕ່ອັນດຽວ, ຮູບ ແບບດຽວນັ້ນຄື ຮູບແບບ <u>ໂກນໂຄ</u>. ສິ່ງດັ່ງກ່າວນີ້ໄດ້ທຳຄວາມເສຍຫາຍຢ່າງເຫັນໄດ້ຊັດທີ່ສຸດ, ເຫັນໄດ້ຊັດຈົນສູ່ມັນຕີການສ້າງຕັ້ງ ແລະ ຂະຫຍາຍ "ການຫັນເປັນສະຫະກອນຂອງປະເທດລັດເຊຍ" (ເລນິນ) ເຊິ່ງເປັນລັດທຳອິດທີ່ ໄດ້ເຂົ້າສູ່ເສັ້ນທາງແຫ່ງການດັດສ້າງສັງຄົມນິຍົມ. "ການເອົາເປັນຂອງຮວມໝູ່ຢ່າງເດັດຂາດ" ກ່ຽວກັບພາຫານະການຜະລິດຢູ່ໃນທຸກຂົງເຂດເສດຖະ ກິດແຫ່ງຊາດ, ໂດຍການອອກດຳລັດເພື່ອນຳເອົາພາຫານະເຫລົ່ານັ້ນໃຫ້ໄປຢູ່ໃນກຳມະສິດຂອງລັດນັ້ນໄດ້ທຳຄວາມເສຍຫາຍໃຫ້ແກ່ຮູບການຂອງກຳມະສິດແບບສະຫະກອນຢ່າງຫລີກລ່ຽງ. ສຽງສະທ້ອນແຫ່ງສະໄໝທີ່ "ບໍ່ປະນີປະນອມ " ດັ່ງກ່າວນັ້ນ ຍັງໄດ້ດັງກັງວານຢູ່ເປັນເວລາດົນນານ. ເຊັ່ນວ່າ, ໃນຕົ້ນຊຸມປີ ໑໙໓໐ ນັ້ນ ຄວາມຮ້ອນໃຈແບບບໍລິຫານຂອງ "ບັນດາຜູ້ປະຕິເສດ" ສະ ຫະກອນນັ້ນ ໃນຕົວຈິງແລ້ວ ໄດ້ພາໄປເຖິງການຈົບສິ້ນຂອງສະຫະກອນຫັດຖະກຳ

ໂດຍໄດ້ເຮັດໃຫ້ມັນກາຍເປັນວິສາຫະກິດແຫ່ງລັດຊະນິດຕ່າງໆທີ່ຂຶ້ນກັບກະຊວງອຸດສາຫະກຳທ້ອງຖິ່ນ. ແລະ ກໍບໍ່ມີໃຜຈະສະດຸດໃຈໃນສະພາບທີ່ວ່າ ບໍ່ມີ ປະເທດໃນວົງຄະນາຍາດສັງຄົມນິຍົມປະເທດໃດເລີຍທີ່ໄດ້ສະແດງໃຫ້ເຫັນ ເຖິງ ຄວາມຟ້າວຟັ່ງດັ່ງກ່າວຢູ່ໃນ "ບັນຫາສະຫະກອນ", ເຖິງວ່າຢູ່ໃນ ບາງ ປະເທດໃນນັ້ນ (ຕົວຢ່າງຢູ່ ສປຢ) ລະດັບການປະກອບເຕັກນິກຂອງສະຫະກອນຫັດຖະກຳໃນປະຈຸບັນນີ້ແມ່ນສູງກວ່າຢູ່ ສສສຊ ໃນປີ ໑໙໖໔. ກົງ ກັນ ຂ້າມ ເຊັ່ນຢູ່ ເຊັກໂກສະໂລວາກີນັ້ນ ສ່ວນປະກອບຂອງສະຫະກອນຫັດຖະກຳ ຢູ່ໃນການຜະລິດລວມທັງໝົດຂອງອຸດສາຫະກຳນັ້ນແມ່ນເພີ່ມຂຶ້ນໃນແຕ່ລະປີ: ປະຈຸບັນນີ້ ຢູ່ເຊັກໂກສະໂລວາກີ ມີສະຫະກອນຫັດຖະກຳຫລາຍຮ້ອຍແຫ່ງ ທີ່ ຮວມເອົາສະມາຊິກສະຫະກອນເກືອບ ໔ ພັນຄົນ. ສະຫະກອນເຫລົ່ານັ້ນມີວິສາຫະກິດຢູ່ເຖິງ ໘ ພັນແຫ່ງ.

ຢູ່ສະຫະພາບໂຊວຽດນັ້ນ, ການຫັນປ່ຽນກ່ຽວກັບທ່າທີທີ່ມີຕໍ່ ສະ ຫະກອນນັ້ນຫາກໍມີຫລັງຈາກກອງປະຊຸມຄົບຄະນະໃນເດືອນເມສາ(໑໙໘໕) ຂອງຄະນະກຳມະການສູນກາງພັກກອມມູນິດ ແຫ່ງ ສະຫະພາບໂຊວຽດນີ້ເທົ່ານັ້ນ. ໜຶ່ງໃນບັນດາຈຸດໝາຍຂອງການເລີ່ມຕົ້ນການກໍ່ສ້າງຄືນໃໝ່ຢູ່ໃນປະເທດໃນພູກອົງເຂດທີ່ສຳຄັນຂອງການເຄື່ອນໄຫວທາງດ້ານເສດຖະກິດ ແລະ ສັງ ຄົມການເມືອງນັ້ນກໍຄື "ການຟື້ນຊີວິດ" ໃຫ້ແກ່ຮູບການຂອງການເຄື່ອນ ໄຫວອອກແຮງງານແບບສະຫະກອນ. ຜ່ານໄປແລ້ວສາມສິບປີແຫ່ງການຕໍ່ສູ້ ເຊິ່ງບາງໄລຍະກໍມິດມອດໄປ ບາງໄລຍະກໍລຸກໂຫມຂຶ້ນ ອັນເປັນການຕໍ່ສູ້ທາງດ້ານທິດສະດີ ແລະ ທີ່ອະນາດໃຈກວ່ານັ້ນກໍຄືການຕໍ່ສູ້ທີ່ມີລັກສະນະການທະຫານໃນ

ພາກປະຕິບັດຕົວຈິງ ເພື່ອຕ້ານກັບການຜະລິດແບບສະຫະກອນເຊິ່ງຖືວ່າ ເປັນ "ສິ່ງກີດຂວາງ" ບົນເສັ້ນທາງແຫ່ງການຂະຫຍາຍກຳລັງການຜະລິດຂອງ ປະເທດຄືດັ່ງທີ່ໄດ້ເຄີຍປະກາດໄວ້ໃນຕອນຕົ້ນຂອງຊຸມປີ ໑໙໕໐ ນັ້ນ. ປະຈຸບັນນີ້ເປັນທີ່ຍອມຮັບຮູ້ກັນແລ້ວວ່າ ສະຫະກອນບໍ່ພຽງແຕ່ບໍ່ຂັດຂວາງ ຂະບວນ ວິວັດດ້ານເສດຖະກິດອັນເປັນຄືສິ່ງທີ່ເອີ້ນວ່າ "ປະເພດທີສອງ" ແລະ "ບໍ່ມີລູ່ທາງກ້າວໜ້າ", ແຕ່ກົງກັນຂ້າມສະຫະກອນສາມາດຖືໄດ້ຢ່າງມີພື້ນຖານສົມບູນວ່າ ເປັນຄືໜຶ່ງໃນບັນດາເງື່ອນໄຂທີ່ຂາດບໍ່ໄດ້ຂອງຂະບວນວິວັດດ້ານ ເດສຖະກິດດັ່ງກ່າວ.

ຍິ່ງໄປກວ່ານັ້ນ, ປະຈຸບັນນີ້ຕ່າງກໍເຫັນແຈ້ງກວ່າເກົ່າວ່າຂໍ້ຫຍຸ້ງຍາກ ໃນການດຳລົງຊີວິດຫລາຍຢ່າງ, ຄວາມຫລ້າຫລັງຂອງກະສິກຳນັ້ນແມ່ນພົວພັນ ໂດຍກົງກັບນະໂຍບາຍກ່ຽວກັບທີ່ດິນ ແລະ ສັງຄົມໃນເມື່ອກ່ອນທີ່ປະຕິເສດທ່າແຮງຂອງສະຫະກອນ[໑].

ເປັນອັນວ່າ, ສະຫະກອນໄດ້ຄ່ອຍໆຟື້ນຟູທີ່ຕັ້ງຂອງຕົນຄືນຢູ່ໃນ ການເຄື່ອນໄຫວຂອງສັງຄົມ. ໄດ້ມີການກະກຽມຮ່າງວິທີທາງດ້ານກົດໝາຍ ເພື່ອປ້ອງກັນສະຫະກອນຈາກການໃຊ້ອຳນາດບໍລິຫານຕາມລຳພັງໃຈ; ໄດ້ມີ ບາດກ້າວຕົວຈິງໃນການຟື້ນຟູສະຫະກອນໃຊ້ສອຍ, ຟື້ນຟູບົດບາດຂອງມັນຢູ່ໃນການ ຕອບສະໜອງຜະລິດພັນທັນຍາຫານໃຫ້ແກ່ພົນລະເມືອງ; ໄດ້ມີການຂະຫຍາຍ

---

໑) ເອກະສານຂອງກອງປະຊຸມຄົບຄະນະ ຂອງຄະນະກຳມະການສູນກາງພັກກອມມູນິດແຫ່ງ ສະຫະພາບໂຊວຽດ, ວັນທີ ໒໗ - ໒໘ ມັງກອນ, ປີ ໑໙໘໗, ມົດສະກູ: ໂປລິດອິດສະດາດ, ໑໙໘໗, ໜ້າ ໙.

ກວ້າງການເປັນເຈົ້າຕົນເອງຂອງໂກນໂຄ, ເຮັດໃຫ້ມັນມີລັກສະນະຂອງ ສະຫະກອນຫລາຍອັນ, ໝາຍຄວາມວ່າ ໃຫ້ມັນເປັນວິສາຫະກິດແບບຈັດຕັ້ງດ້ວຍຕົນເອງ, ດຳເນີນການເຄື່ອນໄຫວບົນພື້ນຖານການກຸ້ມຕົນເອງທາງດ້ານການເງິນ ແລະ ການຖືມຊຸມດ້ວຍຕົນເອງ. ປະຈຸບັນນີ້ຫລາຍຄົນໄດ້ເຊື່ອແລ້ວ ວ່າສະຫະກອນສາມາດລຶບລ້າງສະພາບຂາດແຄນຂອງຕະລາດ ແລະ ຄວາມບໍ່ສະດວກສະບາຍທາງດ້ານການດຳລົງຊີວິດ, ສາມາດເຮັດໃຫ້ຂະແໜງການ ຮັບໃຊ້ຊີວິດປະຈຳວັນນັ້ນແກ້ໄຂລະບົບ "ການຮັບໃຊ້ອ່ອນ" ນັ້ນໄດ້...ມັນບໍ່ເປັນສິ່ງບັງເອີນທີ່ໜັງສືພິມ, ວິທະຍຸກະຈາຍສຽງ ແລະ ໂທລະພາບໄດ້ໃຫ້ຄວາມສົນໃຈຢ່າງໃຫຍ່ຫລວງຕໍ່ການເປີດວິສາຫະກິດແບບສະຫະກອນ, ຮ້ານກາ ເຟໃນແຕ່ລະເທື່ອ. ໃນກະໂຕຄຳວ່າ "ສະຫະກອນ" ນັ້ນ ຄວາມຈິງແລ້ວ ກໍໄດ້ກາຍເປັນໜຶ່ງໃນບັນດາສັນຍາລັກຂອງການກໍ່ສ້າງຄືນໃໝ່. ໃນສະພາບແນວຄິດຈິດໃຈທີ່ມີຢູ່ໃນປະຈຸບັນນີ້ນັ້ນແມ່ນມີສິ່ງຄ້າຍຄືກັບເວລາລໍຖ້າການ ເລີ່ມ ຕົ້ນຂອງຊຸມປີ ໑໙໔໐, ເຊິ່ງໃນເວລານັ້ນ, ຢູ່ໃນກອງປະຊຸມໃຫຍ່ຄັ້ງທີ 10 ຂອງພັກ, ຫລັງຈາກການໂຈມຕີສະຫະກອນເປັນເວລາສາມປີວ່າ ເປັນອົງການ ທີ່ມີລັກສະນະພໍ້ຄາ, ເປັນອົງການທີ່ເຊື່ອມຊຶມແນວຄິດນາຍທຶນ ແລ້ວຈາກນັ້ນ ກໍຄ່ອຍໆເກີດມີທ່າທີທີ່ມີສາລະຄະດີຕໍ່ທ່າແຮງທາງດ້ານເສດຖະກິດສັງຄົມຂອງສະຫະກອນ. ແລະ ຖ້າວ່າໃນເວລານັ້ນ, ບົດປາໄສ, ບົດອອກຄວາມເຫັນ,ບົດຂຽນຕ່າງໆຄັ້ງຫລັງສຸດຂອງເລນິນໄດ້ມີຄວາມໝາຍທີ່ມີລັກສະນະຕັດສິນ ໃນການເກີດມີທ່າທີທີ່ມີສາລະຄະດີດັ່ງກ່າວແລ້ວ,ໃນປະຈຸບັນນີ້ຄວາມໝາຍທີ່ມີລັກສະນະຕັດສິນຄືແນວນັ້ນ ແມ່ນອນແລ້ວກໍແມ່ນບົດລາຍງານການເມືອງ ຂອງຄະ

ນະກຳມະການສູນກາງພັກກອມມູນິດແຫ່ງສະຫະພາບໂຊວຽດ ຢູ່ໃນກອງປະຊຸມໃຫຍ່ຄັ້ງທີ 27 ໑).

<u>ຍຸກໃຫມ່ ຮຽກຮ້ອງໃຫ້ມີທ່າທີແບບໃຫມ່</u> ແນ່ນອນແລ້ວວ່າ,ປະຈຸບັນນີ້,ໃນທ້າຍຊຸມປີ ໑໙໘໐, ພວກເຮົາກໍ່ຕ່າງຈາກເມື່ອກ່ອນນີ້ ຊາວ, ສາມສິບປີ, ຍັງບໍ່ເວົ້າເຖິງໄລຍະດົນກວ່ານັ້ນອີກໃນການອະທິບາຍເຖິງສາເຫດຂອງການຮັກສາສະຫະກອນໄວ້ຢູ່ໃນສັງຄົມ ສັງຄົມນິຍົມ.

ບັນດານັກອຸດົມການກ່ຽວກັບສະຫະກອນພູກຄົນໃນໄລຍະທ້າຍສະຕະວັດທີ 19 ເຖິງເລີ່ມຕົ້ນສະຕະວັດທີ 20 ນັ້ນລ້ວນແຕ່ສະຫລຸບກ່ຽວກັບຄວາມຈຳເປັນຂອງສະຫະກອນນັ້ນວ່າ ແມ່ນມາຈາກຄວາມບໍ່ໄດ້ຮັບການ ກະກຽມພໍທາງດ້ານຈິດໃຈ ແລະ ອຸນສົມບັດຂອງຄົນ ທີ່ເກີດຂຶ້ນມາ ໃນ ສະພາບເງື່ອນໄຂຂອງລະບອບທຶນນິຍົມ ແລະ ກ່ອນອື່ນຫມົດກໍຄືບັນດາຜູ້ຜະລິດນ້ອຍເອກະເທດໃນການທີ່ຈະໄປສູ່ການອອກແຮງງານແບບຮວມຫມູ່ສັງຄົມນິຍົມນັ້ນ.ແນ່ນອນແລ້ວວ່າ, ແຕ່ລະແນວທາງຂອງຂະບວນການສະຫະກອນນັ້ນຕ່າງກໍ ອະທິບາຍ ກ່ຽວກັບທາດແທ້ ແລະ ເນື້ອໃນທາງດ້ານສັງຄົມການເມືອງ ຂອງ ລະບອບຮວມຫມູ່ນັ້ນໄປຕາມຄວາມເຫັນຂອງຕົນ; ແຕ່ຄວາມເຫັນລວມນັ້ນກໍຄືລ້ວນແຕ່ເຊື່ອວ່າ "ສັງຄົມໃນພາຍຫນ້າ" ບໍ່ອາດຈະສາມາດດັບສູນສະພາບ ຈິດໃຈທີ່ມີມາແລ້ວຕັ້ງເປັນຫລາຍໆສະຕະວັດນັ້ນດ້ວຍການຕີບາດດຽວດ້ວຍ "ໄມ້ຄອນ

---

໑) ເອກະສານຂອງກອງປະຊຸມໃຫຍ່ຄັ້ງທີ 27 ຂອງ ພັກກອມມູນິດແຫ່ງສະຫະພາບໂຊວຽດ, ມົດສະກູ, ປີ ໑໙໘໖, ຫນ້າ ໔໐.

3*

ເທົ່າວິເສດ" ໃດໜຶ່ງໄດ້. ສັງຄົມນັ້ນຈຳຕ້ອງເຂົ້າສູ່ເສັ້ນທາງ ແຫ່ງການອົບຮົມບັນດາສະມາຊິກສະຫະກອນຢ່າງເປັນລະບົບ ແລະ ເວົ້າລວມ, ເມື່ອ ມີຄວາມກຽມພ້ອມທາງດ້ານຈິດໃຈນັ້ນພົນລະເມືອງຈະຜັນເອົາກຳໄລສ່ວນຫລາຍເຂົ້າເປັນກຳມະສິດສ່ວນລວມຕາມຄວາມອາດສາມາດ. ໄດ້ມີການຄາດກັນວ່າຫລັກການສູງສຸດຂອງສະຫະກອນຈະສາມາດແກ້ໄຂໜ້າທີ່ການອົບຮົມ ດັ່ງກ່າວນັ້ນໄດ້, ເຊິ່ງຫລັກການສູງສຸດຂອງສະຫະກອນນັ້ນກໍຄື "ຜົນໄດ້ທຸກຢ່າງ ຂອງສ່ວນບຸກຄົນບໍ່ຕັດຂາດຈາກຄວາມສົມບູນພູນສຸກຂອງທຸກຄົນ"[໑] ແລະ ການຕັ້ງບັນຫາແບບທີ່ວ່ານີ້ ແມ່ນມີພື້ນຖານສົມບູນຢູ່.

ແລະເລນິນໄດ້ເຫັນຄວາມເດັ່ນຂອງສະຫະກອນຢູ່ບ່ອນວ່າ ດ້ານໜຶ່ງມັນເໝາະກັບຈິດຕະສາດ, ເໝາະກັບລະດັບຂອງຊາວນາສາມັນທີ່ສຸດນັ້ນ , ສະຫະກອນຮັກສາເງື່ອນໄຂທາງດ້ານເສດຖະກິດ ເພື່ອຕອບສະໜອງ " ຜົນປະໂຫຍດສ່ວນບຸກຄົນ" ຂອງບັນດາຜູ້ຜະລິດນ້ອຍ, ໝາຍຄວາມວ່າ ເພື່ອຮັກສາສິ່ງກະຕຸ້ນທາງດ້ານເສດຖະກິດທີ່ເຄີຍມີມູນເຊື້ອ, ສ່ວນອີກດ້ານໜຶ່ງ ນັ້ນ, ສະຫະກອນສາມາດດຶງດູດເອົາບັນດາຜູ້ຜະລິດນ້ອຍດັ່ງກ່າວເຂົ້າສູ່ຄວາມ ສີ ວິໄລ, ສູ່ຄວາມຮູ້, ສອນໃຫ້ຊາວນາທີ່ຫລ້າຫລັງຮູ້ຈັກດຳເນີນວຽກງານ ຢ່າງເໝາະສົມ[໒]. ສະຫະກອນໃນກໍລະນີນີ້ຖືວ່າ ເປັນໜຶ່ງໃນບັນດາກົນໄກຂອງ

---

໑) ແນວຄວາມຄິດນີ້ໄດ້ເປັນຄືເສັ້ນຝ້າຍສີແດງທີ່ສອດຮ້ອຍຜ່ານປຶ້ມຂອງ ໜຶ່ງໃນບັນດານັກຊູດົມການຂອງສະຫະກອນໃຊສອຍ ຟ.ສະເຕົາດິງເກີ "ລັດທິມາກ ແລະ ສະຫະກອນໃຊສອຍ", ເຊິ່ງປຶ້ມນີ້ເລນິນໄດ້ອ່ານໃນເວລາຂຽນບົດ "ກ່ຽວກັບສະຫະກອນ". ບ.ກ.

໒) ເລນິນ ວ.ອ, ປະມວນນິພົນຄົບຊຸດ, ເຫລັ້ມ ໔໕, ໜ້າ ໓໗໗.

ການປະຕິວັດວັດທະນະທຳ ທີ່ຊ່ວຍຂະຈັດ ຂໍ້ຂັດແຍ່ງລະຫວ່າງເນື້ອໃນ ການເມືອງ ທີ່ມີລັກສະນະປະຕິວັດ ແລະນຳໜ້າຂອງການປະຕິວັດເດືອນຕຸລາແລະເງື່ອນໄຂທີ່ຈຳເປັນທາງດ້ານວັດທະນະທຳຂອງມັນ ເຊິ່ງເກີດຈາກຄວາມຫລ້າຫລັງທາງດ້ານເສດຖະກິດຂອງຈັກພົບລັດເຊຍເກົ່າ. ເລນິນ ໄດ້ຂຽນໄວ້ວ່າ: " ແລະວຽກງານດ້ານວັດທະນະທຳຢູ່ໃນຊາວນາອັນເປັນຄື ເປົ້າໝາຍ ດ້ານເສດຖະກິດນັ້ນ, ສິ່ງທີ່ແນໃສ່ເປົ້າໝາຍດັ່ງກ່າວກໍຄືການຫັນເປັນສະຫະກອນນີ້ຂອງ"[1]. ພິເສດໃນຕອນທ້າຍຂອງບົດ "ກ່ຽວກັບສະຫະກອນ" ນັ້ນ ເລນິນໄດ້ຕຳນິການຕີລາຄາຕ່ຳ ໃນຄວາມອາດສາມາດຊຸກຍູ້ການຂະຫຍາຍວັດທະນະທຳຂອງປະເທດໃຫ້ໄວຂຶ້ນ, ບັນລຸເຖິງ "ຄວາມສີວິໄລ" ຂອງການຂະຫຍາຍວັດທະນະທຳດັ່ງກ່າວດ້ວຍການກະຕຸ້ນ "ແຕ່ເທິງ", ດ້ວຍອຳນາດລັດສັງຄົມນິຍົມ, ດ້ວຍການກະຕຸ້ນຂອງຂະບວນການສະຫະກອນ[2].

ປະຈຸບັນນີ້ພວກເຮົາຢັ້ງຢືນເຖິງຄວາມຈຳເປັນຮັກສາ ແລະຂະຫຍາຍສະຫະກອນໂດຍອີງໃສ່ "ສະພາບຈິດໃຈ" ແບບໜຶ່ງອີກຕ່າງຫາກ, ອີງໃສ່ຈຸດລັກສະນະດ້ານຈິດໃຈແບບໜຶ່ງອີກຕ່າງຫາກ. ຖ້າວ່າ ໃນເມື່ອກ່ອນນີ້ ສະຫະກອນຜູກພັນກັບຄວາມບໍ່ພຽງພໍດ້ານຄວາມສີວິໄລ, ກັບຄວາມຖ່ວງດຶງ, ກັບຄວາມບໍ່ເຄື່ອນເໜັງ ຂອງການຄິດອ່ານແບບຊາວນາຫລ້າຫລັງນັ້ນ, ດຽວນີ້ ສະຫະກອນຜູກພັນກັບບັນດາຈຸດລັກສະນະທີ່ກົງກັນຂ້າມກັບໃນເມື່ອກ່ອນຢ່າງສິ້ນເຊີງ: ປະຈຸບັນນີ້ຄວາມຮຽກຮ້ອງຕ້ອງການຂອງຄົນ ໃນການເປັນເຈົ້າຕົນເອງຫລາຍ

໑) ເລນິນ ວ.ອ, ປະມວນນິພົນຄົບຊຸດ, ເຫລັ້ມ 45, ໜ້າ 376.

໒) ເລນິນ ວ.ອ., ປະມວນນິພົນຄົບຊຸດ, ເຫລັ້ມ 45, ໜ້າ 371-377.

ຂຶ້ນຢູ່ໃນການອອກແຮງງານ, ພ້ອມກັບຄວາມພະຍາຍາມໃນຕົວຈິງເພື່ອ ເປັນເຈົ້າຂອງໃນການຜະລິດ, ຮັບຜິດຊອບທາງດ້ານວັດຖຸ ແລະ ຈິດໃຈຕໍ່ການຜະລິດ, ສິ່ງພົນສະທ້ອນຕໍ່ການຈັດຕັ້ງການຜະລິດນັ້ນໄດ້ຟົດຟື້ນຂຶ້ນ (ທັງນີ້ກໍ ຍ້ອນຜົນສຳເລັດຂອງນະໂຍບາຍດ້ານການສຶກສາຂອງລັດໂຊວຽດ).

ຢູ່ໃນຂ່າວສານໂຊວຽດໄລຍະຫລັງນີ້ໄດ້ມີບົດຕ່າງໆຫລາຍບົດ ທີ່ເວົ້າກ່ຽວກັບວິສາຫະກິດແບບສະຫະກອນ ເຊິ່ງຕ່າງກໍລົ້ມລືນເຖິງແນວຄວາມຄິດ ທີ່ວ່າ: ຜູ້ຄົນສ່ວນຫລາຍເລືອກເອົາສະຫະກອນຂະໜາດນ້ອຍ, ເພາະວ່າ ມັນໃຫ້ຄວາມເປັນເຈົ້າຕົນເອງໃນການອອກແຮງງານຫລາຍກວ່າ, ໃຫ້ຄວາມ ຮູ້ສຶກເປັນເຈົ້າຂອງຫລາຍກວ່າ, ມັນສ້າງເງື່ອນໄຂອັນດີເລີດໂດຍກົງ ເພື່ອໃຫ້ເກີດຄວາມຊຳນິຊຳນານ, ຄວາມຊ່ຽວຊານ. ບໍ່ເປັນການບັງເອີນທີ່ວ່າໃນປະຈຸບັນນີ້ ປົກກະຕິແລ້ວຜູ້ທີ່ລົງມືສ້າງວິສາຫະກິດແບບສະຫະກອນນັ້ນແມ່ນຜູ້ທີ່ຊ່ຽວຊານວຽກງານ, ຜູ້ທີ່ມີຫົວຄິດລິເລີ່ມຊອກຄົ້ນຫາຄວາມອາດສາມາດແຫ່ງ ການແກ້ໄຂດ້ວຍຕົນເອງ ໂດຍມີການປະດິດສ້າງຢ່າງໃຫຍ່ຫລວງ. ສາມາດ ເຊື່ອໝັ້ນບັນດາຜູ້ຈັດຕັ້ງສະຫະກອນສະໄໝໃໝ່ຢ່າງບໍ່ຕ້ອງສົງໄສວ່າ ຢູ່ ໃນວຽກງານໃໝ່ດັ່ງກ່າວນີ້ ພວກເຂົາເຈົ້າຈະຖືກດຶງດູດຈາກຄວາມອາດສາມາດ ໃນຄວາມຮູ້ສຶກວ່າ ຕົນເປັນເຈົ້າຢູ່ໃນການອອກແຮງງານ, ຈາກຄວາມອາດ ສາມາດອອກຄວາມຄິດລິເລີ່ມສ່ວນຕົວ, ຄວາມຊ່ຽວຊານນັ້ນຫລາຍກວ່າ ການໄດ້ຮັບຄ່າແຮງງານສູງ.

ສິ່ງຕ່າງໆດັ່ງກ່າວທັງໝົດນັ້ນ ໄດ້ເປັນລືການບອກກ່າວທີ່ຊົງ ພະລັງໃຫ້ແກ່ບັນດານັກປາດອາຈານຝ່າຍວິທະຍາສາດສັງຄົມ ເຖິງແນວທາງການຄົ້ນ

ຄວ້າໃໝ່ທີ່ສຳຄັນກ່ຽວກັບສາເຫດແຫ່ງຄວາມໜັກແໜ້ນຂອງສະຫະກອນເຊິ່ງຍັງບໍ່ທັນໄດ້ຮັບການສຶກສາເບິ່ງເທື່ອ, ກ່ຽວກັບການຄົ້ນຄິດເຖິງການທີ່ຍັງ ຮັກສາຄວາມຮຽກຮ້ອງຕ້ອງການຂອງສັງຄົມຕໍ່ສະຫະກອນນັ້ນຢ່າງເລິກເຊິ່ງ ກວ່າເກົ່າ. ມັນບໍ່ເປັນການບັງເອີນທີ່ວ່າ ຢູ່ໃນເອກະສານຂອງພັກໄລຍະຫລັງນີ້ໄດ້ຕັ້ງບັນຫາຂຶ້ນຢ່າງຮີບດ່ວນກ່ຽວກັບການສຶກສາ ແລະ ຄຳນວນເຖິງດ້ານຈິດຕະວິທະຍາຂອງການຜະລິດຢ່າງຮອບດ້ານກວ່າເກົ່າ[1]. ເຫັນວ່າ, ເຖິງເວລາແລ້ວທີ່ຈະສົມທົບຮູບແບບຕ່າງໆຂອງການຈັດຕັ້ງການອອກແຮງງານທີ່ຮູ້ຈັກດີສຳລັບລະບອບສັງຄົມນິຍົມຄືການຄຸ້ມຄອງການຜະລິດດ້ວຍຈິດຕະສາດຂອງສ່ວນບຸກຄົນໃນສະໄໝໃໝ່, ດ້ວຍຈິດຕະສາດແຫ່ງການປະດິດສ້າງທາງດ້ານເສດຖະກິດ, ດ້ວຍຄວາມຮຽກຮ້ອງຕ້ອງການພື້ນຖານທາງສັງຄົມທີ່ມີມາແຕ່ ກຳ ເນີດຂອງມະນຸດ. ສິ່ງດັ່ງກ່າວນີ້ມັນສຳຄັນບໍ່ພຽງແຕ່ວ່າ ເພື່ອເຮັດໃຫ້ຄວາມສຳນຶກທີ່ມີຢູ່ກ່ຽວກັບໜ້າທີ່ການທາງດ້ານເສດຖະກິດສັງຄົມຂອງຮູບການຈັດຕັ້ງ ການອອກແຮງງານແບບສະຫະກອນນັ້ນເລິກເຊິ່ງຂຶ້ນຕື່ມອີກເທົ່ານັ້ນ, ແຕ່ ຍັງແມ່ນເພື່ອພິສູດເຖິງລັກສະນະພິເສດດ້ານໂຄງປະກອບຂອງລະບອບສັງຄົມນິຍົມ, ພິສູດເຖິງວິທີການແບບສັດຈະວິພາກແຫ່ງການຂະຫຍາຍຕົວຂອງມັນ. ການສືບຕໍ່ໝິ່ນປະໝາດສິ່ງທີ່ດຽວນີ້ພວກເຮົາເອີ້ນວ່າ ປັດໄຈດ້ານມະນຸດນັ້ນ ແມ່ນບໍ່ສົມຄວນອີກແລ້ວ. ຈຳເປັນຕ້ອງຮັບຮູ້ວ່າ ພວກເຮົາໄດ້ຕີລາຄາຄວາມຮູ້ຂອງ ຄົນກ່ຽວກັບມະນຸດນັ້ນສູງເກີນໄປ, ບໍ່ແມ່ນວ່າຍາມໃດພວກເຮົາກໍຄຳນວນເຖິງຄົນ

---

໑) ເອກະສານຂອງກອງປະຊຸມໃຫຍ່ຂອງພັກກອມມູນິດ ແຫ່ງສະຫະພາບ ໂຊວຽດຄັ້ງທີ່ ໒໗, ມົດສະກູ, ໑໙໘໖, ໜ້າ ໓໔.

ໄກແຫ່ງການກະຕຸ້ນການອອກແຮງງານນີ້ຢູ່ນັ້ນ, ເຖິງທາດແທ້ທາງດ້ານຈິດໃຈທີ່ມີລັກສະນະອັດແຍ່ງ, ສັບສົນຂອງມະນຸດ. ຈິດຕະສາດຂອງການ ອອກແຮງງານ, ໂຄງປະກອບຂອງຄວາມຮຽກຮ້ອງຕ້ອງການທາງດ້ານສັງຄົມຂອງສ່ວນບຸກຄົນໃນສະໄໝໃໝ່ນີ້ໄດ້ໃຫ້ຄວາມຮູ້ຫລາຍຢ່າງຫລາຍແນວກວ່າທີ່ໂຄງ ປະກອບດ້ານສັງຄົມ-ຈິນຈຸ້ນຂອງສັງຄົມໄດ້ໃຫ້ແກ່ນັກຄົ້ນຄວ້າ ເພື່ອເຂົ້າໃຈ ເຖິງທາດແທ້ຂອງສະຫະກອນນັ້ນ. ແລະ ຢູ່ໃນບັນຫາດັ່ງກ່າວນີ້ກໍ່ມີຄວາມແຕກຕ່າງກັນຢ່າງຈະແຈ້ງລະຫວ່າງຄວາມເຂົ້າໃຈໃນປະຈຸບັນນີ້ກ່ຽວກັບສາເຫດ ຂອງການຍັງຄົງຮັກສາສະຫະກອນໄວ້ ກັບການອະທິບາຍກ່ຽວກັບທາດແທ້ຂອງ ປາກົດການດັ່ງກ່າວຢູ່ໃນໄລຍະເລີ່ມຕົ້ນຂອງຊຸມປີ ໑໙໔໐.ໃນເມື່ອກ່ອນນັ້ນ,ກ່ອນອື່ນໝົດສະຫະກອນຖືກເອົາໄປຜູກພັນກັບລັກສະນະພິເສດ ຂອງ ໂຄງປະກອບທາງດ້ານຈິນຈຸ້ນຂອງສັງຄົມໃນໄລຍະຂ້າມຜ່ານ, ເຊິ່ງຢູ່ໃນປະເທດ ຍັງຄົງມີບັນດາເຈົ້າຂອງທຸລະກິດຂະໜາດນ້ອຍຕັ້ງເປັນລ້ານໆຄົນ[໑], ສະນັ້ນ ຈິ່ງມັນຖືກັນວ່າ ເສັ້ນທາງແຫ່ງການຂຶ້ນສູ່ສັງຄົມນິຍົມໂດຍຜ່ານສະຫະກອນທີ່ຄົງຕົວ ຢູ່ຮ່ວມກັນກັບລະບອບສັງຄົມນິຍົມນັ້ນເປັນຄື ການປະນີປະນອມອັນເນື່ອງມາຈາກຄວາມຫລ້າຫລັງຂອງປະເທດລັດເຊຍ, ເປັນຄືເສັ້ນທາງພິເສດທີ່ບໍ່ມີລັກສະນະທົ່ວໄປຂອງການອອກຈາກລະບອບທຶນນິຍົມໄປສູ່ສັງຄົມແບບລວມໝູ່.ຈາກບ່ອນນັ້ນຈິ່ງໄປເຖິງການເຊື່ອໝັ້ນວ່າ ອັດຕາສ່ວນຂອງສະຫະກອນຢູ່ໃນ ປະເທດທີ່ເຂົ້າສູ່ເສັ້ນທາງແຫ່ງສັງຄົມນິຍົມນັ້ນຈະເປັນໄປແບບກົງກັນຂ້າມກັບລະດັບການຂະຫຍາຍຕົວຂອງອຸດສາຫະກຳຢູ່ໃນປະເທດນັ້ນ, ແລະ ກໍ່ຄົງກັນຂ້າມກັບ ລະ

---

໑) ເລນິນ ວ.ອ, ປະມວນນິພົນຄົບຊຸດ, ເຫລັ້ມ 43,ໜ້າ 226,227.

ດັບການເຂົ້າເຖິງຫມາກຜົນແຫ່ງຄວາມສີວິໄລຂອງພົນລະເມືອງ, ເຊິ່ງກໍຫມາຍຄວາມວ່າ ຖ້າອຸດສາຫະກຳຂະຫນາດໃຫຍ່ນັ້ນຫາກ "ດັດສ້າງ" ຜູ້ຜະລິດນ້ອຍໄດ້ຍິ່ງຫນ້ອຍເທົ່າໃດ ການປະນີປະນອມໃຫ້ມີເສລີພາບແກ່ຜູ້ຜະລິດນ້ອຍນັ້ນກໍຍິ່ງຈະຕ້ອງມີຫລາຍເທົ່ານັ້ນ[1] ແລະດ້ວຍເຫດນີ້ຈຶ່ງໄປເຖິງຂໍ້ສະຫລຸບທີ່ວ່າ: "ຢູ່ໃນປະເທດທີ່ມີການຜະລິດຂະຫນາດໃຫຍ່ນັ້ນ, ການກໍ່ສ້າງລັດແຫ່ງຊົນຊັ້ນ ກຳມາຊີບແມ່ນປະຕິບັດສຳເລັດໄດ້ງ່າຍກວ່າຢູ່ໃນປະເທດທີ່ມີການຜະລິດນ້ອຍເປັນສ່ວນຫລາຍ"[2].

ອີກເທື່ອຫນຶ່ງພວກເຮົາຂໍລົມຄືນວ່າ ຢູ່ໃນບົດ "ກ່ຽວກັບສະຫະກອນ" ຢູ່ໃນທັດສະນະຄະຕິດັ່ງກ່າວນີ້ຂອງເສັ້ນທາງທີ່ເນັ່ງຊີ້ໄປສູ່ການຜະລິດ ແບບອຸດສາຫະກຳສັງຄົມນິຍົມຂະຫນາດໃຫຍ່ນັ້ນໄດ້ມີການປ່ຽນແປງໃຫມ່ຢ່າງຈະແຈ້ງ, ແລະ ຫລັກທິດສະດີກ່ຽວກັບສະຫະກອນນັ້ນກໍໄດ້ມີລັກສະນະຮອບດ້ານຢ່າງຫຼວງຫລາຍ. ແຕ່ເຖິງຢ່າງໃດກໍຕາມ, ໃນເວລານັ້ນການເອົາສະຫະກອນ ໄປຜູກພັນກັບລັກສະນະກະແຈກກະຈາຍຂອງຜູ້ຜະລິດນ້ອຍນັ້ນຍັງຄົງມີຢູ່, ຍັງຄົງ ມີຄວາມເຊື່ອຖືທີ່ວ່າ, ຢູ່ໃນເງື່ອນໄຂອື່ນທີ່ດີກວ່ານັ້ນສາມາດທີ່ຈະບໍ່ໃຫ້ມີ ສະຫະກອນກໍໄດ້ (ເວົ້າແລ້ວ, ຈົນເຖິງປະຈຸບັນນີ້ຍັງມີນັກຄົ້ນຄວ້າ, ນັກເສດຖະສາດຫລາຍຄົນ ທີ່ບໍ່ທັນປະຖິ້ມຄວາມເຫັນທີ່ວ່າ, ເສັ້ນທາງອອກຈາກ ລະບອບທຶນນິຍົມໄປສູ່ລະບອບສັງຄົມນິຍົມໂດຍຜ່ານການຂະຫຍາຍສະຫະກອນ ຢ່າງກວ້າງຂວາງນັ້ນ ແມ່ນເສັ້ນທາງສະເພາະສ່ວນຫລວງຫລາຍຂອງ ບັນດາ ປະ

---

1) ເລນິນ ວ.ອ, ປະມວນນິພົນຄົບຊຸດ, ເຫລັ້ມ ໔໓, ຫນ້າ ໒໘.
2) ເລນິນ ວ.ອ, ປະມວນນິພົນຄົບຊຸດ, ເຫລັ້ມ ໔໓, ຫນ້າ ໓໐.

ເທດກະສິກຳເທົ່ານັ້ນ).

ແຕ່ມັນເຖິງເວລາແລ້ວທີ່ຈະຕ້ອງໄດ້ຮັບຮູ້ວ່າຢູ່ໃນຊີວິດຕົວຈິງນັ້ນ ມັກຈະມີສິ່ງທີ່ເກີດຂຶ້ນແບບກົງກັນຂ້າມກັນໂດຍກົງ. ຢູ່ໃນບັນດາປະເທດ ສັງຄົມນິຍົມເອີຣົບທີ່ຂະຫຍາຍຕົວສູງກວ່າໝູ່ (ຕົວຢ່າງຢູ່ ສປຢ) ນັ້ນ ຂະບວນ ວິວັດແຫ່ງການຫັນເອົາພາຫານະການຜະລິດໄປເປັນຂອງຮວມໝູ່ນັ້ນຊ້ຳແຮງສັບສົນກວ່າໝູ່; ຈົນເຖິງປີ ໑໙໗໑ ຢູ່ໃນປະເທດ ສ ປ ຢ ນີ້ ການຜະລິດດ້ານອຸດສາຫະກຳເຖິງ ໑໔% ຍັງເປັນຂອງພາກສ່ວນເອກະຊົນ ຫລືມີລັກສະນະ ເຄິ່ງລັດ. ຖ້າທຽບໃສ່ບັນດາປະເທດສັງຄົມນິຍົມເອີຣົບອື່ນໆນັ້ນ, ຢູ່ ສ ປ ຢ ນີ້ແມ່ນການຜະລິດດ້ານຫັດຖະກຳຂະໜາດນ້ອຍຂອງເອກະຊົນທີ່ມີ ຄວາມ ໝັ້ນທ່ຽງຫລາຍກວ່າໝູ່, ຄວາມຮຽກຮ້ອງຕ້ອງການ ຄວາມມີເສລີພາບຂອງຜູ້ຜະລິດນ້ອຍນັ້ນກໍມີຫລາຍກວ່າໝູ່. ດັ່ງນັ້ນ, ໂດຍກົງກັນຂ້າມກັບການກະຕວງໃນຕອນທຳອິດ, ສະຫະກອນແມ່ນໄດ້ຖືກແຜ່ຂະຫຍາຍຫລາຍກວ່າໝູ່ກໍແມ່ນ ຢູ່ໃນບັນດາປະເທດສັງຄົມນິຍົມທີ່ມີສະພາບເງື່ອນໄຂຂອງການເລີ່ມຕົ້ນທີ່ດີນ້ອຍ.

ຈາກນັ້ນ, ດຽວນີ້ ພວກເຮົາໄດ້ເຫັນແຈ້ງກວ່າເກົ່າກ່ຽວກັບ ຂອບເຂດທີ່ແທ້ຈິງຂອງການເຮັດໃຫ້ການຜະລິດມີລັກສະນະຂອງທົ່ວລັດ, ເຂົ້າໃຈແຈ້ງກວ່າເກົ່າວ່າ ເປັນຫຍັງສັງຄົມນິຍົມຈຶ່ງບໍ່ສາມາດປາສະຈາກສະຫະ ກອນໄດ້.

ແມ່ນແລ້ວ, ບົດຮຽນຂອງສັງຄົມນິຍົມໄດ້ຢັ້ງຢືນຢ່າງສົມບູນໃນຄວາມໝາຍທີ່ມີລັກສະນະຕັດສິນຂອງຮູບການກຳມະສິດຮວມໝູ່ຂອງລັດຢູ່ໃນຊີວິດຕົວຈິງແຫ່ງສັງຄົມ ສັງຄົມນິຍົມ. ຮູບການດັ່ງກ່າວນີ້ຮັບປະກັນເຖິງຄວາມ ໝັ້ນ

ທ່ຽງທາງດ້ານການເມືອງຂອງສັງຄົມ ສັງຄົມນິຍົມ, ເພາະວ່າມັນ ສາ ມາດ ຊ່ວຍປະຕິບັດການຜະລິດຄືນຢ່າງມີແຜນການຢູ່ໃນທຸກໆສະພາບເງື່ອນໄຂ ພົ້ນ ຖານແຫ່ງຊີວິດຕົວຈິງ ແລະ ຕັດສິນເຖິງເນື້ອໃນ ແລະ ທິດທາງດ້ານເສດຖະ ກິດສັງຄົມຂອງທຸກຮູບການຈັດຕັ້ງ ການອອກແຮງງານອື່ນໆທີ່ບໍ່ແມ່ນແບບ ລັດ. ແຕ່ວ່າໃນອີກດ້ານໜຶ່ງນັ້ນ, ບົດຮຽນດັ່ງກ່າວຂອງລະບອບສັງຄົມນິຍົມ ທີ່ເປັນ ຈິງໄດ້ຊີ້ໃຫ້ເຫັນເຖິງຄວາມພະຍາຍາມອັນເປົ່າປະໂຫຍດໃນການຢາກ ບັນ ລຸ ເຖິງການເຮັດໃຫ້ການຜະລິດມີລັກສະນະຂອງທົ່ວລັດຢ່າງ<u>ຮອບດ້ານ</u>, <u>ຢ່າງເດັດ ຂາດ</u> (ໝາຍຄວາມວ່າ ສ້າງຕັ້ງການຜະລິດຂອງສັງຄົມທັງໝົດ ຕາມ ຫລັກ ການຂອງໂຮງງານອັນມະຫຶມາໜຶ່ງ): ຫລັງຈາກທີ່ໄດ້ບັນລຸເຖິງລະດັບ ການ ເຮັດໃຫ້ການຜະລິດມີລັກສະນະຂອງທົ່ວລັດ ໃນບັນຫາໃດບັນຫາໜຶ່ງ ແລ້ວນັ້ນ ການສືບຕໍ່ຍົກສູງລະດັບດັ່ງກ່າວນັ້ນບໍ່ພຽງແຕ່ບໍ່ເຮັດໃຫ້ມີການເພີ່ມປະສິດທິພາບ ແຫ່ງການຜະລິດຂອງສັງຄົມເທົ່ານັ້ນ ແຕ່ກົງກັນຂ້າມຍັງຈະພາໄປສູ່ການລົດປະ ສິດທິພາບດັ່ງກ່າວຊ້ຳ. ຍ້ອນເຫດນັ້ນແລ້ວ, ຫລັງຈາກຄວາມພະຍາຍາມທີ່ຈະ ໃຫ້ບັນລຸເຖິງການເຮັດໃຫ້ອຸດສາຫະກຳ, ການຄ້າ, ຂະແໜງ ການ ຮັບໃຊ້ ແລະແມ່ນແຕ່ພາກສ່ວນກະສິກຳກາຍເປັນຂອງທົ່ວລັດນັ້ນ ເກືອບວ່າໃນ ທັນໃດ ນັ້ນກໍຈະເລີ່ມມີຂະບວນເຄື່ອນໄຫວໄປໃນທິດກົງກັນຂ້າມນັ້ນກໍຄື:ການຟື້ນກິດຈະ ການຂອງສະຫະກອນທີ່ໄດ້ຖືກລົບລ້າງໄປໃນເມື່ອກ່ອນນັ້ນຄືນມາ, ທຸລະກິດສຳ ຮອງຂອງສ່ວນບຸກຄົນກໍເລີ່ມຂະຫຍາຍຕົວຂຶ້ນອີກ, ໄດ້ມີຂໍ້ກຳນົດກົດໝາຍແລະ ຮູບແບບຕ່າງໆຂອງການເຄື່ອນໄຫວຂອງສ່ວນບຸກຄົນ, ຂອງນັກທຸລະກິດ.ເປັນ ຄວາມຈິງທີ່ວ່າ ກົດໝາຍແຫ່ງສັດຈະວິພາກນັ້ນ ມີອຳນາດທຸກຢ່າງ. ບໍ່ມີ ວິທີ

ການອອກຄຳສັ່ງໃດໆທີ່ຈະສາມາດ "ເອົາຊະນະ" ທ່າອຽງພື້ນຖານຂອງການເຄື່ອນໄຫວດ້ານເສດຖະກິດນັ້ນ ກໍ່ຄືການດຶງດູດໄປສູ່ຮູບແບບການ ອອກ ແຮງງານທີ່ມີຫລາຍຮູບຫລາຍແບບຂອງມັນ. ບໍ່ເປັນການບັງເອີນທີ່ວ່າ ໃນໄລຍະປີຫລັງໆນີ້ ໄດ້ມີການເຊື່ອວ່າ ບໍ່ມີແບບແຜນຕົວຢ່າງເອກະພາບໃດໜຶ່ງ ທີ່ ບໍ່ມີການປ່ຽນແປງ ແລະ ຂຶ້ນກັບຊີວິດສັງຄົມທັງໝົດນັ້ນ ເວົ້າລວມຈະ ສາມາດຖືໄດ້ວ່າ ເປັນຄືເປົ້າໝາຍຂອງການຂະຫຍາຍຕົວທາງດ້ານປະຫວັດສາດ. ໂດຍສະເພາະຢ່າງຍິ່ງແມ່ນການຂະຫຍາຍຕົວແບບສັງຄົມນິຍົມນັ້ນ.

ເປັນອັນວ່າ, ຍ້ອນມີບົດຮຽນແຫ່ງການດຳເນີນທຸລະກິດສັງຄົມນິຍົມທີ່ໄດ້ສະສົມໄວ້ນັ້ນ ຈຶ່ງເປັນອັນຈະແຈ້ງວ່າ ວິທີຂອງການວາງແຜນການ, ການລວມສູນ ແລະ ການປະສານວຽກງານການຜະລິດທີ່ເປັນລັກສະນະ ສະເພາະສຳລັບໂຮງງານອຸດສາຫະກຳຂະໜາດໃຫຍ່ນັ້ນບໍ່ສາມາດຈະນຳມາໃຊ້ ຢູ່ ໃນຂອບເຂດຂອງທົ່ວທັງສັງຄົມໄດ້. ການເພີ່ມຈຳນວນເປົ້າໝາຍແຫ່ງ ການຊຸມຄອງນັ້ນບໍ່ອາດຈະເປັນໄປຢ່າງບໍ່ມີຂອບເຂດໄດ້. ຍ້ອນສາເຫດດັ່ງກ່າວ ນັ້ນແລ້ວ ຈຶ່ງພາໃຫ້ມີເຫດການທີ່ວ່າ ໂດຍເປັນໄປຕາມລະດັບແຫ່ງການຂະຫຍາຍຕົວຂອງເສດຖະກິດນັ້ນ, ການຂະຫຍາຍຕົວຂອງວິສາຫະກິດ ອຸດ ສາ ຫະກຳຕ່າງໆ, ການເພີ່ມທະວີການພົວພັນກັນດ້ານການຜະລິດ ຍິ່ງເຜີຍໃຫ້ເຫັນເຖິງຄວາມບໍ່ມີປະສິດທິພາບນັບມື້ນັບຫລາຍຂຶ້ນຂອງວິທີການຊຸມຄອງເສດຖະກິດແຫ່ງຊາດ ແບບແຂງກະດ້າງ, ແບບສັ່ງການນັ້ນ.

ຄວາມປັ່ນປ່ວນຂອງ
ແນວຄິດ "ການຜູກຂາດແຫ່ງ
ລັດຢ່າງສົມເຊີງ "

ການວາດພາບກ່ຽວກັບຄວາມອາດ ສາມາດຂອງການຈັດຕັ້ງການຜະລິດ ລວມໝູ່ຂອງລັດທີ່ມີລັກສະນະຕິດແທດຕົວຈິງກວ່າໃນປະຈຸບັນນັ້ນໄດ້ມີຄວາມໝາຍທີ່ມີລັກສະນະຕັດສິນໃຫ້ແກ່ການສ້າງທັດສະນະໃໝ່ທີ່ທັນສະໄໝກ່ຽວກັບ ທາດແທ້ຂອງສະຫະກອນ, ກ່ຽວກັບໜ້າທີ່ການທາງດ້ານເສດຖະກິດສັງຄົມຂອງມັນຢູ່ໃນສັງຄົມ ສັງຄົມນິຍົມສະໄໝປະຈຸບັນ. ທັງໝົດນັ້ນກໍເພາະວ່າທ່າທີ່ໝິ່ນສະຫະກອນໃນທຸກໄລຍະແຫ່ງການຂະຫຍາຍຕົວຂອງສັງຄົມ ສັງຄົມນິຍົມນັ້ນ ແມ່ນເກີດມາຈາກທ່າທີ່ຕໍ່ຄວາມອາດສາມາດເປັນໄປໄດ້ຂອງຮູບແບບຕ່າງ ໆ ແຫ່ງການຈັດຕັ້ງການອອກແຮງງານຂອງລັດ. ໃນກໍລະນີທີ່ຄວາມເຫັນທີ່ຖືວ່າ ຮູບແບບການຈັດຕັ້ງ "ການອອກແຮງງານລວມຢູ່ໃນເສດຖະກິດລວມ" ນັ້ນກໍຄືຮູບແບບຂອງລັດນັ້ນ ເປັນຮູບແບບດຽວທີ່ຮັບເອົາໄດ້ ແລະ ເປັນຮູບແບບດຽວ ທີ່ມີປະສິດທິພາບນັ້ນໄດ້ຮັບໄຊຊະນະແລ້ວ, ປົກກະຕິກໍຈະເລີ່ມມີການໝິ່ນ ເຕັງ ແລະ ໝິ່ນປະໝາດບັນດາສະມາຊິກສະຫະກອນ. ຄືພວກເຮົາໄດ້ຮູ້ນັ້ນ, ສິ່ງດັ່ງກ່າວນີ້ ໄດ້ເຄີຍມີຢູ່ໃນປະເທດລັດເຊຍໂຊວຽດໃນສະໄໝ "ລະບອບກອມມູນິດປາງສົງຄາມ".

ໂດຍສອດຄ່ອງຕາມການວາດພາບທີ່ຮັບຮູ້ກັນຢ່າງກວ້າງຂວາງ ຢູ່ໃນພັກ ໃນເວລານັ້ນ ກ່ຽວກັບສັງຄົມນິຍົມວ່າ ເປັນຄືຊີວິດກາທີ່ເປັນເອກະ ພາບທົ່ວປວງຊົນ, ເຊິ່ງໃນນັ້ນ ສະມາຊິກຂອງສັງຄົມທຸກຄົນແມ່ນເຮັດວຽກ ງານຕາມການວ່າຈ້າງຈາກລັດຂອງກຳມະກອນ ແລະ ຊາວນາ, ແລະ ເຮັດວຽກ

ໃນພູດທີ່ເທົ່າກັນ, ໂດຍມີການປະຕິບັດຕາມລະດັບຂອງວຽກງານຢ່າງຖືກຕ້ອງ ແລະໄດ້ຮັບຄ່າແຮງງານເທົ່າທຽມກັນ. ແນ່ນອນແລ້ວວ່າ ສະຫະກອນແມ່ນບໍ່ມີ ຢູ່ໃນນັ້ນໄດ້. ຍິ່ງກວ່ານັ້ນ, ບໍ່ແມ່ນພຽງແຕ່ສຳລັບສະຫະກອນຂອງ <u>ຕົວເມືອງ</u> ( ຕົ້ນຕໍແມ່ນສະຫະກອນຫັດຖະກຳ ) ເທົ່ານັ້ນ ແຕ່ຍັງແມ່ນສຳລັບສະຫະກອນ <u>ຊົນນະບົດ</u>ນຳອີກ. ຢູ່ໃນສະພາບເງື່ອນໄຂຂອງການຜູກຂາດເຂົ້າຈີ່, ຂອງການ ຫ້າມຄ້າຂາຍແບບເອກະຊົນ ແລະ ໂດຍສະເພາະແມ່ນຫລັງຈາກການອອກກົດ ຫມາຍແບ່ງປັນທັນຍາຫານໃນເດືອນມັງກອນປີ ໑໙໑໙ ນັ້ນແລ້ວກໍໄປເຖິງບ່ອນ ທີ່ວ່າ ສະຫະກອນໃນທຸກຮູບທຸກແບບໄດ້ຖືກລົບລ້າງໄປ. ແລະ ສິ່ງທີ່ ຈະເປັນ ໄປໃນຕໍ່ຫນ້າກໍຄືການຈະປາສະຈາກເງິນຕາໂດຍສິ້ນເຊີງ ແລະ ບໍ່ມີການຫມູນ ເງິນຕາອີກ ເຊິ່ງຄວາມອາດສາມາດເປັນໄປຄືແນວນັ້ນແມ່ນບໍ່ໄດ້ມີ ການຄາດ ຄະເນມາກ່ອນ.

ດຽວນີ້ໃຜໆກໍຮູ້ແຈ້ງແລ້ວວ່າ ການວາດພາບແບບທີ່ກ່າວມາແລ້ວ ນັ້ນ ຢ່າງຫນ້ອຍກໍແມ່ນມີລັກສະນະເພຝັ້ນ.

ແຕ່ວ່າ ຄວາມເຂົ້າໃຈຂອງພວກເຮົາໃນປະຈຸບັນນີ້ ກ່ຽວກັບ ທີ່ ຕັ້ງ ຂອງສະຫະກອນຢູ່ໃນສັງຄົມ ສັງຄົມນິຍົມນັ້ນແມ່ນມີຕົ້ນກຳເນີດມາຈາກການຕຳ ນິ <u>ຄວາມລະເມີເພຝັ້ນຊະນິດຫນຶ່ງອີກ</u> ເຊິ່ງຄວາມຈິງແລ້ວກໍແມ່ນກ່ຽວກັບການ ຜູກຂາດຂອງລັດຕໍ່ການເຄື່ອນໄຫວແຫ່ງການຜະລິດເຊັ່ນກັນ. ຖ້າວ່າ ໃນ ສະ ໄຫມເລີ່ມຕົ້ນຂອງຊຸມປີ ໑໙໒໐ ນັ້ນ, ຂອບເຂດຂອງການເອົາອົ້ນກັບລັດແມ່ນ ພົວພັນເຖິງປັດໄຈຕ່າງໆນອກຕົວ, ໂດຍບັງເອີນ (ຕົວຢ່າງ, ມັນພົວພັນເຖິງ ການບໍ່ທັນຂະຫຍາຍຕົວສູງທາງດ້ານອຸດສາຫະກຳຂອງປະເທດລັດເຊຍສະໄຫມ

ກ່ອນການປະຕິວັດ) ແລ້ວ, ໃນສະໄໝປະຈຸບັນນີ້ ຂອບເຂດທີ່ວ່ານັ້ນມີຕົ້ນກຳເນີດມາຈາກທາດແທ້ຂອງຂະບວນວິວັດດັ່ງກ່າວເອງ, ມາຈາກ <u>ຄວາມບໍ່ອາດສາມາດທາງດ້ານຫລັກການຂອງສູນກາງ, ຂອງກົງຈັກແຫ່ງລັດ ທີ່ຈະນຳເອົາການພົວພັນທາງດ້ານເສດຖະກິດຢູ່ໃນສັງຄົມທຸກຢ່າງມາຂຶ້ນກັບ ການຄຸ້ມຄອງກວດກາຂອງຕົນ</u>*.

ຍ້ອນວ່າມີບົດຮຽນແຫ່ງການສ້າງສາ ສັງຄົມນິຍົມ ເຊິ່ງ ໄດ້ມາຈາກການສະສົມຂອງສະຫະພາບໂຊວຽດ ແລະ ບັນດາປະເທດອື່ນໆຫລາຍປະເທດ ໂດຍສະເພາະກໍແມ່ນບັນດາປະເທດທີ່ມີການຂະຫຍາຍຕົວທາງດ້ານ ອຸດສາຫະກຳໃນເວລາກ່ອນການດັດສ້າງແບບປະຕິວັດນັ້ນ ( ສ.ປ.ຢ, ເຊັກໂກສະໂລວາກີ ), ປະຈຸບັນນີ້ໄດ້ເປັນທີ່ເຂົ້າໃຈແຈ້ງເຖິງຂອບເຂດແຫ່ງການຍື່ນມືເຂົ້າກ່ຽວຂ້ອງໂດຍກົງຂອງລັດ ຢູ່ໃນຂະບວນວິວັດທາງດ້ານເສດຖະກິດ ເຊິ່ງມີທັງຂອບເຂດດ້ານການຈັດຕັ້ງ (ດ້ານເຕັກໂນໂລຊີ) ກໍຄືດ້ານຄົນ ( ຈິດຕະສາດສັງຄົມ). ຕົວຢ່າງໃນສະພາບທີ່ວ່າ ເມື່ອມີການວາງແຜນຈາກສູນກາງ ກ່ຽວກັບພຽງແຕ່ບໍ່ເທົ່າໃດສ່ວນຮ້ອຍຂອງຈຳນວນບັນຫາຕົວຈິງຂອງການ ໝູນວຽນ

* ໃນເວລາຕຳນິ " ຄວາມເຊື່ອຖືແບບງົມງວາຍ ຕໍ່ຄວາມມີອຳນາດທຸກຢ່າງຂອງກົງຈັກລັດ ", ໃນກອງປະຊຸມຄົບຄະນະ ຂອງ ຄະນະກຳມະການສູນກາງພັກກອມມູນິດແຫ່ງ ສະຫະພາບໂຊວຽດ ໃນ ເດືອນ ໖/໑໙໘໖ ນັ້ນ, ສະຫາຍ ມ.ຊ. ກອກບາຈົບ ໄດ້ເນັ້ນວ່າ " ຢູ່ໃນສະພາບເງື່ອນໄຂຂອງສະໄໝປະຈຸບັນນີ້ບໍ່ອາດທີ່ຈະແກ້ໄຂທຸກ ໆ ບັນຫາຈາກສູນກາງໄດ້, ແລະຄວາມຈິງແລ້ວ ມັນກໍບໍ່ສາມາດເປັນໄປແນວນັ້ນໄດ້". (ເອກະສານຂອງກອງປະຊຸມຄົບຄະນະຂອງຄະນະກຳມະການສູນກາງພັກກອມມູນິດ ແຫ່ງສະຫະ ພາບໂຊວຽດ,16/06/86.ມົດສະກູ,1986,ໜ້າ 10-11).<u>ບ.ກ.</u>

ເສດຖະກິດແຫ່ງຊາດນັ້ນ, ບໍລິມາດຂອງວຽກງານດັ່ງກ່າວນີ້ກໍເກີນຄວາມອາດສາມາດຂອງອົງການທີ່ເຮັດແຜນການຢ່າງຫລວງຫລາຍແລ້ວ. ຖ້າຫາກແມ່ນວ່າມີຄວາມອາດສາມາດເພີ່ມຈຳນວນນັກວາງແຜນການຂຶ້ນທົບຫລາຍເທົ່າ, ແລະດ້ວຍເຫດນັ້ນກໍແມ່ນສາມາດເພີ່ມບໍລິມາດຂອງວຽກງານທີ່ໄດ້ຮັບການວາງແຜນ "ຈາກຂັ້ນເທິງ" ຂຶ້ນ, ຖ້າຫາກແມ່ນວ່າສາມາດບັນລຸເຖິງ " ການວາງແຜນໄດ້ຢ່າງສົມບູນຈາກສູນກາງ" ກໍຕາມ, ການບັນລຸດັ່ງກ່າວນີ້ຍິ່ງຈະເຮັດໃຫ້ ມີການຫຍຸ້ງຍາກຕື່ມຂຶ້ນອີກໃນການຕອບສະໜອງໄດ້ຕາມຄວາມຮຽກຮ້ອງ ຕ້ອງການຂອງສັງຄົມ. ໃນຂອບເຂດຂອງໂຄງການແຫ່ງການຜະລິດທີ່ " ແຂງກະດ້າງ", ເຊິ່ງຖືກປະກອບຂຶ້ນໄວ້ກ່ອນນັ້ນ ໂດຍຫລັກການແລ້ວຈະບໍ່ ສາ ມາດໄຫວຕອບຕໍ່ການປ່ຽນແປງຂອງສະພາບຕະລາດ ອັນຄຳນວນເຖິງ ການເຄື່ອນໜັງຂອງຄວາມຮຽກຮ້ອງຕ້ອງການໃນປະຈຸບັນ, ຍັງບໍ່ເວົ້າໃນ ອະນາຄົດ. ແລະ ຍິ່ງສັບສົນກວ່ານັ້ນອີກ ຖ້າວ່າພາຍໃນຂອບເຂດຂອງໂຄງການ ຜະ ລິດຂອງລັດແບບແຂງກະດ້າງດັ່ງກ່າວນັ້ນ ມີການຄຳນວນເຖິງໄລຍະເປັນຫລາຍປີ ບາງທີກໍເປັນສິບໆປີ, ໂດຍໄຫວຕອບຕໍ່ຄວາມກ້າວໜ້າທາງດ້ານເຕັກນິກວິທະຍາສາດ, ນຳໃຊ້ຜົນສຳເລັດຂອງມັນເຂົ້າໃນການຜະລິດ.

ຍ້ອນຄວາມເຂົ້າໃຈທີ່ໄດ້ມີຂຶ້ນໃນໄລຍະຫລັງໆນີ້ ເຖິງຂອບເຂດພາຍໃນ, ພາວະວິໄສແຫ່ງການ "ຂຶ້ນກັບລັດ" ຂອງຂະບວນວິວັດດ້ານເສດຖະກິດນັ້ນເອງທີ່ໄດ້ກາຍເປັນເຫດຜົນຕົ້ນຕໍທີ່ມີຜົນດີໃຫ້ແກ່ສະຫະກອນ. ສະຫະ ກອນໄດ້ສະແດງໃຫ້ເຫັນເຖິງຄວາມໝັ້ນທ່ຽງດ້ານປະຫວັດສາດ, ເພາະວ່າມີໜ້າທີ່ຕ່າງໆດ້ານເສດຖະກິດທີ່ສະຫະກອນສາມາດແກ້ໄຂໄດ້ຢ່າງງ່າຍດາຍກວ່າ .

ຖືວ່າໂດຍຫລັກການແລ້ວ ບໍ່ສາມາດສ້າງການຊຸມຊອງການຜະລິດ ທຸກຢ່າງ "ຕາມລວງຕັ້ງ", ຈາກສູນກາງແລ້ວ, ກໍຄວນຮັກສາການຈັດຕັ້ງ ເສດຖະກິດຮວມໝູ່ແບບດັດສົມດ້ວຍຕົນເອງ ເຊິ່ງມັນສາມາດສ້າງການພົວພັນ "ລວງນອນ" ອັນເປັນທີ່ຕ້ອງການສຳລັບຊີວິດສັງຄົມ. ສະຫະກອນເປັນອົງການຈັດຕັ້ງທີ່ເປັນເຈົ້າຕົນເອງນັ້ນແມ່ນມີຄວາມອາດສາມາດໄຫວຕອບຢ່າງວ່ອງໄວຂອງການພົວພັນເສດຖະກິດແບບລວງນອນຕໍ່ການຂາດແຄນທີ່ເກີດມີຂຶ້ນ.

ແລະ ອີກອັນໜຶ່ງທີ່ສຳຄັນທີ່ສຸດນັ້ນ ກໍຄືຕາມລະດັບຂອງການ ປັບປຸງກົງຈັກເສດຖະກິດທັງໝົດນັ້ນ, ຈະໄປເຖິງບ່ອນບໍ່ມີຄວາມແຕກຕ່າງທາງດ້ານເສດຖະກິດການເມືອງລະຫວ່າງບັນດາວິສາຫະກິດແຫ່ງລັດທີ່ສາມາດ ຖືມ ຊຸມດ້ວຍຕົນເອງ, ທີ່ມີຄວາມເປັນເຈົ້າຕົນເອງທາງດ້ານເສດຖະກິດ, ເຊິ່ງພາຫານະການຜະລິດຂອງມັນເປັນກຳມະສິດຂອງສັງຄົມທັງໝົດກັບສະຫະກອນ ເຊິ່ງພື້ນຖານການເຄື່ອນໄຫວຂອງມັນໃນທີ່ສຸດແລ້ວກໍແມ່ນກຳມະສິດລວມໝູ່ ເຊັ່ນກັນ*. ສິ່ງດັ່ງກ່າວນີ້ເອງທີ່ໄດ້ຊ່ວຍໃຫ້ ເລນິນ ກຳນົດລະບອບສັງຄົມນິຍົມວ່າເປັນ "ລະບອບຂອງບັນດາສະມາຊິກສະຫະກອນທີ່ສີວິໄລ".

ຄວາມແຕກຕ່າງລະຫວ່າງການຜະລິດແບບສະຫະກອນສັງຄົມນິຍົມ ທີ່ແທ້ຈິງທີ່ອີງໃສ່ກຳມະສິດແບບຮວມໝູ່ກັບວິສາຫະກິດແບບທົ່ວປວງຊົນທີ່ໄລ່ລຽງທຸລະກິດນັ້ນ ສ່ວນຫລາຍແລ້ວແມ່ນ ຢູ່ບ່ອນວິທີການຈັດຕັ້ງ. ໃນກໍລະນີ ສະຫະ

* ຕົວຢ່າງທີ່ຈະແຈ້ງກວ່າໝູ່ກໍຄື ໂກນໂຄ ອັນເປັນຮູບແບບຕົ້ນຕໍຂອງ ສະຫະກອນຢູ່ໃນກະສິກຳ. ມັນເປັນວິສາຫະກິດທີ່ເປັນເຈົ້າຕົນເອງແບບ ໄລ່ລຽງທຸລະກິດ, ພາຫານະການຜະລິດຕົ້ນຕໍຂອງມັນ(ທີ່ດິນ)ແມ່ນເປັນກຳມະ ສິດຂອງທົ່ວສັງຄົມ. ບ.ກ.

ກອນນັ້ນ, ຄວາມຄິດລິເລີ່ມແມ່ນ "ມາຈາກລຸ່ມ", ໂດຍອີງໃສ່ການ ສະໜັບ ສະໜູນທາງດ້ານເສດຖະກິດຂອງລັດ, ສ່ວນໃນກໍລະນີວິສາຫະກິດ ແບບ ທົ່ວປວງຊົນນັ້ນ, ຜູ້ລິເລີ່ມກໍ່ສ້າງວິສາຫະກິດນັ້ນກໍຄືລັດເອງ.

ຄວາມແຕກຕ່າງລະຫວ່າງຮູບການຈັດຕັ້ງການອອກແຮງງານແບບສະຫະກອນ ແລະແບບຂອງລັດນັ້ນ ກ່ອນອື່ນໝົດແມ່ນກຳນົດຂຶ້ນຈາກຄູນລັກສະນະພິເສດ ຂອງຂົງເຂດການຜະລິດຕົວຈິງຕ່າງໆ, ຈາກລັກສະນະສະເພາະ ທີ່ມີຢູ່. ໃນກໍລະນີທີ່ວ່າ ເນື້ອໃນຂອງການອອກແຮງງານເອງ, ເງື່ອນໄຂ ຂອງມັນ, ຜົນຜະລິດຂອງມັນຕ້ອງການຮັກສາໃຫ້ມີຄວາມອາດສາມາດສູງສຸດ ຂອງການເປັນເຈົ້າຕົນເອງທາງດ້ານເສດຖະກິດນັ້ນ, ຄວນສ້າງຕັ້ງສະຫະກອນ , ນຳໃຊ້ການຄ່ອງຕົວທາງດ້ານເສດຖະກິດຂອງມັນ. ຢູ່ບ່ອນໃດທີ່ການປະຕິ ບັດຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມນັ້ນຈຳເປັນຕ້ອງມີການ ສ້າງ ລາຍການຜະລິດທີ່ວາງໄວ້ຕາຍຕົວແລ້ວນັ້ນຢ່າງເປັນລະບົບ (ເຊິ່ງສາມາດເຮັດໄດ້ຢູ່ແຕ່ໃນລະດັບລັດເທົ່ານັ້ນ) ນັ້ນ, ຕ້ອງກໍ່ສ້າງວິສາຫະກິດແບບທົ່ວປວງຊົນສັງຄົມນິຍົມ.

**ພາລະດ້ານ ມະນຸດສະທຳ ຂອງສະຫະກອນ**

ເປັນອັນຈະແຈ້ງແລ້ວວ່າ "ການຜູກຂາດຂອງລັດ"ຕໍ່ຂະບວນວິວັດທາງດ້ານເສດຖະກິດການຜະລິດ ທັງໝົດຢູ່ໃນຂອບເຂດທົ່ວທັງຊາດນັ້ນບໍ່ພຽງແຕ່ ບໍ່ ສາມາດເປັນໄປໄດ້, ແຕ່ເວົ້າງ່າຍໆແລ້ວແມ່ນມັນບໍ່ຈຳເປັນ. ທັງນີ້ບໍ່ແມ່ນແຕ່ຍ້ອນລັກສະນະຮອບດ້ານ, ລັກສະນະບໍ່ສຸດສິ້ນເປັນຂອງການພົວພັນທີ່ນອນຢູ່ບົນພື້ນຖານຂອງການຜະລິດແບບທັນສະໄໝນັ້ນ ເທົ່ານັ້ນ,

ແຕ່ຍັງຍອມຂໍ້ຂັດແຍ່ງທີ່ມີມາຕັ້ງແຕ່ທຳອິດລະຫວ່າງທາດແທ້ທາງດ້ານສັງຄົມ , ດ້ານຈິດໃຈຂອງຄົນກັບຮູບແບບການຈັດຕັ້ງ,ການຄຸ້ມຄອງການຜະລິດ,ເຊິ່ງການປະຕິບັດສຳເລັດແນວຄວາມຄິດທີ່ວ່າຢ່າງເຖິງຖອງນັ້ນ ຈະຕ້ອງນຳໄປສູ່ ຮູບແບບຕ່າງໆດັ່ງກ່າວ. ການແບ່ງປັນຢ່າງເຕັມສ່ວນຢູ່ໃນການອອກແຮງງານ , ການມອບໝາຍເງື່ອນໄຂຕ່າງໆໃນການອອກແຮງງານ ແລະ ແມ່ນແຕ່ ການໃຫ້ຄ່າບຳເໜັດທີ່ເທົ່າທຽມກັນນັ້ນກໍບໍ່ສາມາດດຶງດູດຈິດໃຈຄົນໄດ້. ຄົນ ເຮົາຍາກທີ່ຈະເພິ່ງພໍໃຈໃນບົດບາດຂອງການເປັນພຽງຫລັກຕະປູ, ແມ່ນວ່າເຂົາເຈົ້າຈະເຊື່ອຢູ່ວ່າ ບົດບາດນັ້ນແມ່ນມີເຫດຜົນ ແລະ ມີຜົນປະໂຫຍດ ກໍຕາມ. ຄົນເຮົາຢາກທີ່ຈະຮັກສາສິດໃນການມີຄວາມຄິດລິເລີ່ມທີ່ເປັນຂອງຕົນເອງ, ສິດໃນການມີເງື່ອນໄຂສຳລັບໄດ້ມີສ່ວນປະກອບ, ສິດໃນການເປັນເຈົ້າຕົນ ເອງໃນລະດັບໃດລະດັບໜຶ່ງ. ດັ່ງນັ້ນ ຄົນຈຶ່ງຕ້ານທານຢ່າງຕື່ນຕົວຫລື ໂດຍ ສັນຊາດຍານຕໍ່ການຈັດຕັ້ງການອອກແຮງງານແບບມີການບັນຊາມາຈາກ ສູນກາງເຊິ່ງເປັນການຈັດຕັ້ງການອອກແຮງງານທີ່ບໍ່ອະນຸຍາດໃຫ້ຄົນໄດ້ມີຫົວຄິດລິເລີ່ມມີແຕ່ກຳມະກອນທີ່ບໍ່ແມ່ນຊ່ຽວຊານ ເຊິ່ງຮັບໃຊ້ຢູ່ໃນການຜະລິດແບບເປັນສາຍພານນັ້ນຈຶ່ງຈຳເປັນ ສົມຍອມກັບການຂາດຄວາມເປັນເຈົ້າຕົນເອງໃນ ການອອກແຮງງານ. ທົ່ວສັງຄົມອາດສົມຍອມຕໍ່ການຂາດຄວາມເປັນເຈົ້າ ຕົນເອງດັ່ງກ່າວກໍຄືການສະເລ່ຍລາຍໄດ້ເທົ່າທຽມກັນນັ້ນໃນສະພາບເງື່ອນໄຂພິເສດ, ທີ່ມີລັກສະນະວິກິດ. ແຕ່ວ່າຄວາມອາດສາມາດຂອງການສົມຍອມແບບທີ່ວ່າ ນີ້ຂອງສັງຄົມຕໍ່ລະບົບຈຳກັດຂອງລັດຢ່າງເຕັມສ່ວນນັ້ນ ແມ່ນແຕ່ໃນກໍລະນີນີ້ ກໍບໍ່ຂະຈັດລັກສະນະຕ້ານທຳມະຊາດຂອງມັນໄດ້.

4*

ແນ່ນອນຄືດັ່ງທີ່ໄດ້ເວົ້າມາແລ້ວນັ້ນ, ຈາກສິ່ງດັ່ງກ່າວກໍບໍ່ຄວນທີ່ຈະມີຄວາມຈຳເປັນທັນເອົາວິສາຫະກິດແບບລັດນັ້ນໄປເປັນແບບສະຫະກອນ. ເລື່ອງຂອງມັນມີຢູ່ວ່າ ເຮັດແນວໃດຈະນຳເອົາບັດຖະນິທີ່ສະສົມຢູ່ໃນສະຫະກອນກ່ຽວກັບການກະຕຸ້ນ ຄວາມຄິດລິເລີ່ມສ່ວນບຸກຄົນ ຢູ່ໃນການອອກແຮງງານ, ຄວາມຮັບຜິດຊອບຂອງສ່ວນບຸກຄົນຕໍ່ຜົນແຫ່ງການເຄື່ອນໄຫວຂອງວິສາຫະກິດທັງຫມົດນັ້ນເຂົ້າໄປຫມູນໃຊ້ຢູ່ໃນການຜະລິດແຫ່ງລັດ. ຄວນຕ້ອງຂະຫຍາຍຄວາມ ຮູ້ສຶກເປັນເຈົ້າຂອງຊາວຜູ້ອອກແຮງງານເຊິ່ງໃນນັ້ນລວມທັງການອີງໃສ່ ຫລັກການທີ່ວ່າເອົາໄດ້ສະແດງໃຫ້ເຫັນເຖິງຈຸດດີຂອງຕົນຢູ່ໃນສະຫະກອນ. ຍ້ອນວ່າການເຄື່ອນໄຫວຢ່າງມີປະສິດທິພາບນັ້ນບໍ່ແມ່ນຈຸດເດັ່ນຂອງຮູບແບບກຳມະ ສິດສັງຄົມນິຍົມໃດຫນຶ່ງ, ແລະມັນມີຄວາມອາດສາມາດສຳລັບການແລກປ່ຽນ ບົດຮຽນ, ເພີ່ມພູນຊຶ່ງກັນແລະກັນ. ນັ້ນແຫລະຄືສັດຈະວິພາກໃນຕົວຈິງ. ປະຈຸບັນນີ້ ຢູ່ສະຫະພາບໂຊວຽດແມ່ນຮູບແບບກຳມະສິດລວມຫມູ່ສັງຄົມນິຍົມທີ່ພົ້ນ ເດັ່ນອັນນັ້ນພວມໄດ້ຮັບການປັບປຸງດ້ວຍການປະສານສົມທົບຫລັກການຕ່າງໆ ຫລາຍຢ່າງທີ່ເອົາມາຈາກຮູບແບບກຳມະສິດອື່ນຕໍ່.

ດັ່ງນັ້ນ ທ່າທີແບບໃຫມ່ທີ່ມີຕໍ່ສະຫະກອນແມ່ນຍັງພົວພັນກັບການຮັບຮູ້ເຖິງຄວາມອາດສາມາດຂອງການປະສານສົມທົບ, ຂອງການຄົງຢູ່ຮ່ວມກັນ ລະຫວ່າງຮູບແບບເສດຖະກິດທີ່ແຕກຕ່າງກັນ, ຂອງການນຳໃຊ້ຈຸດເດັ່ນແຫ່ງ ການເຄື່ອນໄຫວຮ່ວມກັນຂອງບັນດາຮູບການເສດຖະກິດນັ້ນ. ເປັນອັນວ່າ ບັນຫາຕ່າງໆດ້ານສັງຄົມແລະເສດຖະກິດນັ້ນສາມາດຈະຖືກແກ້ໄຂດ້ວຍວິທີການທີ່ແຕກຕ່າງກັນ, ແຕ່ບໍ່ແມ່ນພຽງດ້ວຍວິທີການທີ່ຮູບແບບເສດຖະກິດຫນຶ່ງກືນກິນຮູບແບບ

ເສດຖະກິດອື່ນ. ແລະເວົ້າແລ້ວມັນຈຳເປັນບໍ່ທີ່ຈະຕ້ອງ "ປິດຊີວິດ"ທຸກ ໂຄງ ປະກອບດ້ານເສດຖະກິດ,ຈິດຕະສາດສັງຄົມແລະດ້ານສິນທຳທີ່ເຄີຍຮັບໃຊ້ ລະ ບອບສັງຄົມໃນເມື່ອກ່ອນນັ້ນ. ເພາະວ່າມີຫລາຍສິ່ງຫລາຍແນວໃນນັ້ນ, ກ່ອນ ອື່ນແມ່ນການກະຕຸ້ນໃນທາງດີໃຫ້ອອກແຮງງານເຊິ່ງພົ້ນຖານຂອງການ ກະຕຸ້ນ ເຫລົ່ານັ້ນ ກໍຄືຄວາມຮຽກຮ້ອງຕ້ອງການໃນການແຂ່ງຂັນກັນ, ການສະແດງ ອອກດ້ວຍຕົນເອງ,ໃນການປັບປຸງເງື່ອນໄຂການດຳລົງຊີວິດຂອງຕົນ,ສິ່ງ ຕ່າງໆດັ່ງກ່າວນັ້ນອາດຈະເອົາໄປໝູນໃຊ້ໃນການເຮັດໃຫ້ເສດຖະກິດສັງຄົມນິ ຍົມ,ຊີວິດສັງຄົມທັງໝົດເຄື່ອນໄຫວຢ່າງສະໝ່ຳສະເໝີຫລາຍຂື້ນ. ຍິ່ງໃນ ການຂະຫຍາຍຕົວຂອງສັງຄົມນິຍົມສະໄໝປະຈຸບັນນີ້ແລ້ວ ແຮງຕ້ອງການ ສິ່ງ ກະຕຸ້ນຕ່າງໆດັ່ງກ່າວທີ່ສຸດ. ເພາະວ່າການບັງຄັບດ້ວຍວິທີການທາງດ້ານການ ເມືອງຫລືດ້ານກົດໝາຍເພື່ອໃຫ້ຄົນສ້າງເຕັກນິກໃໝ່,ທຳການປະດິດສ້າງ , ຫລືແມ່ນແຕ່ເພື່ອເພີ່ມລະດັບວິຊາສະເພາະນັ້ນແມ່ນຍາກທີ່ສຸດ,ໃນຕົວຈິງ ແລ້ວ ແມ່ນບໍ່ເປັນໄປໄດ້. ການກະຕຸ້ນໃນທາງດີນັ້ນຈະພາໃຫ້ເກີດມີເຕັກນິກ ແລະ ເຕັກໂນໂລຊີທີ່ກ້າວໜ້າ,ເກີດມີຄວາມຮຽກຮ້ອງຕ້ອງການໃນການແກ້ໄຂດ້ວຍ ຕົນເອງຢ່າງມີຫົວຄິດປະດິດສ້າງ,ເກີດມີຄວາມສົນໃຈໃນການຂະຫຍາຍ ເສດ ຖະກິດ.

ແລະແກ່ນແທ້ຂອງແນວຄິດສະຫະກອນກໍແມ່ນຫລັກການແຫ່ງການຄົງ ຢູ່ຮ່ວມກັນ,ແຫ່ງການປະສານສົມທົບຂອງການກະຕຸ້ນໃຫ້ອອກແຮງງານ ແບບ ເກົ່າແລະແບບໃໝ່,ຫລັກການຈັດຕັ້ງການຜະລິດແບບເກົ່າແລະແບບໃໝ່. ຄື ດັ່ງເລນິນໄດ້ເວົ້າໄວ້ນັ້ນ,ສະຫະກອນຮູ້ຈັກຜູກພັນເອົາ "ຫລັກການຕ່າງໆຂອງ

ຫລາຍລະບອບ"[1]. ລັກສະນະສົມຍອມພິເສດຂອງສະຫະກອນດັ່ງກ່າວນັ້ນໄດ້ຖືກນຳໃຊ້ເພື່ອແກ້ໄຂຫນ້າທີ່ຕ່າງໆທາງດ້ານສັງຄົມຢູ່ໃນໄລຍະຕ່າງໆແຫ່ງການຂະຫຍາຍຕົວຂອງລະບອບສັງຄົມນິຍົມ. ຢູ່ໃນໄລຍະຂ້າມຜ່ານນັ້ນ ສະຫະກອນສົມຍອມກັບວິທີການຈັດຕັ້ງການອອກແຮງງານສັງຄົມນິຍົມແບບເກົ່າແບບ ງ່າຍດາຍທີ່ໄດ້ເກີດມີຂຶ້ນພາຍໃຕ້ສະພາບເງື່ອນໄຂອັນວິກິດຂອງບັນດາແຜນການຫ້າປີສະໄຫມກ່ອນສົງຄາມ(ໃນເມື່ອຈຳເປັນຕ້ອງນຳເອົາປະເທດອອກຈາກຄວາມຫລ້າຫລັງທາງດ້ານເສດຖະກິດ), ໂດຍມີຮູບແບບຄ່ອງຕົວກວ່າຂອງການຜູກພັນຜູ້ທຳການຜະລິດກັບພາຫະນະການຜະລິດເຊິ່ງສາມາດຊ່ວຍໃຫ້ເຂົາເຈົ້າ ມີຄວາມເປັນເຈົ້າຕົນເອງຢູ່ໃນການອອກແຮງງານຫລາຍຂຶ້ນ. ໃນກໍລະນີທີຫນຶ່ງນັ້ນ ສະຫະກອນມັກຈະສະແດງອອກໃຫ້ເຫັນພາຍໃຕ້ຮູບແບບທີ່ຈະແຈ້ງນັ້ນ ກໍຄື <u>ຮູບແບບຂອງການດຳເນີນທຸລະກິດ</u>, ປະຈຸບັນນີ້ ເພິ່ນມັກຈະນຳໃຊ້ <u>ປັດຊະຍາ</u> ຂອງສະຫະກອນດັ່ງກ່າວນຳໃຊ້ການແນ່ໃສ່ຄົ້ນຄວ້າດ້ານເສດຖະກິດຢ່າງເປັນປະຈຳຂອງມັນ, ແນວຄວາມຄິດຖົມຊຸມດ້ວຍຕົນເອງ, ຮັບປະກັນດ້ານການເງິນດ້ວຍຕົນເອງ ກໍຄືຮູບແບບຈ່າຍຄ່າແຮງງານທີ່ຄ່ອງຕົວຂອງມັນແລະອື່ນໆ. ແລະ ຢູ່ໃນກໍລະນີໃດກໍຕາມ, ສະຫະກອນຍາມໃດກໍອົດທົນ, ເອົາໃຈໃສ່ແລະ ໃຫ້ຄວາມສົນໃຈຕໍ່ປາກົດການທີ່ແຕກຕ່າງກັນທີ່ສຸດຂອງຊີວິດມະນຸດ, ຍາມໃດກໍນັບຖື ມູນເຊື້ອແຫ່ງການອອກແຮງງານ. ເຊັ່ນດຽວກັບໃນຊຸມປີ ໑໙໔໐ ນັ້ນ, ການປ່ຽນແປງທາງດ້ານທັດສະນະທີ່ມີຕໍ່ສະຫະກອນນັ້ນຈະໄປພ້ອມກັບການມີທ່າທີທີ່ປາສະຈາກຄວາມຫມາງໃຈທີ່ເຄີຍມີຕໍ່ການຄ້າ.ສັງຄົມໄດ້ຄ່ອຍໆພົ້ນອອກຈາກ ທ່າທີທີ່

---

໑) ເລນິນ ວ.ອ., ປະມວນນິພົນຄົບຊຸດ, ເຫລັ້ມ ໓໘, ຫນ້າ ໑໔໑.

ຮຸນແຮງໃນເມື່ອກ່ອນທີ່ມີຕໍ່ການພົວພັນສິນຄ້າ-ເງິນຕາ ໂດຍຖືຄືຈັ່ງວ່າມັນເປັນປາກົດ ການທີ່ແປກປະຫລາດສຳລັບສັງຄົມນິຍົມ, ວ່າມັນທຳຄວາມເສຍ ໃຫ້ແກ່ຄວາມຍຸຕິທຳທາງດ້ານເສດຖະກິດແລະສັງຄົມ. ປະຈຸບັນນີ້ ເປັນທີ່ຈະແຈ້ງແລ້ວວ່າ ຖ້າປາສະຈາກການພົວພັນສິນຄ້າ-ເງິນຕາແລ້ວ ແມ່ນບໍ່ສາມາດຈະກໍ່ສ້າງສັງຄົມນິຍົມທີ່ມີປະສິດທິພາບທາງດ້ານເສດຖະກິດໄດ້, ແລະແນວຄິດທີ່ຢາກຄ່ອຍໆຂະຈັດຮູບແບບທາງດ້ານເສດຖະກິດເພື່ອບັງຄັບໃຫ້ອອກແຮງງານ ທຳການຜະລິດ(ຮູບແບບໄມ້ວັດທາງດ້ານເສດຖະກິດແລະການກະຕຸ້ນທາງດ້ານເສດຖະກິດ) ເຊິ່ງຮູບນອກແລ້ວ ແນວຄິດດັ່ງກ່າວນີ້ເບິ່ງຄືວ່າເປັນແນວຄິດທີ່ສູງ ສົ່ງແຕ່ໃນພາກປະຕິບັດຕົວຈິງແລ້ວ ມັນພັດກ້ຽວໄປສູ່ການທຳລາຍບາງເງື່ອນ ໄຂແຫ່ງການຜະລິດຄືນຊຶ່ງມີມາຕັ້ງແຕ່ຕົ້ນຂອງຊີວິດສັງຄົມ. ການຕີລາຄາຕ່ຳຕໍ່ຮູບແບບທາງດ້ານເສດຖະກິດຂອງການກອດກາກ່ຽວກັບຄຸນນະພາບຂອງການອອກແຮງງານແບບສັງຄົມນິຍົມນັ້ນ ໄດ້ນຳເອົາຄວາມເສັຽຫາຍມາໃຫ້ແກ່ ທຳມະຊາດ. ການໃຫ້ລາກ່ຽວກັບແຫລ່ງທຳມະຊາດຊຶ່ງກ່ອນອື່ນໝົດກໍຄືທີ່ດິນ ແລະແຫລ່ງນ້ຳນັ້ນ ໄດ້ສົ່ງຜົນສະທ້ອນເຮັດໃຫ້ນັບມື້ນັບທຳຄວາມເສັຽຫາຍໃຫ້ແກ່ ບັນດາເງື່ອນໄຂພື້ນຖານແຫ່ງຊີວິດ(ຕົວຢ່າງ, ການຫລຸດຜ່ອນຄວາມ ອຸດົມສົມບູນຂອງທີ່ດິນແລະການລົດພື້ນທີ່ດິນປູກຝັງ). ການໃຫ້ລານັ້ນບໍ່ພຽງແຕ່ເຮັດ ໃຫ້ແຫລ່ງຊັບພະຍາກອນທີ່ຮັ່ງມີນັ້ນຕ້ອງຖືກສູນເສັຽປະລິມານສຳຮອງທີ່ບໍ່ຟື້ນຄືນໄດ້ເທົ່ານັ້ນ, ແຕ່ຍັງເຮັດໃຫ້ນິໄສຂອງຄົນຖືກເສັຽຫາຍນຳອີກ. ທ່າທີແບບ ຂາດຄວາມຄິດອ່ານທີ່ມີຕໍ່ທຳມະຊາດ, ການນຳໃຊ້ທີ່ດິນ, ແຫລ່ງແຮ່ຈ່ານຢ່າງຕະພຶດຕະພື້ນນັ້ນຈະພາໄປເຖິງການບໍ່ມີຄວາມຮູ້ສຶກຮັບຜິດຊອບຕໍ່ອະນາຄົດ.

ຢູ່ໃນສະພາບເງື່ອນໄຂແຫ່ງລະບອບສັງຄົມນິຍົມນັ້ນ, ການຮັກສາໃຫ້ມີຕະຫລາດ, ການຮັກສາສິດຂອງຜູ້ໃຊ້ສອຍໃນການເລືອກຊື້ສິ່ງຂອງໃຊ້ສອຍນັ້ນ ເຫມືອນກັນກັບການຮັກສາເງື່ອນໄຂດ້ານການເມືອງພື້ນຖານຂອງການກວດກາປະຊາຊົນຕໍ່ການເຄື່ອນໄຫວຂອງອົງການວາງແຜນ, ຕໍ່ຄຸນນະພາບຂອງການຄຸ້ມຄອງເສດຖະກິດແຫ່ງຊາດ. ຕາມທາດແທ້ຂອງມັນນັ້ນ, ການຄ້າ, ການແລກປ່ຽນສິນຄ້າແມ່ນແນໃສ່ຕ້ານກັບການເປັນແບບດຽວກັນ, ແລະດ້ວຍເຫດນັ້ນມັນກໍຕ້ານກັບແນວຄິດບັນຊາເສດຖະກິດແບບອອກຄຳສັ່ງ, ແບບບໍລິຫານ. ການຄ້ານັ້ນແມ່ນການກະຕຸ້ນ, ແມ່ນແຫລ່ງທີ່ມາຂອງການແບ່ງເປັນຫລາຍຊະນິດບໍ່ພຽງ ແຕ່ກ່ຽວກັບສິ່ງຂອງໃຊ້ສອຍເທົ່ານັ້ນ ແຕ່ຍັງກວມໄປເຖິງຄວາມຕ້ອງການຂອງຄົນອີກດ້ວຍ. ແລະຕະຫລາດຍາມໃດກໍເກີດມີຄວາມຕ້ອງການອັນໃຫມ່ເຊິ່ງຍາກທີ່ຈະຄຳນຶງເຖິງໃນເວລາຮ່າງຄຳສັ່ງໃດຫນຶ່ງ. ຕະຫລາດນັ້ນທຳຄວາມ ເສັຽຫາຍໃຫ້ແກ່ອຳນາດຕົວຈິງຂອງພວກນັກບໍລິຫານ "ຂອງໂຮງງານໃຫຍ່ຫນຶ່ງ", ເພາະມັນຖືວ່າຜູ້ຊື້ເປັນຜູ້ຕັດສິນສຸດທ້າຍ. ຕະຫລາດສອນໃຫ້ຄົນຄິດ, ກວດ ກາຄວາມຮູ້ຄວາມສາມາດຂອງອ້າລັດຖະກອນ. ແລະສະຫະກອນໄດ້ມີສ່ວນອັນສຳຄັນຢູ່ໃນຂະບວນວິວັດດັ່ງກ່າວ.

ຍ້ອນເຫດນັ້ນເອງ, ການຟື້ນຟູຄວາມສົນໃຈທີ່ມີຕໍ່ຫລັກການ ຕ່າງໆແຫ່ງການເຄື່ອນໄຫວຂອງສະຫະກອນນັ້ນ ກໍຄືສິ່ງສະແດງໃຫ້ເຫັນຢ່າງຖຽງ ບໍ່ໄດ້ກ່ຽວກັບການເຮັດໃຫ້ເສດຖະກິດທັງຫມົດ ແລະການເມືອງຂອງສັງຄົມ ມີລັກສະນະມະນຸດສະທຳ.

<u>ບາງຄຳມ້ວນທ້າຍ</u>

ພວກເຮົາຂໍລົ້ມຄືນອີກເທື່ອຫນຶ່ງວ່າ: ເມື່ອເວົ້າເຖິງລະບອບສັງຄົມນິຍົມອັນເປັນຄືລະບອບຂອງບັນດາສະມາຊິກທີ່ສິວິໄລນັ້ນ, ເລນິນບໍ່ໄດ້ຈຳກັດ ທີ່ຕັ້ງແລະຄວາມຫມາຍຂອງສະຫະກອນຢູ່ໃນສັງຄົມສັງຄົມນິຍົມນັ້ນພຽງແຕ່ ກ່ຽວກັບຫນ້າທີ່ທາງດ້ານເສດຖະກິດເທົ່ານັ້ນ, ແຕ່ເພິ່ນຖືວ່າສະຫະກອນເປັນຄືເງື່ອນໄຂອັນຈຳເປັນແຫ່ງຄວາມກ້າວຫນ້າທາງດ້ານການເມືອງ ແລະວັດທະນະທຳຂອງສັງຄົມສັງຄົມນິຍົມ. ຂໍ້ສະຫລຸບດັ່ງກ່າວນີ້ແມ່ນບໍ່ເປັນທີ່ສົງໄສແລ້ວ. ທີ່ຕັ້ງຂອງສະຫະກອນນັ້ນຖືກກຳນົດດ້ວຍຄວາມອາດສາມາດຂອງມັນນັ້ນເອງ ເຊິ່ງກໍຄືການກະຕຸ້ນຄວາມຫ້າວຫັນທາງດ້ານສັງຄົມແລະເສດຖະກິດ. ຫລັກການຕ່າງໆແບບສະຫະກອນນັ້ນສາມາດແລະຈຳເປັນຕ້ອງນຳໃຊ້ຢູ່ໃນກໍລະນີ ທີ່ຫລັກການເຫລົ່ານັ້ນບໍ່ຂັດແຍ່ງກັບຫລັກການແຫ່ງການຂະຫຍາຍຕົວຢ່າງມີແຜນການ ຂອງສັງຄົມນິຍົມ, ຫລັກການແບບສະຫະກອນສາມາດຊ່ວຍໃຫ້ມີຄວາມເປັນເຈົ້າ ຕົນເອງທາງດ້ານເສດຖະກິດຂອງພົນລະເມືອງ, ຊ່ວຍໃຫ້ການຜະລິດເປັນໄປຢ່າງເຫມາະສົມ, ຊ່ວຍໃນການດຳລົງຊີວິດປະຈຳວັນຂອງຄົນ. ດັ່ງທີ່ໄດ້ສະແດງໃຫ້ເຫັນແລ້ວນັ້ນ, ຖ້າປາສະຈາກສະຫະກອນແລ້ວກໍຈະບໍ່ສາມາດມີການເຄື່ອນໄຫວເປັນປົກະຕິຂອງສັງຄົມສັງຄົມນິຍົມໄດ້ບໍ່ສາມາດຕອບສະຫນອງຄວາມຮຽກຮ້ອງຕ້ອງການຂອງຄົນ ທາງດ້ານເສດຖະກິດສັງຄົມຢ່າງເຕັມສ່ວນແລະຢ່າງເຫມາະສົມໄດ້. ສະຫະກອນໄດ້ສະແດງໃຫ້ເຫັນວ່າມັນເປັນວິທີການທີ່ມີປະສິດທິຜົນໃນການແກ້ໄຂຂໍ້ຂັດແຍ່ງພາຍໃນ, ຂໍ້ຂັດແຍ່ງທີ່ມີຢູ່ໂດຍທຳມະຊາດເຊິ່ງເປັນລັກສະນະສະເພາະເດັ່ນຈຸດຂອງຮູບແບບການຜະລິດຂອງລັດ. ຖ້າປາສະຈາກສະຫະ

ກອນນັ້ນ, ເວົ້າລວມໃນຫລາຍກໍລະນີ ແມ່ນຍາກທີ່ຈະແນການເຄື່ອນໄຫວຂອງວິສາຫະກິດແບບທົ່ວປວງຊົນໄປໃນທາງໃດ, ຍາກທີ່ຈະກວດກາເຖິງປະສິດທິພາບຂອງການເຄື່ອນໄຫວດັ່ງກ່າວ. ໃນຄວາມໝາຍທີ່ວ່ານີ້ ສະຫະກອນແມ່ນເປັນພາຫະນະແຫ່ງການປັບປຸງຕົນເອງທີ່ມີປະສິດທິພາບທີ່ສຸດຂອງເສດຖະກິດສັງຄົມນິຍົມທັງໝົດ.

ໃນເວລາດຽວກັນ, ສະຫະກອນໃນທຸກຮູບແບບຂອງມັນເຊິ່ງລວມທັງຮູບແບບກ່ຽວກັບບັນຫາເຮືອນຢູ່, ຮູບແບບກ່ຽວກັບການສະໜອງ ແລະການໃຊ້ສອຍແລະອື່ນໆນັ້ນ ແມ່ນຮູບແບບຂອງການເປັນເຈົ້າຕົນເອງທາງດ້ານເສດຖະກິດຂອງມະຫາຊົນທີ່ມີລັກສະນະເຂົ້າເຖິງທຸກຄົນກວ່າໝູ່, ແລະດ້ວຍເຫດນັ້ນມັນຈຶ່ງເປັນເງື່ອນໄຂທີ່ຈຳເປັນແຫ່ງສຸຂະພາບຈິດຂອງສັງຄົມ. ດັ່ງນັ້ນ, ສະຫະກອນແມ່ນໜຶ່ງໃນບັນດາເງື່ອນໄຂທີ່ຈຳເປັນແຫ່ງການປົກປັກຮັກສາ ແລະຂະຫຍາຍລະບອບສັງຄົມນິຍົມ, ປັບປຸງລະບົບການພົວພັນທາງດ້ານສັງຄົມທັງໝົດ.

247 VII
ຫ້າມຈຳໜ່າຍ

# ຄຳອະທິບາຍຮູບພາບ

I. ໃນເວລາຂຽນປັ້ມ "ທຶນ" ກາກ ມາກ ຜູ້ກໍ່ຕັ້ງລັດທິກອມມູນິດວິທະຍາສາດ ໄດ້ເອົາໃຈໃສ່ແນວຄິດ ກ່ຽວກັບສະຫະກອນ ແລະການ ປະຕິບັດແນວຄິດດັ່ງກ່າວ ໃຫ້ເປັນຈິງ ຢູ່ໃນການເຄື່ອນໄຫວຂອງ ສະຫະກອນຂອງກຳມະກອນໃນຊຸມປີ ໕໐ ຂອງສະຕະວັດທີ ໑໙, ເພິ່ນຖືວ່າ ສະຫະກອນເຫລົ່ານີ້ແມ່ນໜຶ່ງໃນບັນດາຮູບການ ການອອກແຮງງານຂອງສັງຄົມໃນຂອບເຂດຂອງລະບອບ ສັງຄົມນິຍົມ ຊຶ່ງແມ່ນໄລຍະຕົ້ນຂອງລະບອບກອມມູນິດ.

2. ຊາເລຍ ຟູຣີເຢ (໑໗໗໒ - ໑໘໓໗), ນັກສັງຄົມນິຍົມໄຝ່ຝັນລອຍເມກ ຜູ້ຍິ່ງໃຫຍ່ຂອງຝະລັ່ງ. ເພິ່ນ

ໄດ້ວາດພາບກ່ຽວກັບສັງຄົມ ໃນອະນາຄົດ ໄວ້ວ່າເປັນຄືການຮ່ວມມືກັນລະຫວ່າງໜ່ວຍງານຕ່າງໆ ຊຶ່ງໃນນັ້ນຄົນເຮົາສາມາດສະແດງຄວາມສາມາດ ແລະພອນສະຫວັນຂອງຕົນໄດ້ຢ່າງເຕັມປ່ຽມ.

3. <u>ໂຣແບດ ໂອແວນ</u>(໑໗໗໑-໑໘໕໘),ນັກສັງຄົມນິຍົມໄຝ່ຝັນລອບເນກ ຜູ້ຍິ່ງໃຫຍ່ຂອງອັງກິດ. ເພື່ອປັ້ງປືນ ແລະແຜ່ຂະຫຍາຍແນວຄິດກ່ຽວກັບ ການເຕົ້າໂຮມແຮງງານແລະການຈົມໃຊ້, ເພິ່ນໄດ້ ຈັດຕັ້ງກອມມູນ ການຜະລິດ ແລະຕັ້ງຊື່ວ່າ <u>"ຄວາມກົມກຽວ ແບບໃໝ່"</u>.

4. ເຄື່ອງໝາຍຂອງສະຫະກອນແລະວິສາຫະກິດຕ່າງໆ ໃນ ຊຸມປີ ໔໐.

5. ບາດກ້າວເດີນ ບາດທຳອິດ ຂອງສະຫະກອນໃຊ້ສອຍ, ຮ້ານຄ້າສະຫະກອນທີ່ມີຊື່ວ່າ "ກອມມູນ".

6. ກຸ່ມກະເສດ-ອຸດສາຫະກຳທີ່ມີຊື່ວ່າ "ມິດສະກູ" ພອມ ຈຳໜ່າຍ ຜົນຜະລິດຂອງຕົນ ຢູ່ໃນຕະຫລາດ.

7. ເຮືອນພັກທີ່ປຸກສ້າງຂຶ້ນຈາກກ້ອນຫີນທີ່ຫຸ້ມສ່ວນກັນ, ຢູ່ ຊານເມືອງມິດສະກູ.

8. ປະຈຸບັນນີ້ ມີວິສາຫະ ກິດການຄ້າຫລາຍແຫ່ງ ທີ່ດຳເນີນວຽກງານໂດຍໃຊ້ເຄື່ອງໝາຍຫຍໍ້ ວ່າ "ໂກອອບ"(ຫຍໍ້ມາຈາກເຄຳວ່າ "ສະຫະກອນ").

9. ຫ້ອງປະຊຸມໃຫຍ່ ຂອງສະຫະ ກອນ ໃຊ້ສອຍ. ນິກສະກູ,ຫໍ ປະ ຊຸມໃຫຍ່ຂອງແຍູມແລງ,ເດືອນທັນ ວາ, ປີ ໑໙໕໔.


Будет
Памятник

# Das Kapital.

## Kritik der politischen Oekonomie.

Von

**Karl Marx.**

Erster Band.

Buch I: Der Produktionsprocess des Kapitals.

Das Recht der Uebersetzung wird vorbehalten.

**Hamburg**

Verlag von Otto Meissner.

1867.

New-York: L. W. Schmidt. 24 Barclay-Street.

I

В. Ульянов (Ленин)

# О КООПЕРАЦИИ



2



3


Р.С.Ф.С.Р.
Н.Г.С.Н.Х.
НИЖЕГОРОДСКО
БОГОРОДСКИЙ
КОЖТРЕСТ
ВСНХ
СССР
ВСЕСОЮЗНЫЙ
ТЕКСТИЛЬНЫЙ
ВТС
СИНДИКАТ
МОСКВА
С
Н Г Н Х
СТВ

4

5


РЫБНОЕ ОТДЕЛЕНИЕ
БАЛЫК



Пролетарии всех стран, соединяйтесь!

# Сельская жизнь

Газета Центрального Комитета КПСС

## ПРИЗНАТЕЛЬНОСТЬ ОТЧИЗНЫ

Торжественное собрание в Москве

ПРОЕКТ

Закон Союза Советских Социалистических Республик

## О КООПЕРАЦИИ В СССР

I. Социалистическая кооперация и ее место в экономике страны

II. Кооператив — первичное звено системы кооперации в СССР

Пролетарии всех стран, соединяйтесь!

Коммунистическая партия Советского Союза

# ПРАВДА

Орган Центрального Комитета КПСС

Газета основана 5 мая 1912 года В. И. Лениным

Сегодня публикуется проект Закона Союза Советских Социалистических Республик «О кооперации в СССР».

П Р О Е К Т

Закон Союза Советских Социалистических Республик

## О КООПЕРАЦИИ В СССР



6

7






8

9



" 28.1.2011 "

5.000 ກີບ

ບັນດາມູນຮາກ ທີ່ມີຊີວິດຊີວາ ຂອງ ລັດທິມາກ

ສຳນັກງານຂ່າວສານ ໂນໂວສະຕິ